# ປະຫວັດສາດ

## ຊັ້ນອຸດົມ 3



ກະຊວງສຶກສາທິການ
ກິລາ ແລະ ທຳມະການ

ນາງສຸວິດາ.

# ປະຫວັດສາດ

## ຊັ້ນອຸດົມ 3

13 ~~[illegible]~~ ສິງຫາ 1950 ກອງປະຊຸມໃຫຍ່ ສ້າງຕັ້ງແນວລາວ ອິດສະລະ ແລະ [illegible]

23 ສິງຫາ 1945 ວັນປະຕິວັດ [illegible]

21 ມີນາ 1946.

11 ມີນາ 1951 ກອງປະຊຸມ ແນວ [illegible]

7. ວັນທີ 20 ກໍລະກົດ 1954 [illegible] ([illegible])

22 ຕຸລາ 1957 [illegible].

27. ກໍລະກົດ 1959 ຈັບຜູ້ນຳ -23-24. ພຶດສະພາ 1960 ([illegible]).

21.11.54 [illegible] ([illegible])

6.1.56 ສ້າງຕັ້ງແນວລາວຮັກຊາດ

22.10.57 [illegible]

9.8.60 ກອງແລ [illegible] ລັດຖະປະຫານ

**ກະຊວງສຶກສາທິການ**
**ກິລາ ແລະ ທຳມະການ**

# ບົດໄຂຫົວເລື່ອງ.

ຊາດລາວ ໄດ້ຕັ້ງພູມລຳເນົາຢູ່ໃນແຫຼມອິນດູຈີນ ເຊິ່ງແຕ່ກ່ອນເອີ້ນວ່າ ແຫຼມທອງ ຫຼື ສຸວັນນະພູມ ນັ້ນເປັນເວລາຫຼາຍສະຕະວັດມາແລ້ວ. ດິນແດນແຫ່ງນີ້ ອຸດົມສົມບູນດ້ວຍຊັບພະຍາກອນທຳມະຊາດ. ປະຊາຊົນລາວ ເປັນເຊື້ອຊາດທີ່ຂະຫຍັນໝັ່ນພຽນ, ມີມູນເຊື້ອແຫ່ງການກໍ່ສ້າງ ແລະຕໍ່ສູ້ເພື່ອປົກປັກຮັກສາປະເທດຊາດ ເປັນຕົ້ນແມ່ນເຈົ້າຟ້າງຸ່ມ ວິລະກະສັດຜູ້ປີຊາສາມາດ ທີ່ໄດ້ເຕົ້າໂຮມເຂດນ້ຳແດນດິນໃຫ້ເປັນກຸ່ມ ເປັນກ້ອນອັນດຽວກັນ ແລະສະຖາປະນາອານາຈັກລາວລ້ານຊ້າງໃຫ້ສະຫງ່າລາສີ.

ປະຫວັດສາດຂອງຊາດລາວ ແມ່ນປະຫວັດສາດແຫ່ງການຕໍ່ສູ້ ທີ່ໄດ້ສືບຕໍ່ກັນມາຫຼາຍເຊັ່ນຄົນໃນພາລະກິດສ້າງກັນການບ້ານຂອງດ້ວຍເລືອດເນື້ອເຫື່ອໄຄ ແລະປົກປັກຮັກສາປິຕຸພູມຢ່າງອົງອາດກ້າຫານ. ຕົກມາຮອດສະໄໝປະຈຸບັນ, ປະຫວັດສາດລາວແມ່ນປະຫວັດສາດຂອງຊາດໜຶ່ງ ທີ່ມີພົນລະເມືອງບໍ່ຫຼາຍ, ເສດຖະກິດກໍຍັງຫຼ້າຫຼັງ, ແຕ່ຫາກໄດ້ຄຽງບ່າຄຽງໄຫຼ່ກັບປະເທດອ້າຍນ້ອງ ທີ່ຮ່ວມຊາຕາກຳອັນດຽວກັນ, ຕີເອົາໄຊຊະນະຈັກກະພັດຜູ້ຮັ່ງມີເຂັ້ມແຂງກວ່າໝູ່ໃນໂລກທຶນນິຍົມ, ທັງເປັນຈັກກະພັດຜູ້ໂຫດຮ້າຍສາມານ, ເລິກແລບແນບນຽນຢ່າງບໍ່ເຄີຍມີໃນປະຫວັດສາດ.

ປະເທດລາວໃນລະບອບສັກດີນານັ້ນ ມີກະສັດຫຼາຍອົງທີ່ໄດ້ນຳຂະບວນປະຊາຊົນ ກໍ່ກູ້ຂະໜານນາມວ່າ ວິລະກະສັດ ເຊັ່ນ ເຈົ້າຟ້າງຸ່ມ, ເຈົ້າໄຊເສດຖາທິລາດ, ເຈົ້າສຸລິຍະວົງສາ ແລະເຈົ້າອະນຸວົງ ເປັນຕົ້ນ, ມີຫຼາຍອົງກໍເປັນສັກດີນາທີ່ອອນແອ ຈົນເຮັດໃຫ້ບ້ານເມືອງຫຼົ້ມຈົມ, ແຕກເປັນພັກເປັນພວກ ເຊິ່ງເປັນເຫດໃຫ້ສັກດີນາ ແລະຈັກກະພັດຕ່າງດ້າວເຂົ້າມາຍຶດຄອງ. ພາຍຫຼັງການສິ້ນພະຊົນຂອງເຈົ້າສຸລິຍະວົງສາ ໃນປີ ຄ.ສ. 1694 ແລ້ວ, ກຸ່ມຕ່າງໆໃນວົງສັກດີນາໄດ້ຍາດຊິງກັນຂຶ້ນ ຄອງລາຊະບັນລັງ ເຮັດໃຫ້ບ້ານເມືອງມີຄວາມວຸ້ນວາຍ. ມາຮອດປີ ຄ.ສ. 1778 ສັກດີນາສະຫຍາມ (ໄທ) ກໍໄດ້ເຂົ້າມາຍຶດຄອງ. ຕໍ່ມາ ໃນປີ ຄ.ສ. 1825 ເຈົ້າອະນຸ ເຈົ້າ

ຊີວິດວຽງຈັນໄດ້ນຳພາປະຊາຊົນລາວລຸກຂຶ້ນຕ້ານສັກດີນາສະຫຍາມ. ເຖິງແມ່ນບໍ່ໄດ້ຮັບໄຊຊະນະກໍຕາມ, ການຕໍ່ສູ້ຄັ້ງນັ້ນ ກໍໄດ້ເປັນບົດຮຽນສະແດງໃຫ້ເຫັນຄວາມ ອົງອາດກ້າຫານ ແລະບໍ່ຍອມຈຳນົນ. ແຕ່ນັ້ນມາ ອານາຈັກວຽງຈັນ ກໍຕົກເປັນເມືອງຂຶ້ນຂອງສັກດີນາສະຫຍາມ. ຕໍ່ຈາກນັ້ນ ເມືອງພວນກໍຖືກສັກດີນາຫວຽດນາມ ແຫ່ງລາຊະວົງຫງວຽນເຂົ້າມາຍຶດຄອງ ໂດຍເອົາໂຮມເຂົ້າກັບແຂວງທັນຮົວ ຂອງຫວຽດນາມ ແລະປ່ຽນຊື່ວ່າ ຕຸ້ນນິນ, ພ້ອມກັນນັ້ນ ອານາຈັກຈຳປາສັກກໍຕົກເປັນເມືອງຂຶ້ນຂອງສັກດີນາສະຫຍາມ. ເຫດການເປັນເຊັ່ນນັ້ນ ໄດ້ເປັນບົດຮຽນອັນເຈັບແສບທີ່ສຸດ ໃນປະຫວັດສາດການຕໍ່ສູ້ຂອງຊາດລາວ. ໃນທ້າຍສະຕະວັດທີ 19 ຫຼັງຈາກຍຶດໄດ້ ປະເທດຫວຽດນາມ ແລະກຳປູເຈຍແລ້ວ ພວກລ່າເມືອງຂຶ້ນຝະລັ່ງຜູ້ມີຄວາມໂລບມາກໂລພາກໍ່ຢາກຍຶດເອົາເຂດແຄວ້ນທີ່ຢູ່ລຽບແຄມແມ່ນ້ຳຂອງນຳອີກ. ໃນປີ ຄ.ສ. 1887, ພວກເຂົາກໍໄດ້ແຕ່ງໃຫ້ ໂອກຸດ ປາວີ ມາເປັນອຸປະທູດຢູ່ເມືອງຫຼວງພະບາງ ເພື່ອສອດແນມເບິ່ງສະພາບດິນແດນ ແລະເຫດການຂອງປະເທດລາວ.

ໃນສະໄໝນັ້ນຈັກກະພັດໃຫຍ່ທັງສອງໂຕຄື: ຈັກກະພັດຝະລັ່ງ ແລະ ຈັກກະພັດອັງກິດໄດ້ແຍ່ງຍາດດິນແດນເມືອງຂຶ້ນກັນໃນທົ່ວໂລກ. ບົ່ນທາຂະຫຍາຍເມືອງຂຶ້ນມາສູ່ອິນດູຈີນ, ພວກເຂົາໄດ້ມີການຂັດແຍ້ງກັນເຖິງຂັ້ນປະທະກັນຢູ່ປາກແມ່ນ້ຳເຈົ້າພະຍາເມືອງສະໝຸດປາການປະເທດໄທ . ໃນການພົບປະເຈລະຈາກັນລະຫວ່າງສະກອດ ຜູ້ຕາງໜ້າອັງກິດແລະປາວີຜູ້ຕາງໜ້າຝະລັ່ງ, ພວກເຂົາກໍຕົກລົງເອົາແມ່ນ້ຳຂອງເປັນ ເຂດແດນ, ດິນລາວຝັ່ງຊ້າຍ ໃຫ້ຂຶ້ນກັບຝະລັ່ງ, ສ່ວນດິນແດນລາວທາງຝັ່ງຂວານັ້ນໃຫ້ຂຶ້ນກັບສະຫຍາມ ໂດຍຢູ່ພາຍໃຕ້ອາລັກຂາຂອງອັງກິດ; ແຕ່ວ່າຝ່າຍສະຫຍາມບໍ່ເຫັນດີນຳການຕົກລົງນັ້ນ, ເມື່ອເປັນດັ່ງນັ້ນ ຈັກກະພັດຝະລັ່ງຈຶ່ງໄດ້ໃຊ້ກຳລັງອາວຸດນາບຂູ່ເພື່ອໃຫ້ພວກກຳອຳນາດສະຫຍາມຕ້ອງເຊັນສັນຍາບາງກອກໃນວັນທີ 3 ຕຸລາ ( 10 ) 1893 ເພື່ອຕັດເອົາດິນແດນຢູ່ຝັ່ງຊ້າຍແມ່ນ້ຳຂອງມອບໃຫ້ແກ່ຝະລັ່ງ. ນັບແຕ່ເວລານັ້ນເປັນຕົ້ນມາ ດິນແດນລາວຝັ່ງຊ້າຍກໍຕົກຢູ່ໃຕ້ແອກເມືອງຂຶ້ນຂອງຈັກກະພັດຝະລັ່ງ.

ຫຼັງຈາກ ຈັກກະພັດຝະລັ່ງໄດ້ເຂົ້າມາຄອບຄຸມປະເທດລາວແລ້ວ, ພວກເຂົາກໍໄດ້ປະຕິບັດນະໂຍບາຍແບ່ງແຍກ, ປາບປາມ, ກົດຂີ່ຂູດຮີດ ເຮັດໃຫ້ປະຊາຊົນລາວ ມີຄວາມທຸກຍາກລຳບາກ ໂງ່ຈ້າຫຼ້າຫຼັງ, ສະພາບການບ້ານເມືອງເປັນແນວນັ້ນໄດ້ເຮັດ

ໃຫ້ປະຊາຊົນຜູ້ມີນ້ຳໃຈຮັກຊາດ, ຮັກຄວາມເປັນເອກະລາດມີຄວາມຄຽດແຄ້ນເຫຼືອ ທີ່ສຸດ ພາກັນລຸກຂຶ້ນຈັບອາວຸດຕໍ່ສູ້ຕ້ານຝະລັ່ງ ນັບເປັນຫຼາຍຂະບວນ, ຂະບວນຕໍ່ສູ້ທີ່ເດັ່ນກວ່າໝູ່ໝົດແມ່ນຂະບວນພໍ່ກະດວດ ໄດ້ລະເບີດຂຶ້ນຢູ່ສະຫວັນນະເຂດໃນປີ ຄ.ສ. 1901, ຂະບວນອົງແກ້ວ ອົງກົມມະດຳຢູ່ພາກໃຕ້, ຂະບວນເຈົ້າຟ້າປາໄຈ ຢູ່ພາກເໜືອ (1918 - 1922).

ເຖິງວ່າ ຂະບວນຕໍ່ຕ້ານເຫຼົ່ານັ້ນ ໄດ້ລະເບີດຂຶ້ນຢ່າງອົງອາດກ້າຫານຢູ່ທຸກທົ່ວທຸກແຫ່ງກໍ່ຕາມ, ແຕ່ຍ້ອນຂາດການນຳພາອັນຖືກຕ້ອງ ແລະຄວາມສາມັກຄີຢ່າງກວ້າງຂວາງກັບບັນດາຊົນຊາດ ຈຶ່ງເຮັດໃຫ້ຂະບວນດັ່ງກ່າວນັ້ນບໍ່ໄດ້ຮັບໄຊຊະນະ. ເຖິງຢ່າງໃດກໍ່ຕາມ, ຂະບວນການຕໍ່ສູ້ເຫຼົ່ານັ້ນໄດ້ກາຍເປັນມູນເຊື້ອຮັກຊາດ, ຮັກຄວາມເປັນເອກະລາດ ແລະໄດ້ຖືກຈາລຶກໄວ້ໃນປະຫວັດສາດການຕໍ່ສູ້ອັນພິລະອາດຫານຂອງຊາດລາວເຮົາ.

ຕົກມາຮອດປີ ຄ.ສ. 1930, ລັດທິ ມາກ-ເລນິນ ໄດ້ແຜ່ຂະຫຍາຍເຂົ້າມາອິນດີຈີນ, ພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນ, ປະຊາຊົນລາວ, ຫວຽດນາມ ແລະ ກຳປູເຈຍໄດ້ສາມັກຄີກັນລຸກຂຶ້ນຕໍ່ສູ້ກັບພວກລ່າເມືອງຂຶ້ນຝະລັ່ງ ພາຍໃຕ້ການນຳພາຂອງພັກ.

ໃນປີ ຄ.ສ. 1945, ພວກຟາດຊິດຍີ່ປຸ່ນ ໄດ້ຍົກທັບເຂົ້າມາອິນດູຈີນ, ປະເທດລາວກໍ່ໄດ້ຕົກຢູ່ພາຍໃຕ້ແອກຄອບຄອງທັງສອງຄື: ຝະລັ່ງແລະຍີ່ປຸ່ນ. ຕະຫຼອດໄລຍະທີ່ພວກຟາດຊິດຍີ່ປຸ່ນເຂົ້າມາຄອບຄອງລາວ, ປະຊາຊົນລາວ ໄດ້ດຳເນີນການຕໍ່ສູ້ ເພື່ອກອບກູ້ເອົາເອກະລາດຂອງຕົນ.

ໃນເວລານັ້ນ ໄຊຊະນະຂອງກອງທັບແດງໂຊວຽດຕໍ່ພວກຟາດຊິດເຢຍລະມັນແລະຜົນສຳເລັດຂອງການປະຕິວັດຫວຽດນາມໃນເດືອນ ສິງຫາ 1945, ໄດ້ສ້າງເງື່ອນໄຂອັນສະດວກໃຫ້ປະຊາຊົນລາວລຸກຮືຂຶ້ນຍຶດອຳນາດໃນວັນທີ 23 ສິງຫາ 1945, ຈັດຕັ້ງລັດຖະບານລາວອິດສະຫຼະ ແລະປະກາດຄວາມເປັນເອກະລາດຂອງຕົນຂຶ້ນໃນວັນທີ 12 ຕຸລາ 1945. ການລຸກຮືຂຶ້ນຍຶດອຳນາດ ແລະການປະກາດເອກະລາດ ໃນເດືອນຕຸລາ 1954 ໄດ້ມີຄວາມໝາຍສຳຄັນໃນທາງປະຫວັດສາດ, ເພາະມັນໄດ້ຂະຫຍາຍ-ຈິດໃຈ ແລະຄວາມຮັກຊາດຂອງປະຊາຊົນລາວເຮົາ.

ໂດຍຍອມປະລະກົມອຸບາຍທີ່ຫວັງເອົາລາວເປັນເມືອງຂຶ້ນ, ສວຍໂອກາດໃນເວ
ລາທີ່ພວກຟາດຊິດຍີ່ປຸ່ນຍອມຈຳນົນຕໍ່ກອງທັບສຳພັນທະມິດ, ພວກລາເມືອງຂຶ້ນ ຝະລັ່ງ
ໄດ້ກັບມາຮຸກຮານລາວອີກເປັນເທື່ອທີສອງ. ປະຊາຊົນລາວ ພາຍໃຕ້ການນຳພາຂອງ
ພັກກອມມູນິດອິນດູຈີນ ໄດ້ດຳເນີນການຕໍ່ສູ້ຕ້ານຄືນຢູ່ທຸກຫົນທຸກແຫ່ງ. ການຕໍ່ສູ້ ໄດ້ຂະ
ຫຍາຍຕົວຢ່າງໄວວາແລະກວ້າງຂວາງ. ໃນວັນທີ 13 ສິງຫາ 1950. ໄດ້ມີການ
ໄຂກອງປະຊຸມໃຫຍ່ແນວລາວຕໍ່ຕ້ານ ເຊິ່ງປະກອບດ້ວຍຜູ້ແທນຂອງບັນດາຊົນຊາດແລະ
ຊັ້ນຄົນທີ່ມີແນວຄິດຮັກຊາດ. ກອງປະຊຸມໄດ້ຜ່ານໂຄງການໆເມືອງ 12 ຂໍ້ ແນໃສ່
ການຕໍ່ສູ້ກູ້ຊາດ. ນັບແຕ່ປີ ຄ.ສ. 1950 ເປັນຕົ້ນມາ, ກອງທັບລາວຕໍ່ຕ້ານໄດ້ເປີດ
ການບຸກໂຈມຕີດັບສູນສັດຕູຢູ່ຫຼາຍໆບ່ອນ, ສົງຄາມກອງຫຼອນໄດ້ດຳເນີນໄປຢ່າງໄດ້ຜົນ
ດີໃຫ້ແກ່ການປະຕິວັດ.

ການຕໍ່ສູ້ຂອງປະຊາຊົນລາວ ໄດ້ຕິດພັນກັບການຕໍ່ສູ້ຂອງປະຊາຊົນອິນດູຈີນ ຄື :
ຫວຽດນາມ ແລະກຳປູເຈຍ. ໄຊຊະນະຂອງປະຊາຊົນຫວຽດນາມໃນບັ້ນຮົບສຸດທ້າຍທີ່
ດຽນບຽນຟູ ປີ ຄ.ສ. 1954 ໄດ້ບັງຄັບໃຫ້ຈັກກະພັດຝະລັ່ງຈຳຕ້ອງຍອມເຊັນສັນຍາ
ເຈນີແນວໃນວັນທີ 20 ກໍລະກົດ 1954 ເພື່ອຮັບຮູ້ຄວາມເປັນເອກະລາດ ຂອງສາມ
ຊາດອິນດູຈີນ. ຫຼັງຈາກນັ້ນ ຈັກກະພັດອາເມລິກາ ກໍໄດ້ໂດດເຂົ້າມາແທນທີ່ຢ່າງບັງ-
ອາດເປີດເຜີຍ ເພື່ອຫວັງເອົາລາວເປັນເມືອງຂຶ້ນແບບໃໝ່. ເພື່ອທັບມ້າງ ກົນອຸບາຍ
ຂອງຈັກກະພັດອາເມລິກາ ທີ່ຫວັງເອົາລາວເປັນເມືອງຂຶ້ນນັ້ນ, ພັກປະຊາຊົນປະຕິວັດ
ລາວໄດ້ຍົກສູງຄັນທຸງຊາດປະຊາທິປະໄຕ, ນຳພາເອົາໄຊຊະນະໃນການຕໍ່ສູ້ກູ້ຊາດ.
ໃນວັນທີ 6 ມັງກອນ 1956, ແນວລາວຮັກຊາດໄດ້ຮັບການສ້າງຕັ້ງຂຶ້ນ ແລະວາງ
ແຜນນະໂຍບາຍທົ່ວປວງຊົນ, ສາມັກຄີກັນລຸກຂຶ້ນຕີຈັກກະພັດອາເມລິກາ ແລະລູກມື -
ຂາຍຊາດຂອງມັນໃຫ້ປະລາໄຊໄປ ເຮັດໃຫ້ປະເທດລາວກາຍເປັນປະເທດສັນຕິພາບ,
ເປັນກາງ, ເອກະລາດ, ປະຊາທິປະໄຕ, ເອກະພາບແລະວັດທະນາຖາວອນ.

ເພື່ອປະຕິບັດຕາມແຜນນະໂຍບາຍນັ້ນ ກຳລັງປະຕິວັດລາວແມ່ນຍຶດໝັ້ນໃນການເຈ
ລະຈາ ແລະນຳພາປະຊາຊົນໃນເຂດທີ່ພົ້ນສອງແຂວງ ຕອບໂຕ້ການບຸກໂຈມຕີຂອງທະ
ຫານຫຸ່ນລູກມືອາເມລິກາ ພ້ອມກັນນັ້ນກໍໄດ້ປຸກລະດົມມະຫາຊົນໃນເຂດຄວບຄຸມຊົ່ວຄາວ
ຂອງອຳນາດການປົກຄອງວຽງຈັນໃຫ້ລຸກຂຶ້ນຕໍ່ສູ້ທວງໃຫ້ມີການເຈລະຈາ ສ້າງສັນຕິ

ພາບຢູ່ລາວ.

ຕະຫຼອດໄລຍະສາມປີ ກຳລັງປະຕິວັດສາມາດປົກປັກຮັກສາເຂດທີ່ໝັ້ນໄວ້ໄດ້ ແລະຂະຫຍາຍຂະບວນການຕໍ່ສູ້ອອກ ເພື່ອເຮັດໃຫ້ປະເທດລາວມີສັນຕິພາບ, ບັງຄັບໃຫ້ຈັກກະພັດອາເມລິກາ ແລະລູກມືຍອມເຊັນສັນຍາວຽງຈັນ ເພື່ອສ້າງຕັ້ງລັດຖະບານປະສົມຂຶ້ນ ໃນປີ ຄ.ສ. 1957, ໂດຍມີຝ່າຍແນວລາວຮັກຊາດເຂົ້າຮ່ວມ. ເຖິງຢ່າງໃດກໍ່ຕາມ, ຈັກກະພັດອາເມລິກາ ແລະລູກມືໄດ້ຫາທຸກວິທີທຳລາຍສັນຍາສັນຕິພາບ, ໃນທີ່ສຸດພວກເຂົາກໍ່ໄດ້ໂຄ່ນລົ້ມລັດຖະບານປະສົມ ແລະຈັບກຸມຜູ້ນຳແນວລາວຮັກຊາດ. ຕໍ່ໜ້າສະພາບການດັ່ງກ່າວນັ້ນ ພັກປະຊາຊົນລາວໄດ້ນຳພາປະຊາຊົນລຸກຂຶ້ນຕໍ່ສູ້. ໄຊຊະນະຢັ່ນຮິບຫຼວງນ້ຳທາ ໃນປີ ຄ.ສ. 1962 ໄດ້ບັງຄັບໃຫ້ອາເມລິກາ ແລະ ລູກມືຈຳຕ້ອງເຂົ້າຮ່ວມກອງປະຊຸມເຊີແນວ ເພື່ອສ້າງສັນຕິພາບຢູ່ລາວ ແລະສ້າງຕັ້ງ ລັດຖະບານປະສົມອີກ. ຫຼັງຈາກນັ້ນ, ອາເມລິກາ ແລະລູກມືໄດ້ອອກແຮງຂັດຂວາງການດຳເນີນງານຂອງລັດຖະບານ, ປາບປາມບຸກຄົນຜູ້ມີຄວາມຮັກຊາດ ເຮັດໃຫ້ຜູ້ນຳ ແນວລາວຮັກຊາດຈຳຕ້ອງກັບຄືນໄປເຂດປົດປ່ອຍ ເພື່ອທັນທິດຕໍ່ສູ້ຄືນ. ການຕໍ່ສູ້ໄດ້ດຳເນີນໄປຈົນຮອດວັນທີ 21 ກຸມພາ 1973 ຈຶ່ງໄດ້ເຊັນສັນຍາກັນອີກເທື່ອທີສາມທີ່ວຽງຈັນ. ສັນຍາວຽງຈັນໄດ້ເປັນບ່ອນອີງໃຫ້ຂະບວນປະຕິວັດລຸກຂຶ້ນຍຶດອຳນາດໄດ້ສຳເລັດໃນວັນທີ 23 ສິງຫາ 1975. ອຳນາດການປົກຄອງປະຕິການໃນທົ່ວປະເທດ ກໍ່ຖືກໂຄ່ນລົ້ມຢ່າງສົ້ນເຊີງ ແລະຕະຫຼອດການ. ມາໃນວັນທີ 1 ທັນວາ 1975 ບັນດາຜູ້ແທນ ປະຊາຊົນທົ່ວປະເທດ ໄດ້ໄຂກອງປະຊຸມໃຫຍ່ຢູ່ທີ່ນະຄອນຫຼວງວຽງຈັນ, ມື້ຕໍ່ມາ ຄືວັນທີ 2 ທັນວາ 1975 ກໍ່ໄດ້ປະກາດເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ຜົນສຳເລັດຂອງກອງປະຊຸມດັ່ງກ່າວນັ້ນ ແມ່ນຂີດໝາຍທາງປະຫວັດສາດຂອງຊາດລາວ ເຮັດໃຫ້ປະເທດລາວຫຼຸດພົ້ນອອກຈາກລະບອບສັກດີນາ, ລ່າເມືອງຂຶ້ນ, ກາຍເປັນປະເທດເອກະລາດ ປະຊາທິປະໄຕຢ່າງແທ້ຈິງ. ວັນທີ 2 ທັນວາ ໄດ້ໄຂໃບໜ້າປະຫວັດສາດຊາດລາວໃໝ່ ເຊິ່ງເປັນປະຫວັດສາດແຫ່ງຄວາມຮຸ່ງເຮືອງ ເຫຼືອງເຫຼື້ອມ ແລະບໍ່ເຄີຍມີມາໃນເມື່ອກ່ອນ.

# ສາລະບານ


| ບົດ | | | ໜ້າ |
|---|---|---|---|
| | | ບົດໄຂຫົວເລື່ອງ | ກ |
| ບົດທີ | ໑ | ສັງຄົມລາວກ່ອນຜະລັ່ງຮຸກຮານ | ໑ |
| -"- | ໒ | ພວກລ່າເມືອງຂຶ້ນຜະລັ່ງເຂົ້າມາຮຸກຮານລາວ (ຄ.ສ. ໑໘໙໓) | ໗ |
| -"- | ໓ | ນະໂຍບາຍຂອງຈັກກະພັດຜະລັ່ງຢູ່ລາວ | ໑໐ |
| -"- | ໔ | ຂະບວນການຕໍ່ສູ້ປະກອບອາວຸດຂອງປະຊາຊົນລາວຕ້ານຜະລັ່ງ | ໑໕ |
| -"- | ໕ | ການສ້າງຕັ້ງພັກກອມມູນິດອິນດູຈີນ | ໒໒ |
| -"- | ໖ | ການລຸກຮື້ຂຶ້ນຍຶດອຳນາດຂອງປະຊາຊົນລາວໃນປີ ຄ.ສ. ໑໙໔໕ | ໒໗ |
| -"- | ໗ | ພວກລ່າເມືອງຂຶ້ນຜະລັ່ງກັບມາຮຸກຮານລາວເທື່ອທີສອງ | ໓໐ |
| -"- | ໘ | ການສ້າງຕັ້ງແນວລາວອິດສະຫຼະ ແລະລັດຖະບານລາວຕໍ່ຕ້ານ | ໓໔ |
| -"- | ໙ | ກອງປະຊຸມເຈີແນວ ປີ ໑໙໕໔ ກ່ຽວກັບການສ້າງສັນຕິພາບຢູ່ອິນດູຈີນ | ໓໗ |
| -"- | ໑໐ | ການແຊກແຊງລາວຂອງຈັກກະພັດອາເມລິກາ ແລະການຕໍ່ສູ້ຂອງ ປະຊາຊົນລາວ ແຕ່ປີ ໑໙໕໔ - ໕໙ | ໔໔ |
| -"- | ໑໑ | ຫັນທິດການຕໍ່ສູ້ສົມທົບການທະຫານ ແລະການເມືອງ ໑໙໕໙ - ໑໙໖໒ | ໔໙ |
| -"- | ໑໒ | ການຕໍ່ສູ້ຂອງປະຊາຊົນລາວແຕ່ປີ ໑໙໖໒ ເຖິງວັນສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວັນທີ ໒ ທັນວາ ໑໙໗໕. | ໕໔ |

ບົດທີ 1

# ສັງຄົມລາວກ່ອນຝະລັ່ງຮຸກຮານ

## 1. ສະໄໝອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງ ( ຄ. ສ. 1638–1695 ).

ອານາຈັກລາວລ້ານຊ້າງໄດ້ດຳລົງຄົງຕົວເປັນເອກະລາດ, ເອກະພາບ ແລະ ເຂັ້ມແຂງມາເປັນເວລາຫຼາຍຮ້ອຍປີ ຈົນມາຮອດສະໄໝເຈົ້າສຸລິຍະວົງສາ ເຊິ່ງເປັນສະໄໝທີ່ສັງຄົມລາວ ໄດ້ກ້າວຂຶ້ນສູ່ລະດັບສູງ. ໃນລາຊະການເຈົ້າສຸລິຍະວົງສາ, ອານາຈັກລ້ານຊ້າງໄດ້ມີຄວາມສະຫງົບ, ຮຸ່ງເຮືອງ ເຫຼືອງເຫຼື້ອມ ຈົນລືຊາຜາກົດໄປທົ່ວທຸກທິບແຫ່ງ.

ທາງດ້ານການເມືອງ, ເຈົ້າສຸລິຍະວົງສາເປັນເຈົ້າແຜ່ນດິນທີ່ມີອຳນາດສູງສຸດ, ປະຕິບັດຕາມລະບຽບກົດໝາຍທີ່ຕົນວາງອອກຢ່າງເຄັ່ງຄັດ ແລະ ເດັດຂາດ. ອານາຈັກລ້ານຊ້າງໃນສະໄໝນັ້ນ ມີອານາເຂດກວ້າງຂວາງ, ທາງເໜືອແມ່ນເຂດສິບສອງພັນນາ, ທາງໃຕ້ຮອດສຳໂບກ, ທາງຟາກຕາເວັນອອກກໍ່ເອົາສາຍພູລ້ອງນ້ຳດຳ ເຂດສິບສອງຈຸໄທ, ສາຍພູຫຼວງ, ໄມ້ລົ່ມແປ່ງ ແລະ ຫຼັກເກນທີ່ວ່າຢູ່ເຂດໃດທີ່ມີປະຊາຊົນຢູ່ເຮືອນມີຮ້ານ, ກ້ວານມີເສົານົມ ແມ່ນໃຫ້ຂຶ້ນກັບພະເຈົ້າແຜ່ນດິນລ້ານຊ້າງ, ທາງຟາກຕາເວັນຕົກກໍ່ເອົາສາຍພູດົງພະຍາໄຟ ແລະສາຍພູເພັດສະບູນ.

ທາງດ້ານການພົວພັນລະຫວ່າງຊາດ ເນື່ອງຈາກວ່າດິນແດນຂອງອານາຈັກລ້ານຊ້າງມີຄວາມອຸດົມສົມບູນດ້ວຍຊັບພະຍາກອນທຳມະຊາດທີ່ມີລາຄາແພງໃນຕະຫຼາດເອີຣົບ ເຊັ່ນ: ຄັ່ງ, ຍານ, ພາກແພ່ງ, ເຄື່ອງເທດ ... ຈຶ່ງເຮັດໃຫ້ພວກຊາວຕາເວັນຕົກມີຄວາມສົນໃຈ ແລະ ເຂົ້າມາພົວພັນຄ້າຂາຍ ໂດຍໃຊ້ສາສະໜາ ເປັນສາກບັງໜ້າ.

ໃນປີ ຄ.ສ. 1630 ຄຸນພໍ່ຊົງມາລີ ເລອີຊາ ຊາວອີຕາລີ ໄດ້ມາຢ້ຽມຢາມວຽງຈັນແລ້ວຂ້າມໄປປະເທດອານາມ ໂດຍທາງນ້ຳຫີນບູນແຂວງຄຳມ່ວນ. ໃນປີ ຄ.ສ. 1641 ເຈົ້າສຸລິຍະວົງສາໄດ້ຕ້ອນຮັບການເຂົ້າເຝົ້າຂອງວັນວຸດສະຕົບ ຜູ້ເຊິ່ງກໍ່ສານ ແລະ ເຄື່ອງບັນນາການຂອງທານ ຜູ້ສຳເລັດລາຊະການຂອງປະເທດໂຮນລັງປະຈຳເມືອງບັດຕາເວຍ ປະເທດອິນໂດເນເຊຍ. ພິທີຕ້ອນຮັບທູດດັ່ງກ່າວ ໄດ້ຈັດຂຶ້ນຢ່າງໃຫຍ່ໂຕມະໂຫລານທີ່ເດີ່ນພະທາດຫຼວງ.

ທາງດ້ານການປົກຄອງພາຍໃນ, ເຈົ້າແຜ່ນດິນເປັນຜູ້ມີອຳນາດສູງສຸດຢູ່ພາຍໃນປະເທດ,ຮອງລົງມາແມ່ນລາຊະຕະກູນທັງສາມ ຄື: ມະຫາອຸປະຮາດ, ເຈົ້າລາຊະວົງ ແລະ ເຈົ້າລາຊະບຸດ. ເສນາບໍດີບໍລິຫານປະເທດມີສາມຕຳແໜ່ງ ຄື ອັກຄະມະຫາເສນາບໍດີຝ່າຍຂວາ ເຮັດໜ້າທີ່ປ້ອງກັນຊາດ, ອັກຄະມະຫາເສນາບໍດີຝ່າຍຊ້າຍ ເຮັດໜ້າທີ່ຝ່າຍປົກຄອງ ສ່ວນເສນາບໍດີຝ່າຍກາງ ເຮັດໜ້າທີ່ຕຸລາ–

ການ. ທີ່ອານາຈັກລາວລ້ານຊ້າງ ແບ່ງອອກເປັນເຈັດຫົວເມືອງໃຫຍ່ ຄື 1. ເມືອງຂວາ (ຜົ້ງສາລີ), 2. ເມືອງຊ້າຍ (ຊຽງຄານ), 3. ເມືອງຫຼວງພະບາງ, 4. ເມືອງຮ້ອຍເອັດ, 5. ເມືອງຈຳປາສັກ, 6. ເມືອງທ່າແຂກ ແລະ 7. ເມືອງວຽງແກ (ຈັງຫວັດສຸລິນ ປະເທດໄທປະຈຸບັນ). ນອກຈາກນັ້ນ ຍັງມີຫົວເມືອງສ່ວຍອີກ 4 ເມືອງ ຄື ສິບສອງພັນນາລື້ (ຊຽງຮຸ່ງ), ສິບສອງຈຸໄທ (ເມືອງແຖງ), ເມືອງນານ ແລະເມືອງພວນ.

ທາງດ້ານເສດຖະກິດ, ສະໄໝເຈົ້າສຸລິຍະວົງສາ ຂະແໜງເສດຖະກິດທີ່ສຳຄັນແມ່ນການ ກະສິກຳ. ດັ່ງນັ້ນ ອາຊີບທີ່ເປັນຫຼັກແຫຼ່ງຂອງປະຊາຊົນແມ່ນການເຮັດນາ, ເຮັດໄຮ່, ເຮັດສວນ, ຫາປາ ແລະລ້ຽງສັດ. ວຽກງານຫັດຖະກຳ ກໍ່ເປັນຂະແໜງໜຶ່ງທີ່ຂະຫຍາຍຫຼາຍໃນສະໄໝນັ້ນ ເຊັ່ນ ການເຮັດເຄື່ອງປັ້ນດິນເຜົາ, ຫຼອມເຫຼັກ, ຫຼອມທອງ, ຈັກສານ, ຕ່ຳແພນແພ ແລະລ້ຽງມ້ອນ-ສາວໄໝ. ການຄ້າໃນສະໄໝນັ້ນ ກໍ່ຈະເລີນສົມຄວນ ມີທັງການຄ້າພາຍໃນ ແລະພາຍນອກ. ສິນຄ້າສຳຄັນທີ່ສົ່ງໄປຂາຍນອກປະເທດມີຄື ຄັ່ງ, ຢານ, ໝາກແພງ, ແພໄໝ, ງາຊ້າງ... ພໍ່ຄ້າລາວທີ່ມີຊື່ສຽງ ເຊັ່ນ ກວານເມືອງທິບ ໄປຄ້າຂາຍທາງທະເລ ຈົນຮອດເມືອງປັດຕາເວຍ ( ປະເທດອິນໂດເນເຊຍ ).

ໃນລາຊະການເຈົ້າສຸລິຍະວົງສາ ເປັນສະໄໝທີ່ພຸດທະສາສະໜາ ແລະວັນນະກຳມີຄວາມຈະ-ເລີນຮຸ່ງເຮືອງທີ່ສຸດ. ທຸກໆປີກໍ່ໄດ້ມີພະສົງຈາກປະເທດສະຫຍາມ ແລະກຳປູເຈຍເຂົ້າມາສຶກສາ ຢູ່ວຽງຈັນເປັນຈຳນວນຫຼວງຫຼາຍ. ທົ່ວນະຄອນຫຼວງ ເຕັມໄປດ້ວຍວັດວາອາຣາມ, ທາດ, ເຈດີທີ່ຮຸ່ງເຮືອງເຫຼືອງເຫຼື້ອມ. ໄປພ້ອມໆກັນກັບການຂະຫຍາຍການສຶກສາ, ສິນລະປະ ວັນນະກຳ ກໍ່ໄດ້ຂະຫຍາຍຢ່າງກວ້າງຂວາງ ຈົນພາກົດມີນັກກະວີຫຼາຍຄົນ ເຊັ່ນ ທ້າວປາງຄຳ ເປັນຕົ້ນ. ບົດວັນນະກຳທີ່ລືຊື່ ຄື ສັງສິນໄຊ, ສຽວສະຫວາດ ກໍ່ພາກົດຂຶ້ນໃນສະໄໝນັ້ນ.

2. ສະໄໝສັກດີນາລາວລ້ານຊ້າງເສື່ອມ.

ເມື່ອເຈົ້າສຸລິຍະວົງສາສິ້ນພະຊົນໃນປີ ຄ.ສ. 1695 ແລ້ວ ບ້ານເມືອງເກີດມີຄວາມ ວຸ້ນ-ວາຍຂຶ້ນ ຍ້ອນການຍາດຊີງກັນຂຶ້ນຄອງລາຊະບັນລັງ ລະຫວ່າງພວກເສນາອາມາດຊັ້ນຜູ້ໃຫຍ່ ດ້ວຍກັນ. ພະຍາຫຼວງເມືອງຈັນ ໄດ້ສວຍໂອກາດຂຶ້ນກຳອຳນາດເປັນເຈົ້າແຜ່ນດິນວຽງຈັນໃນປີ ຄ.ສ. 1695. ຫົກເດືອນຕໍ່ມາ ເຈົ້າອົງຫຼໍ່ ຫຼານເຈົ້າສຸລິຍະວົງສາ ກໍ່ຍົກທັບມາຕີເອົາວຽງຈັນ ແລ້ວຈັບຕົວພະຍາຫຼວງເມືອງຈັນມາປະຫານຊີວິດໃນປີ ຄ.ສ. 1698 ແລະກໍ່ປະກາດຕົນເປັນເຈົ້າແຜ່ນດິນວຽງຈັນ. ຢູ່ມາບໍ່ດົນ, ເຈົ້າໄຊອົງເວ້ ລູກຊາຍຂອງເຈົ້າຊົມພູ ທີ່ຖືກເນລະເທດໄປຢູ່ເມືອງເຫວ້-

ໃນເມື່ອກ່ອນນັ້ນ ກໍໄດ້ຍົກທັບມາຕີເອົາວຽງຈັນ ແລະຕັ້ງຕົນຂຶ້ນເປັນເຈົ້າແຜ່ນດິນວຽງຈັນ ແລ້ວສົ່ງເຈົ້າອິງລອງ ຜູ້ເປັນນ້ອງຊາຍ ໃຫ້ໄປຄອງນະຄອນຫຼວງພະບາງ. ສ່ວນເຈົ້າກິ່ງກິດສະລາດ ແລະເຈົ້າອິນທະໂສມ ຜູ້ເປັນຫຼານທີ່ໄປລີ້ໄພຢູ່ເມືອງຫຼ້າ ເມືອງພົງ ເຂດສິບສອງພັນນາ ກໍໄດ້ຍົກທັບມາຕີເອົາຫຼວງພະບາງ, ເຈົ້າອິງລອງປ້ອງກັນໄວ້ບໍ່ໄດ້ ຈຶ່ງແຕກທັບລົງມາວຽງຈັນ. ເມື່ອເຈົ້າກິ່ງກິດສະລາດໄດ້ຂຶ້ນເປັນເຈົ້າຊີວິດຫຼວງພະບາງແລ້ວ ກໍໄດ້ເຕົ້າໂຮມກຳລັງມຸ່ງໜ້າໄປຕີເອົາວຽງຈັນ. ທາງຝ່າຍສັກດີນາສະຫຍາມເຫັນວ່າ ພະມ້າ ເຊິ່ງເປັນສັດຕູກັບຕົນພວມມີຄວາມຫຍຸ້ງຍາກຢູ່ນັ້ນ, ກໍສວຍໂອກາດບັ່ນປຸ່ນກຳລັງ ໂດຍມີທະຫານອັງກິດເປັນຜູ້ເຝິກແອບໃຫ້. ເມື່ອເຫັນວ່າກຳລັງຂອງຕົນພຽງພໍແລ້ວ, ສັກດີນາສະຫຍາມກໍຍົກທັບໄປຕີເອົາຈຳປາສັກ ແລ້ວຂຶ້ນມາຕີເອົາວຽງຈັນ. ໃນຂະນະທີ່ກອງທັບສະຫຍາມປິດລ້ອມເມືອງວຽງຈັນຢູ່ນັ້ນ, ເຈົ້າສິລິບຸນຍະສານ (ເຈົ້າອົງບຸນ) ກໍໄດ້ເອົາຕົວລີ້ພີໄປລີ້ໄພຢູ່ເມືອງມະຫາໄຊ ປ່ອຍໃຫ້ປະຊາຊົນ ແລະເຈົ້ານັນທະເສນ ຜູ້ເປັນລູກຊາຍຕໍ່ສູ້ປ້ອງວຽງຈັນ–ເປັນເວລາ 4 ເດືອນ. ໃນທີ່ສຸດ ກອງທັບສະຫຍາມກໍເຂົ້າຍຶດເອົາເມືອງວຽງຈັນໄດ້ໃນປີ ຄ.ສ. 1778 ແລະ ບັງຄັບໃຫ້ອານາຈັກຫຼວງພະບາງເປັນເມືອງສ່ວຍ. ເປັນອັນວ່າ ອານາຈັກລາວລ້ານຊ້າງທັງສາມ ໄດ້ກາຍເປັນເມືອງຂຶ້ນຂອງສະຫຍາມ.

## 3. ຂະບວນການຕໍ່ສູ້ຂອງປະຊາຊົນລາວ ຕ້ານການຮຸກຮານສັກດີນາສະຫຍາມ.

– ການຕໍ່ສູ້ກູ້ເອກະລາດຂອງເຈົ້າອະນຸ: ເຈົ້າອານຸເປັນບຸດຄົນທີສາມ ຂອງເຈົ້າສິລິບຸນຍະ–ສານ, ເປັນກະສັດລາວອົງໜຶ່ງທີ່ມີຊື່ສຽງລືຊາພາກົດໃນການກອບກູ້ເອກະລາດ ແລະ ອິດສະຫຼະພາບຂອງຊາດລາວ ອອກຈາກແອກເມືອງຂຶ້ນຂອງສັກດີນາສະຫຍາມ. ຫຼັງຈາກຍຶດວຽງຈັນໄດ້ແລ້ວ, ແມ່ທັບສະຫຍາມ ໄດ້ຈັບເອົາຕົວເຈົ້າອະນຸ, ເຈົ້າພົມມະວົງ, ນາງແກ້ວຍອດຟ້າ ກັບລະຂາມີແລະຍາດວົງອື່ນໆ ລົງໄປຢູ່ບາງກອກ ໃນຖານະເປັນຕົວປະກັນ. ເມື່ອເວລາເຈົ້າອິນທະວົງ ຜູ້ເປັນອ້າຍໄດ້ຂຶ້ນມາເປັນເຈົ້າແຜ່ນດິນວຽງຈັນ, ເພິ່ນໄດ້ຂໍເອົາເຈົ້າອະນຸມາເປັນອຸປະຮາດ. ຕະຫຼອດໄລຍະທີ່ເປັນເຈົ້າອຸປະຮາດຢູ່ວຽງຈັນນັ້ນ, ເຈົ້າອະນຸໄດ້ຕັ້ງໜ້າເຮັດວຽກຢ່າງຈົງຮັກພັກດີຕໍ່ສັກດີນາ ສະຫຍາມ ເພື່ອໃຫ້ສັກດີນາສະຫຍາມມີຄວາມໄວ້ເນື້ອເຊື່ອໃຈ ແລະໄດ້ຍົກກອງທັບລາວໄປຕີ ກອງທັບພະມ້າທີ່ເຂດເມືອງຊຽງແສນ ຊ່ວຍສັກດີນາສະຫຍາມຈົນໄດ້ໄຊຊະນະ. ຕໍ່ມາ ເຈົ້າອະນຸ ໄດ້ຖືກແຕ່ງຕັ້ງໃຫ້ເປັນເຈົ້າແຜ່ນດິນວຽງຈັນ ພາຍຫຼັງທີ່ເຈົ້າອິນທະວົງສິ້ນພະຊົນ ໃນປີ ຄ.ສ. 1805 ເມື່ອອາຍຸໄດ້ 37 ປີ. ຫຼັງຈາກໄດ້ຂຶ້ນເປັນເຈົ້າແຜ່ນດິນແລ້ວ, ເຈົ້າອະນຸໄດ້ບູລະນະ ສ້າງສາປະເທດໃຫ້ເຂັ້ມແຂງ. ໃນປີ ຄ.ສ. 1825 ເຈົ້າອະນຸໄດ້ນຳພາໄພ່ພົນລົງໄປຮ່ວມພິທີປົງສົບ ເຈົ້າ

ເລີດຫຼ້ານະພາໄລ ເຈົ້າແຜ່ນດິນສະຫຍາມທີ່ບາງກອກ, ເພື່ອສວຍໂອກາດສັງເກດສະພາບການໃນການວາງແຜນກອບກູ້ເອກະລາດ. ເພື່ອເປັນການຢັ່ງຫາງສຽງເຈົ້າຊີວິດໄທຄົນໃໝ່, ເຈົ້າອະນຸໄດ້ຂໍເອົາຄະນະສິນລະປະກອນ ແລະຄອບຄົວລາວທີ່ຖືກຕ້ອນໄປໃນເມື່ອກ່ອນນັ້ນຄືນມາ, ແຕ່ເຈົ້າແຜ່ນດິນສະຫຍາມບໍ່ຍອມໃຫ້ ແຖມຍັງບັງຄັບໃຫ້ຄົນທີ່ໄປນຳເຈົ້າອະນຸນັ້ນ ໄປຕັດຕົ້ນຕານຢູ່ເມືອງສຸພັນບູລີ ແລ້ວແກ່ລົງໄປເມືອງສະໝຸດປາການ ເຊິ່ງເປັນໄລຍະທາງໄກຫຼາຍ ເຮັດໃຫ້ຄົນລາວເຈັບເປັນແລະລົ້ມຕາຍລົງນັບເປັນຈຳນວນຫຼວງຫຼາຍ. ເມື່ອເປັນດັ່ງນັ້ນ, ເຈົ້າອະນຸກໍຍິ່ງເພີ່ມຄວາມຄຽດແຄ້ນ - ແລະມີນ້ຳໃຈຕໍ່ສູ້ຍິ່ງຂຶ້ນ. ຫຼັງຈາກທີ່ກັບມາແຕ່ບາງກອກແລ້ວ, ເຈົ້າອະນຸກໍໄດ້ເປີກສາຫາລືນຳເສນາບໍດີທັງຫຼາຍ ເພື່ອກະກຽມກຳລັງມຸ່ງໜ້າໄປຕີບາງກອກ. ໃນປີ ຄ.ສ. 1827 ເຈົ້າອະນຸ ໄດ້ຍົກກອງທັບມຸ່ງໜ້າໄປບາງກອກ ໂດຍແບ່ງອອກເປັນສາມແນວທັບໃຫຍ່ຄື ທັບທີ 1 ບັນຊາໂດຍ ເຈົ້າລາຊະບຸດ ຍົກຈາກນະຄອນຈຳປາສັກ ມຸ່ງໜ້າສູ່ເມືອງໂຄລາດ; ທັບທີ 2 ບັນຊາໂດຍມະຫາອຸປະຮາດຕິດສະ ຍົກໄປທາງເມືອງຮ້ອຍເອດ ; ສ່ວນກອງທັບທີ 3 ແມ່ນກອງທັບຫຼວງ ບັນຊາໂດຍເຈົ້າອະນຸເອງ. ເຈົ້າອະນຸ ໄດ້ແຕ່ງໃຫ້ເຈົ້າລາຊະວົງເປັນແມ່ທັບໜ້າ ມີກຳລັງສາມພັນຄົນຍົກໄປທາງຫຼົ່ມ-ສັກ ມຸ່ງໜ້າໄປຫາເມືອງສະຫຼະບູລີ.

ເມື່ອສະຫຍາມຊາບວ່າ ກອງທັບລາວຍົກໄປຕີ ກໍກຽມກອງທັບໃຫຍ່ອອກຕໍ່ສູ້. ເມື່ອເຈົ້າລາຊະວົງຊາບດັ່ງນັ້ນ ຈຶ່ງຖອຍທັບຄືນມາສົມທົບກັບກອງທັບຫຼວງທີ່ເມືອງໂຄລາດ. ເມື່ອສັງເກດເຫັນວ່າຝ່າຍຕົນມີກຳລັງບໍ່ພຽງພໍ ເຈົ້າອະນຸ ຈຶ່ງສັ່ງຖອຍທັບຂຶ້ນມາຮັບມືກັບກອງທັບສະຫຍາມ ທີ່ຮອນພູເຂົາສາມເມືອງໜອງບົວລຳພູ. ຜ່ານການສູ້ຮົບຢູ່ເມືອງໜອງບົວລຳພູ ກອງທັບລາວສູ້ບໍ່ໄດ້ ຈຶ່ງຖອຍກັບມາວຽງຈັນ, ຍັງເຫຼືອແຕ່ກອງທັບຂອງພະຍານໍລິນກອງດຽວທີ່ທຳການຕໍ່ສູ້ຢ່າງທີ່ລະທິດອົດທົນ. ໃນທີ່ສຸດພະຍານໍລິນ ກໍຖືກແມ່ທັບສະຫຍາມຈັບໄດ້. ແມ່ທັບສະຫຍາມກໍພະຍາຍາມຈອບອອຍໃຫ້ເຂົາ - ເປັນຝ່າຍຂອງຕົນ, ເພາະວ່າ ພະຍານໍລິນເປັນແມ່ທັບລາວຄົນໜຶ່ງທີ່ມີຄວາມເກັ່ງກ້າສາມາດ ທາງດ້ານສິນລະປະຍຸດ ແລະຍຸດທະວິທີ, ແຕ່ວ່າ ພະຍານໍລິນບໍ່ຍອມຈຳນົນເປັນເດັດຂາດ. ໃນທີ່ສຸດແມ່ທັບສະຫຍາມຈຶ່ງສັ່ງໃຫ້ທະຫານຂອງເຂົາເອົາຊ້າງຢຽບຈົນເຖິງແກ່ຄວາມຕາຍ. ຫຼັງຈາກນັ້ນ ກອງທັບສະຫຍາມກໍເຂົ້າມາປຸ້ນສະດົມນະຄອນວຽງຈັນ. ຝ່າຍເຈົ້າອະນຸ ໄດ້ເອົາຕົວຫຼົບໜີໄປຂໍຄວາມ - ຊ່ວຍເຫຼືອຈາກເຈົ້າຈັກກະພັດຫວຽດນາມ. ຫຼັງຈາກກັບມາແຕ່ຫວຽດນາມພ້ອມດ້ວຍທະຫານຈຳນວນໜຶ່ງຮອດວຽງຈັນກໍເຫັນວ່າ ເມືອງວຽງຈັນຖືກທຳລາຍ, ປະຊາຊົນກໍຖືກກວາດຕ້ອນໄປ, ຄົງເຫຼືອແຕ່ທະຫານສະຫຍາມຢູ່ເຝົ້າຮັກສາເມືອງເທົ່ານັ້ນ. ເມື່ອເປັນດັ່ງນັ້ນ ເຈົ້າອະນຸໄດ້ເຂົ້າລ້ອມຈັບ ແລະປະຫານຊີວິດຂອງພວກທະຫານສະຫຍາມເຫຼົ່ານັ້ນໝົດ.

ສ່ວນພະຍາບໍ່ດີ ແມ່ທັບສະຫຍາມ ທີ່ຕັ້ງຄ້າຍຢູ່ຟາກເມືອງ ພັນພ້າວ ເຫັນວ່າທະຫານ ຂອງ ຕົນທີ່ວຽງຈັນກໍກ້າຫຼາຍ ຈຶ່ງຢ້ານກົວ ແລະຖອຍທັບໄປໂຮມກັນທີ່ເມືອງຍະໂສທອນ. ເມື່ອກຽມກຳລັງພຽງພໍແລ້ວ ກໍຍົກຂຶ້ນມາຕີວຽງຈັນອີກ. ຝ່າຍເຈົ້າອະນຸໄດ້ສົ່ງເຈົ້າລາຊະວົງນຳໄປຈັບເອົາ ຕົວ ພະຍາບໍ່ດີ, ແຕ່ໄປບໍ່ທັນຈຶ່ງໄປຕັ້ງຄ້າຍຢູ່ບ້ານພາກແຄ້ງ ເນື່ອງຈາກວ່າມີກຳລັງພຽງພໍພອດເທົ່າ ນັ້ນ; ກອງທັບລາວຈຶ່ງຖອຍມາຕັ້ງທ່າຢູ່ບ້ານພັກທວານ, ແມ່ທັບສະຫຍາມກໍຕິດຕາມມາ, ການຕໍ່ສູ້ ກັນກໍເກີດຂຶ້ນຢູ່ທີ່ນັ້ນອີກ. ໃນເທື່ອນີ້, ເຈົ້າລາຊະວົງຈຶ່ງປະກາດທ້າທາຍກັບພະຍາບໍ່ດີໃຫ້ມາສູ້ກັນ ຕົວຕໍ່ຕົວລະຫວ່າງແມ່ທັບຕໍ່ແມ່ທັບ. ພະຍາບໍ່ດີ ແລະ ເຈົ້າລາຊະວົງຂີ່ມ້າຄົນລະໂຕຕໍ່ສູ້ກັນ ຢູ່ຕໍ່ໜ້າ ເຫຼົ່າທະຫານຢ່າງອົງອາດ. ພະຍາບໍ່ດີ ຖືກເຈົ້າລາຊະວົງເອົາຫອກແທງທີ່ກົກຂາ ເລີຍຕົກຈາກຫຼັງ ມ້າ, ເຈົ້າລາຊະວົງຖອດງ້າວເພື່ອຈະຟັນໃຫ້ຕາຍ, ແຕ່ນ້ອງຊາຍຂອງພະຍາບໍ່ດີ ເອົາຕົວມາຮັບ- ເລີຍຟັນຖືກນ້ອງຊາຍຂອງພະຍາບໍ່ດີຕາຍຄາທີ່. ເມື່ອເປັນດັ່ງນັ້ນ, ກອງທະຫານສະຫຍາມຈຶ່ງຍິງ ປືນສຸມໃສ່ເຈົ້າລາຊະວົງ ເຮັດໃຫ້ເຈົ້າລາຊະວົງຕົກຈາກຫຼັງມ້າ. ຝ່າຍທະຫານລາວ ເຫັນດັ່ງນັ້ນ ກໍ ຟ້າວພາກັນອູ້ມເອົາ ເຈົ້າລາດຊະວົງທີ່ຖືກບາດເຈັບຂຶ້ນ ເທິງຫຼັງມ້າ ເອົາຕົວໜີໄປໄດ້ຢ່າງປອດໄພ.

ສ່ວນເຈົ້າອະນຸເຫັນວ່າ ກອງທັບເຈົ້າລາຊະວົງແຕກແລ້ວ ຈຶ່ງໄດ້ອົບພະຍົບໜີຈາກວຽງຈັນເພື່ອ ຈະໄປຂໍຄວາມຊ່ວຍເຫຼືອຈາກສັກດີນາຈີນ, ແຕ່ວ່າ ເມື່ອຜ່ານໄປທາງເມືອງພວນເລີຍຖືກເຈົ້ານ້ອຍ ເມືອງພວນຈັບສົ່ງໃຫ້ສະຫຍາມ. ເຈົ້າແຜ່ນດິນສະຫຍາມໄດ້ສັ່ງໃຫ້ຄຸມຂັງໄວ້ຢ່າງທໍລະມານ, ເຮັດ ໃຫ້ເຈົ້າອະນຸໄດ້ຮັບຄວາມທຸກທໍລະມານຈົນເຖິງແກ່ຄວາມຕາຍຢູ່ໃນຫ້ອງຂັງ. ພະຍາບໍ່ດີແມ່ທັບສະ ຫຍາມໄດ້ເຂົ້າມະຄອບວຽງຈັນ, ແລ້ວກວາດຕ້ອນເອົາປະຊາຊົນ 6.000 ຄອບຄົວ, ຊ້າງ 200 ໂຕ, ມ້າ 400 ໂຕ ພ້ອມດ້ວຍພະບາງລົງໄປບາງກອກ. ສ່ວນເຈົ້ານ້ອຍເມືອງພວນ ໄດ້ຖືກເຈົ້າ ຈັກກະພັດມິງມາງຫວຽດນາມຈັບໄປທໍລະມານໃນຂໍ້ກ່າວຫາວ່າ ຈັບເຈົ້າອະນຸສົ່ງໃຫ້ສະຫຍາມ.

- <u>ຂະບວນຕໍ່ສູ້ອຸບົນ</u>: ນອກຈາກການຕໍ່ສູ້ຂອງເຈົ້າອະນຸເພື່ອກູ້ເອກະລາດແລ້ວ ຍັງມີຂະບວນ ອື່ນໆຫຼາຍຂະບວນທີ່ລຸກຂຶ້ນຕໍ່ສູ້ກັບສັກດີນາສະຫຍາມ. ຂະບວນທີ່ເດັ່ນກວ່າໝູ່ແມ່ນຂະບວນຂອງພະຍາ ທຳມິກະລາດທີ່ເມືອງອຸບົນ ໃນປີ ຄ.ສ. 1906 ຂະບວນຕໍ່ສູ້ໄດ້ບຸກໂຈມຕີເມືອງອຸບົນ. ໃນຂະນະ ນັ້ນ, ກົມຫຼວງສິດທິປະສົງ ຜູ້ສຳເລັດລາຊະການມົນທົນອີສານ ໄດ້ສົ່ງກອງທະຫານພາຍໃຕ້ການບັນ ຊາຂອງພອນລາຊະວົງຮ້າຍເຂົ້າໄປປາບ, ແຕ່ຖືກຂະບວນກູ້ຊາດຕີແຕກ. ເມື່ອເປັນດັ່ງນັ້ນ, ກົມ ຫຼວງສິດທິປະສົງຜູ້ສຳເລັດລາຊະການ ຈຶ່ງໄດ້ສົ່ງທະຫານຈາກບາງກອກ ປະສົມກັບທະຫານລາວ ທີ່ ຂຶ້ນກັບໄທເຂົ້າໄປປາບອີກ, ແຕ່ທະຫານລາວທີ່ຖືກສົ່ງໄປນັ້ນ ໄດ້ຝືນຄຳສັ່ງຂອງຜູ້ບັງຄັບບັນຊາ, ໜີ ໄປສົມທົບກັບຂະບວນກູ້ຊາດທັງໝົດ. ດັ່ງນັ້ນ ແມ່ທັບສະຫຍາມຈຶ່ງກຽມກອງທັບໄທທີ່ປະກອບດ້ວຍ-

ກອງພົນປືນໃຫຍ່ອັນມີ ພວງສິດສັຍພະການ ເປັນຜູ້ບັນຊາອອກຕໍ່ສູ້. ການສູ້ຮົບໄດ້ດຳເນີນໄປຢ່າງດຸເດືອດ, ໃນທີ່ສຸດທະຫານສະຫຍາມກໍເອົາປືນໃຫຍ່ໄປຊຸ້ມລັດທາງທີ່ຜ້ານກະບົດ, ອັນເຮັດໃຫ້ຂະບວນຕໍ່ຕ້ານແຕກທະລາຍໄປ ແຕ່ຫົວໜ້າຂະບວນການຕໍ່ຕ້ານພະຍາທຳມິກະລາດ ກໍໜີລອດໄປໄດ້.

ເຫດການດັ່ງກ່າວນັ້ນ, ໄດ້ສະແດງໃຫ້ເຫັນຄວາມພິລະອາດຫານ ໃນການຕໍ່ສູ້ຂອງປະຊາຊົນ–ລາວທີ່ບໍ່ຍອມເປັນຂ້ອຍຂ້າຂອງຊາດຕ່າງດ້າວ.

## ຄຳຖາມເພື່ອຄົ້ນຄວ້າ.

1./ ຄວາມຮຸ່ງເຮືອງຂອງອານາຈັກລາວລ້ານຊ້າງສະໄໝເຈົ້າສຸລິຍະວົງສາ ຜາກົດມີດ້ານໃດແດ່ທີ່ເດັ່ນ ?

2./ ພາຍຫຼັງທີ່ເຈົ້າສຸລິຍະວົງສາເສຍຊີວິດແລ້ວ, ສະພາບການຂອງອານາຈັກລາວລ້ານຊ້າງເປັນແນວໃດ ? ຈົ່ງເວົ້າໃຫ້ລະອຽດ.

3./ ຫຼັງຈາກອານາຈັກລາວລ້ານຊ້າງຕົກເປັນເມືອງຂຶ້ນຂອງອານາຈັກສະຫຍາມແລ້ວ ໄດ້ມີຂະບວນການຕໍ່ຕ້ານສະຫຍາມແນວໃດແດ່ ?

## ບົດທີ 2.

# ພວກລ່າເມືອງຂຶ້ນຝະລັ່ງເຂົ້າມາຮຸກຮານລາວ ( ຄ. ສ. 1893 ).

### 1. ການຂັດແຍ້ງລະຫວ່າງຈັກກະພັດຝະລັ່ງແລະອັງກິດ.

ດັ່ງພວກເຮົາຮູ້ແລ້ວວ່າ ສະຕະວັດທີ 19 ເປັນສະຕະວັດທີ່ຈັກກະພັດຝະລັ່ງ ແລະ ຈັກກະພັດອັງກິດໄດ້ກ້າວຂຶ້ນເປັນຈອມຈັກກະພັດ, ຍາດແຍ່ງເມືອງຂຶ້ນກັນຢູ່ທົ່ວໂລກແທນປອກຕຸຍການ ແລະ ແອສະປາຍ. ສະເພາະຢູ່ໃນພາກພື້ນອາຊີອາຄະເນຍນັ້ນ, ພວກເຂົາພວມປະເອີບໃຈນຳສິນຄ້າທີ່ມີຢູ່ປະເທດເຫຼົ່ານີ້ ເຊັ່ນ ຄັ່ງ, ຢາງ, ພິກໄທ, ງາຊ້າງ ແລະອື່ນໆ ອັນເປັນສາຍເຫດໃຫ້ຈັກກະພັດຝະລັ່ງ ແລະອັງກິດຍາດແຍ່ງກັນເປັນເຈົ້າໃນຂົງເຂດນີ້. ເມື່ອອັງກິດຍຶດເອົາປະເທດອິນເດຍ ໄດ້ແລ້ວ, ຝະລັ່ງກໍ່ຍຶດເອົາບາງເມືອງຂອງອິນເດຍມາ ເພື່ອເປັນສູນການຄ້າຂອງຕົນ ເຊັ່ນ ເມືອງຢານົງ, ກາລີການ, ປົງດີເຊລີ, ຈັນທານະຄອນ ເປັນຕົ້ນ. ຕໍ່ມາ ອັງກິດກໍ່ໄດ້ໃຊ້ກຳລັງຍຶດເອົາປະເທດພະມ້າ, ອິນໂດເນເຊຍ, ມາເລເຊຍ ສິງກະໂປ ແລະແຜ່ອິດທິພົນເຂົ້າສະຫຍາມ; ເມື່ອເປັນດັ່ງນັ້ນ, ຝະລັ່ງຈຶ່ງຟ້າວຍຶດເອົາເຂດຕາເວັນອອກຂອງພາກໃຕ້ຫວຽດນາມໃນປີ ຄ.ສ.1862 ແລະກຳປູເຈຍໃນປີ ຄ.ສ. 1863 ວາງແຜນຍຶດເອົາດິນແດນຝັ່ງຊ້າຍແມ່ນ້ຳຂອງ ຂອງປະເທດລ້ານຊ້າງອັນໄດ້ເຮັດໃຫ້ອັງກິດເກີດຄວາມບໍ່ພໍໃຈ. ໃນທີ່ສຸດ ຈັກກະພັດຝະລັ່ງ ແລະອັງກິດກໍ່ໄດ້ຕົກລົງແບ່ງເຂດອິດທິພົນກັນ ໃນດິນແດນລາວ ໂດຍຖືເອົາແມ່ນ້ຳຂອງເປັນເຂດແດນ.

### 2. ກົນອຸບາຍຂອງຈັກກະພັດຝະລັ່ງໃນການຍຶດຄອງລາວ.

ເພື່ອບັນລຸຈຸດປະສົງໃນການຍຶດຄອງລາວ; ໃນປີ ຄ.ສ. 1866, ພວກເຂົາໄດ້ແຕ່ງຕັ້ງ ຜູ້ແທນຄະນະພົ່ງ ອັນນີ ດູດາເດີລາເກຼ ຟົງຊິດກາກເຢ ເປັນຫົວໜ້າຂຶ້ນມາສຳຫຼວດລຳນ້ຳຂອງ ຈົນຮອດປະເທດຈີນ. ກ່ອນໜ້ານີ້, ຄືປີ ຄ.ສ. 1861 ອັງລີມູໂຮ ກໍ່ໄດ້ເຂົ້າມາເຜີຍແຜ່ສາສະໜາຄຼິດສະຕັງໃນປະເທດລາວແລ້ວ. ໃນປີ ຄ.ສ. 1887, ຫຼັງຈາກຍຶດເອົາດິນແດນປະເທດຫວຽດນາມ ແລະ ກຳປູເຈຍໄດ້ທັງໝົດແລ້ວ, ພວກລ່າເມືອງຂຶ້ນຝະລັ່ງ ກໍ່ໄດ້ແຕ່ງໃຫ້ໂອກຸດ ປາວີ ມາເປັນກົງສູນປະຈຳລາຊະວັງຫຼວງພະບາງ. ໃນປີດຽວກັນນັ້ນ ພວກເຂົາກໍ່ໄດ້ເຈລະຈາກັບສະຫຍາມແລະຕົກລົງກັນແຕ່ງຕັ້ງຄະນະກວດກາປະສົມຊາຍແດນລາວ–ສະຫຍາມຂຶ້ນ ເຊິ່ງປະກອບດ້ວຍຊາດສະຫຍາມ ແລະຝະລັ່ງ. ໃນເວລາກວດກາຊາຍແດນຢູ່ນັ້ນ, ຝະລັ່ງກໍ່ຫາທຸກວິທີເພື່ອເກາະຜິດກັບສະຫຍາມ – ເຊັ່ນ: ເຄື່ອນເຮືອຮົບເຂົ້າມານ້ຳທະເລສະຫຍາມ ແລະປັກທຸງຝະລັ່ງຢູ່ຢາຍໄປຕາມແຫ່ງຕ່າງໆ

ໃນປະເທດສະຫຍາມ.

ພ້ອມດຽວກັນນັ້ນ, ຈັກກະພັດຝະລັ່ງ ກໍໄດ້ຍຸຍົງພວກຫໍ້ທຸງດຳທຸງແດງ ກໍ່ຄວາມວຸ້ນວາຍຂຶ້ນ ໃນເຂດສິບສອງຈຸໄທ ແລ້ວສວຍໂອກາດສົ່ງກອງທະຫານຂອງຕົນຍຶດຄອງຂົງເຂດນັ້ນໄວ້ ໂດຍອ້າງວ່າ "ປາບຫໍ້". ຕໍ່ມາພວກຫໍ້ເຫຼົ່ານັ້ນ ກໍໄດ້ບຸກສະດົມລົງມາທາງແຂວງຫົວພັນ ແລະຊຽງຂວາງ, ໃນວັນທີ 10 ມິຖຸນາ 1887 ກໍໄດ້ບຸກສະດົມນະຄອນຫຼວງພະບາງ. ໃນເວລານັ້ນ, ໂອກຸດ ປາວີ ກໍສວຍໂອກາດພາເຈົ້າອຸ່ນຄຳ ພ້ອມດ້ວຍວົງສານຸວົງລົງເຮືອໄປລີ້ໄພຢູ່ແກ້ງຫຼວງ ເຂດເມືອງ ປາກລາຍ ເພື່ອສ້າງຄວາມນິຍົມໃຫ້ແກ່ຕົນເອງ. ຝ່າຍພວກຫໍ້ທຸງດຳທຸງແດງ ກໍໄດ້ສືບຕໍ່ບຸກສະດົມ ລົງມາທາງວຽງຈັນຮອດເມືອງໜອງຄາຍ. ຢູ່ວຽງຈັນ ພວກຫໍ້ໄດ້ທຳລາຍທາດຫຼວງ, ທາດດຳ ເພື່ອກອດ-ຄົ້ນເອົາຊັບສົມບັດ. ໃນເວລານັ້ນ, ຝ້າຍສະຫຍາມ ກໍໄດ້ສົ່ງກອງທະຫານ ພາຍໃຕ້ການບັນຊາຂອງພະຍາສຸລິສັກຂຶ້ນມາປາບຫໍ້. ໃນເວລາດຽວກັນນັ້ນ, ຝະລັ່ງກໍສວຍໂອກາດ ຂົນທະຫານ ຂອງຕົນເຂົ້າມາລາວເພີ່ມກັນ ໂດຍແບ່ງເປັນສາມປີກຄື : ປີກໜຶ່ງ ຈາກກຳປູເຈຍຜ່ານເມືອງ ຊຽງແຕງ ຕີເອົາຈຳປາສັກ, ປີກທີສອງເຂົ້າທາງກົວລາວຍາວ ຂ້າມສາຍພູຫຼວງ ຕີເອົາເມືອງສະຫວັນນະເຂດ ແລະປີກທີສາມ ຈາກດົງເຮີຍ ຕີເອົາເມືອງຄຳມ່ວນ.

3. ການຂັດແຍ້ງລະຫວ່າງຝະລັ່ງກັບສະຫຍາມ.

ດັ່ງທີ່ໄດ້ເວົ້າຜ່ານມາແລ້ວວ່າ ສັກດີນາສະຫຍາມ ໄດ້ເອົາອານາຈັກລາວລ້ານຊ້າງເປັນເມືອງຂຶ້ນແຕ່ປີ ຄ.ສ. 1828 ພຸ້ນມາ, ແຕ່ວ່າບາງເຂດ ເຊັ່ນ ເຂດເມືອງພວນ ແລະ ພາກຕາເວັນອອກຂອງແຂວງຄຳມ່ວນ ແລະແຂວງສະຫວັນນະເຂດ ແມ່ນຕົກຢູ່ໃນອິດທິພົນຂອງສັກດີນາ ຫວຽດນາມ. ດ້ວຍເຫດນັ້ນ, ເມື່ອຝະລັ່ງຍຶດເອົາປະເທດຫວຽດນາມແລ້ວ, ຈຶ່ງຖືວ່າ ປະເທດລາວກໍຕ້ອງຕົກຢູ່ພາຍໃຕ້ການປົກຄອງຂອງຝະລັ່ງເຊັ່ນດຽວກັນ. ເມື່ອເປັນດັ່ງນັ້ນ, ຈຶ່ງມີການຂັດແຍ່ງກັນລະຫວ່າງຈັກກະພັດຝະລັ່ງ ແລະສັກດີນາສະຫຍາມ. ເມື່ອສະຫຍາມເຫັນວ່າ ຝະລັ່ງຂົນທະຫານເຂົ້າມາລາວ, ພວກເຂົາກໍໄດ້ຂົນທະຫານເຂົ້າມາລາວເພີ່ມກັນ ເພື່ອຮັກສາເມືອງຂຶ້ນຂອງຕົນໄວ້. ໃນວັນທີ 20 ກໍລະກົດ 1893, ກໍເລີຍເກີດປະທະກັນທີ່ບ້ານແກ້ງເຈັກໃກ້ເມືອງຫີນບູນ ແຂວງຄຳມ່ວນ. ການປະທະກັນຄັ້ງນັ້ນ, ໄດ້ເຮັດໃຫ້ທະຫານຝະລັ່ງລົ້ມຕາຍຈຳນວນໜຶ່ງ, ໃນນັ້ນມີນາຍຮ້ອຍໂທໜຶ່ງ ຊື່ວ່າກົດສະກຼັງ. ຮອດວັນທີ 25 ກໍລະກົດ 1893, ຝະລັ່ງໄດ້ຍື່ນບັນທຶກກ່າວຫາກໍລະນີພິພາດຢູ່ບ້ານແກ້ງເຈັກໄປນາຍຂຸນພວກກຳອຳນາດຢູ່ບາງກອກ, ບັງຄັບໃຫ້ສະຫຍາມຕ້ອງໃຊ້ຄ່າຫົວ-ທະຫານຝະລັ່ງທີ່ຕາຍໄປ ແລະບັງຄັບໃຫ້ສະຫຍາມຕ້ອງຖອນກອງທະຫານຂອງຕົນ ອອກຈາກລາວ

ພາຍໃນ 48 ຊົ່ວໂມງ ແລະຍົກດິນແດນທາງຝັ່ງຊ້າຍຂອງແມ່ນ້ຳຂອງໃຫ້ແກ່ຝະລັ່ງ; ຖ້າບໍ່ດັ່ງນັ້ນ ຝະລັ່ງຈະເອົາກຳປັ່ນຮົບມາຍິງກະໜ່ຳບາງກອກ. ແຕ່ລັດຖະບານສະຫຍາມ ກໍບໍ່ໄດ້ເອົາຫົວຊາຕໍ່ຄຳນາບຂູ່ນັ້ນແຕ່ຢ່າງໃດ, ດັ່ງນັ້ນ ຝະລັ່ງຈຶ່ງໄດ້ເອົາເຮືອຮົບເບີດເຂົ້າອ່າວໄທ. ພວກທະຫານ ສະຫຍາມທີ່ຍາມຝັ່ງຢູ່ນັ້ນ ຍິງເຮືອຂອງຝະລັ່ງຈົມລຳໜຶ່ງ ແຕ່ເຮືອຮົບຂອງຝະລັ່ງລຳອື່ນໆ ຍັງສາມາດບຸກເຂົ້າໄປຈົນເຖິງປາກນ້ຳເຈົ້າພະຍາ ແລະຂົ່ມຂູ່ວ່າ ຈະຍິງກະໜ່ຳບາງກອກ.

ຝ່າຍອັງກິດ ຢ້ານເຫດການຈະຮ້າຍແຮງໄປກວ່ານັ້ນ ຈຶ່ງແນະນຳເຈົ້າແຜ່ນດິນສະຫຍາມ (ຈຸລາລົງກອນ) ສັ່ງໃຫ້ລັດຖະບານຂອງຕົນເຊັນສັນຍາຍົກດິນແດນລາວປະຈຸບັນ ໃຫ້ແກ່ຝະລັ່ງໃນວັນທີ 3 ຕຸລາ 1893. ຝ່າຍສັກດີນາລາວ ເມື່ອເຫັນສະພາບເປັນແນວນັ້ນ, ກໍບໍ່ສາມາດຂັດຂວາງໄວ້ໄດ້, ອັນເປັນການສະແດງໃຫ້ເຫັນຄວາມອ່ອນແອຂອງລະບອບສັກດີນາລາວ, ເຮັດໃຫ້ປະຊາຊົນລາວ ມີຄວາມຄຽດແຄ້ນເພີ້ມໃຈຕໍ່ເຫດການດັ່ງກ່າວນັ້ນເປັນທີ່ສຸດ.

ຕາມເນື້ອໃນຂອງສັນຍານັ້ນ, ລັດຖະບານສະຫຍາມ ຍອມຮັບຮູ້ອຳນາດຂອງຝະລັ່ງ ເໜືອດິນແດນທາງຝັ່ງຊ້າຍແມ່ນ້ຳຂອງ, ເກາະແລະດອນຕ່າງໆປາກນ້ຳຂອງລ້ວນແຕ່ແມ່ນຂອງຝະລັ່ງທັງໝົດ. ພ້ອມທັງຫ້າມສະຫຍາມ ບໍ່ໃຫ້ຕັ້ງການທະຫານຕາມແຄມແມ່ນ້ຳຂອງໃນເຂດລັດສະໝີ 25 ກມ, ເພື່ອເຮັດໃຫ້ເຂດນີ້ ເປັນເຂດປອດທະຫານ. ນອກນັ້ນ, ຍັງອະນຸຍາດໃຫ້ຝະລັ່ງ ແລະ ປະຊາຊົນລາວທ່ອງທ່ຽວເຂົ້າໄປໃນຂົງເຂດນີ້ ໂດຍບໍ່ຈຳເປັນຕ້ອງມີໜັງສືຜ່ານແດນ. ຝະລັ່ງມີສິດທີ່ຈະຕັ້ງກົງສູນ ຫຼືຮ້ານຄ້າຂຶ້ນໃນຂົງເຂດນີ້ໄດ້ຢ່າງເສລີ, ສ່ວນເຮືອຈັກ ຫຼືກຳປັ່ນຂອງສະຫຍາມນັ້ນ ມີສິດທ່ຽວຂຶ້ນທ່ຽວລ່ອງຕາມລຳນ້ຳຂອງໄດ້ພຽງແຕ່ເຂດລັດສະໝີ 15 ແມັດທາງອອກຈາກຝັ່ງເທົ່ານັ້ນ.

ເປັນອັນວ່າ ອານາເຂດຂອງອານາຈັກລາວລ້ານຊ້າງອັນກວ້າງໃຫຍ່ໄພສານ ໄດ້ຖືກຕັດແບ່ງອອກເປັນສອງສ່ວນ, ປະຊາຊົນລາວຢູ່ຕາມສອງຝັ່ງແມ່ນ້ຳຂອງ ເຊິ່ງແຕ່ກ່ອນກໍເປັນອັນໜຶ່ງອັນດຽວກັນ, ມີການພົວພັນກັນມາຈຳຕ້ອງຫ່າງເຫີນກັນ ດ້ວຍການແຊກແຊງຂອງຈັກກະພັດຕ່າງດ້າວ ໂດຍທີ່ສັກດີນາລາວບໍ່ສາມາດຂັດຂວາງໄວ້ໄດ້.

## ຄຳຖາມເພື່ອຄົ້ນຄວ້າ

1. ຈົ່ງເວົ້າເຖິງການຂັດແຍ້ງກັນຂອງຈັກກະພັດຝະລັ່ງ ແລະຈັກກະພັດອັງກິດ ໃນຂົງເຂດອາຊີອາຄະເນ.
2. ຈົ່ງເວົ້າເຖິງການຂັດແຍ້ງລະຫວ່າງຝະລັ່ງ ແລະສະຫຍາມຢູ່ປະເທດລາວ.
3. ຈົ່ງເວົ້າເຖິງສັນຍາບາງກອກ ແລະ ຜົນສະທ້ອນຂອງມັນ.

ບົດທີ 3.

# ນະໂຍບາຍຂອງຈັກກະພັດຝະລັ່ງຢູ່ລາວ.

ຫຼັງຈາກທີ່ພວກລ່າເມືອງຂຶ້ນຝະລັ່ງ ໄດ້ຍຶດເອົາດິນແດນເຊິ່ງພວກເຂົາເອີ້ນວ່າ " ອິນດູຈີນຝະລັ່ງເສດ " ໄດ້ແລ້ວ, ກໍໄດ້ວາງແຜນນະໂຍບາຍແບ່ງແຍກອອກເປັນ 5 ແຄ້ວນເພື່ອການປົກຄອງ. ປະເທດຫວຽດນາມກໍຖືກຕັດແບ່ງອອກເປັນ 3 ແຄ້ວນ ຄື ພາກເໜືອເອີ້ນວ່າ ແຄ້ວນຕັງແກງ ມີນະຄອນຫຼວງຢູ່ຮ່າໂນ້ຍ, ພາກກາງເອີ້ນວ່າ ແຄ້ວນອານາມ ມີນະຄອນຫຼວງຢູ່ເຫວ້ ແລະ ພາກໃຕ້ເອີ້ນວ່າ ໂກແຊງຊິນ ມີນະຄອນຫຼວງຢູ່ໄຊ່ງ່ອນ (ນະຄອນໂຮຈິມິນ). ສ່ວນກຳປູເຈຍ ແລະລາວນັ້ນກໍຈັດເປັນສອງແຄ້ວນຕ່າງກັນ, ທັງຫ້າແຄ້ວນນີ້ ມີຜູ້ສຳເລັດລາຊະການໃຫຍ່ຜູ້ໜຶ່ງເປັນຜູ້ປົກຄອງ, ມີສຳນັກງານໃຫຍ່ຢູ່ຮ່າໂນ້ຍ ຂຶ້ນກັບກະຊວງອານານິຄົມຂອງຝະລັ່ງ ທີ່ປາລີໂດຍກົງ. ແຕ່ລະແຄ້ວນມີຜູ້ສຳເລັດລາຊະການຜູ້ໜຶ່ງ, ມີກອງທະຫານ, ຕຳຫຼວດ ແລະຕຸລາການ ເພື່ອເປັນເຄື່ອງມືພະເດັດການຂອງພວກເຂົາ. ນອກຈາກນັ້ນ, ເພື່ອເປັນການປາບປາມຂັ້ນເດັດຂາດຕໍ່ພວກທີ່ມີໃຈຮັກຊາດ, ພວກເຂົາໄດ້ສ້າງຄຸກຢູ່ເກາະ ກອນດາວ ທີ່ຕັ້ງຢູ່ໃກ້ຝັ່ງທະເລຫວຽດນາມ ສຳລັບເປັນບ່ອນຄຸມຂັງນັກການເມືອງ.

## 1. ລະບົບການປົກຄອງຂອງຝະລັ່ງຢູ່ລາວ.

ເພື່ອສະດວກໃນການປາບປາມ, ເກັບເກນແລະກົດຂີ່ຂູດຮີດປະຊາຊົນລາວ, ພວກລ່າເມືອງຂຶ້ນຝະລັ່ງ ໄດ້ຈັດຕັ້ງອຳນາດການປົກຄອງ ເຊິ່ງແມ່ນເຄື່ອງມືຮັບໃຊ້ການກົດຂີ່ຂູດຮີດຂຶ້ນ ໃນລາວ ໂດຍໄດ້ແບ່ງການປົກຄອງດິນແດນລາວອອກເປັນສອງສ່ວນຕ່າງກັນຄື "ປະເທດລາວໃນອາລັກຂາ" ແລະ "ປະເທດລາວເມືອງຂຶ້ນ". ປະເທດລາວໃນອາລັກຂາໄດ້ແກ່ ອານາຈັກຫຼວງພະບາງ ເຊິ່ງມີເຈົ້າຊີວິດເປັນປະມຸກ ແລະມີລັດຖະບານທີ່ມີຊື່ວ່າ "ຫໍສະໜາມຫຼວງ" ເພື່ອບໍລິຫານປະເທດ ພາຍໃຕ້ການຄວບຄຸມຂອງຂ້າຫຼວງໃຫຍ່ຝະລັ່ງປະຈຳລາຊະສຳນັກ. ສ່ວນປະເທດລາວເມືອງຂຶ້ນ ແມ່ນວຽງຈັນເປັນເມືອງຫຼວງ ມີຜູ້ສຳເລັດລາຊະການຝະລັ່ງເປັນຜູ້ປົກຄອງໂດຍກົງ. ປະເທດລາວທັງໝົດແມ່ນຂຶ້ນກັບຜູ້ສຳເລັດລາຊະການໃຫຍ່ຝະລັ່ງ ປະຈຳອິນດູຈີນທີ່ຮ່າໂນ້ຍ. ໃນເວລານັ້ນ, ປະເທດລາວໄດ້ແບ່ງອອກເປັນ 10 ແຂວງ ຄື ແຂວງຫົວຂອງ, ແຂວງຜົ້ງສາລີ, ແຂວງຕຣັນນິນ (ຊຽງຂວາງ) ແຂວງຫົວພັນ, ແຂວງວຽງຈັນ, ແຂວງຄຳມ່ວນ, ແຂວງສະຫວັນນະເຂດ, ແຂວງຈຳປາສັກ, ແຂວງສາລະວັນ ແລະ ແຂວງອັດຕະປື. ແຕ່ລະແຂວງມີຝະລັ່ງຜູ້ໜຶ່ງເປັນເຈົ້າແຂວງເອີ້ນ

ວ່າ "ກົມມິແຊ". ເພື່ອເປັນການຫຼອກລວງປະຊາຊົນລາວ, ພວກເຂົາໄດ້ເລືອກເອົາຊົນຊັ້ນ ສັກດີນາຈຳນວນໜຶ່ງມາປະກອບເປັນສະພາທ້ອງຖິ່ນ. ພາຍລຸນມາ, ໃນປີ 1916 ພວກເຂົາໄດ້ຕັ້ງແຂວງຜົ້ງສາລີໃຫ້ເປັນເຂດທະຫານທີ 5, ສ່ວນເຂດທີ 1 ທີ 2 ທີ 3 ແລະທີ 4 ນັ້ນ ຕັ້ງຢູ່ລຽບຊາຍແດນຈີນ–ຫວຽດນາມ. ໃນເຂດດັ່ງກ່າວນີ້ເປັນເຂດທະຫານປົກຄອງໂດຍກົງ ເພື່ອປາບປາມແລະຄຸມຂັງປະຊາຊົນຜູ້ມີຈິດໃຈຮັກຊາດ ແລະ ເພື່ອຂົ່ມຂູ່ຂະບວນຮັກຊາດ.

## 2. ນະໂຍບາຍດ້ານເສດຖະກິດ.

ປະເທດລາວເປັນປະເທດທີ່ມີດິນແດນອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ. ມີໂລຫະຫຼາຍ, ມີດິນເໝາະສົມແກ່ການປູກຝັງ ແລະລ້ຽງສັດ. ເມື່ອຝຣັ່ງໄດ້ປົກຄອງປະເທດລາວແລ້ວ ພວກເຂົາກໍ່ບໍ່ມີແຜນນະໂຍບາຍສ້າງເສດຖະກິດແຕ່ຢ່າງໃດ, ກົງກັນຂ້າມ ພວກເຂົາຫວັງພຽງແຕ່ກອບໂກຍເອົາຊັບພະຍາກອນທີ່ມີຄ່າເປັນຕົ້ນ ກົ່ວ, ໄມ້ສັກ, ຄຳ, ຢາງ, ໝາກແໜ້ງ...

ທາງດ້ານກະສິກຳ ພວກລ່າເມືອງຂຶ້ນຝຣັ່ງໄດ້ຈັບຈອງເອົາດິນດອນທີ່ອຸດົມສົມບູນເຊັ່ນ : ພູພຽງບໍລະເວນທີ່ກວມເນື້ອທີ່ກວ່າຊາວພັນເຮັກຕາ ເປັນບ່ອນປູກພືດອຸດສາຫະກຳເປັນຕົ້ນແມ່ນ ຊາ, ກາເຟ, ໝາກແໜ້ງ, ເຕົ້າກົ້ມ... ນອກຈາກນັ້ນກໍຍັງຈັບຈອງເອົາພູຜາປ່າດົງທີ່ອຸດົມສົມບູນດ້ວຍເຄື່ອງປ່າຂອງດົງນັ້ນຕື່ມອີກ. ສະເພາະໄມ້ທີ່ມີລາຄາເຊັ່ນ: ໄມ້ສັກ, ໄມ້ແຄນ, ໄມ້ດູ່ ບໍລິສັດຝຣັ່ງມີສິດຜູກຂາດພຽງຜູ້ດຽວ.

ດ້ານອຸດສາຫະກຳ ພວກລ່າເມືອງຂຶ້ນຝຣັ່ງ ກໍ່ທຳການຂຸດຄົ້ນເອົາຊັບໃນດິນສິນໃນນ້ຳຂອງເຮົາຢ່າງຫຼວງຫຼາຍ ພວກເຂົາບໍ່ໄດ້ສ້າງພື້ນຖານໃຫ້ແກ່ການຂະຫຍາຍເສດຖະກິດອຸດສາຫະກຳແຕ່ຢ່າງໃດເລີຍ ພຽງແຕ່ບໍລິສັດຂຸດຄົ້ນເອົາກົ່ວຢູ່ແຂວງຄຳມ່ວນ ແຕ່ກໍບໍ່ໄດ້ຂະຫຍາຍກິດຈະການຫຍັງ. ໃນປີ 1923 ບໍລິສັດ "ຄົ້ນຄວ້າ ແລະຂຸດຄົ້ນບໍ່ແຮ່ຂອງຝຣັ່ງ" ໄດ້ທຳການຂຸດຄົ້ນກົ່ວຢູ່ໂພນຕິ້ວ. ໃນປີ 1933 "ບໍລິສັດກົ່ວຕາເວັນອອກໄກ" ໄດ້ລົງມືຂຸດຄົ້ນກົ່ວຢູ່ບໍ່ແໜ້ງ, ຢູ່ຕາມບ່ອນດາໂຕເມືອງທີ່ມີຝຣັ່ງຢູ່ນັ້ນ, ພວກເຂົາໄດ້ສ້າງໂຮງໄຟຟ້າ, ນ້ຳປະປາໄວ້ຈຳນວນໜຶ່ງ ເພື່ອຮັບໃຊ້ໃຫ້ພວກເຂົາເອງ.

ທາງດ້ານອົງການການຄ້ານັ້ນ ນາຍທຶນຝຣັ່ງເປັນຜູ້ຜູກຂາດແຕ່ພຽງຜູ້ດຽວ. ເພື່ອສະດວກໃນການລຳລຽງສິນຄ້າພວກເຂົາໄດ້ໃຊ້ແມ່ນ້ຳຂອງເປັນທາງຜ່ານອອກສູ່ທະເລ ໂດຍໄດ້ສ້າງທາງລົດໄຟ ເຊິ່ງມີຄວາມຍາວ 5 ກິໂລແມັດ ຈາກທ່າຄອນມາຫາທົ່ງດອນເດດ ເພື່ອເວັ້ນຕາດຄອນລີ່ຜີ. ບໍລິສັດ "ໄຊງ່ອນຂົນສົ່ງທາງນ້ຳ" ເປັນຜູ້ຜູກຂາດການຂົນສົ່ງທາງນ້ຳແຕ່ຜູ້ດຽວ.

ນອກຈາກນັ້ນ, ເພື່ອຮັບໃຊ້ພັກທີ່ປຸດທະສາດ ແລະການລໍາລຽງສິນຄ້າ ພວກເຂົາໄດ້ບັງຄັບປະຊາຊົນລາວສ້າງທາງລົດຄໍາມວນທັງຂົ້ນ, ເສັ້ນທາງຄົມມາຄົມທີ່ສໍາຄັນແມ່ນ ເສັ້ນທາງເລກ 13 ທີ່ອອກຈາກໄຊງ່ອນຫາຫຼວງພະບາງ, ນອກຈາກນັ້ນ ຍັງມີເສັ້ນທາງເລກ 9 ເລກ 8 ອອກສູ່ທະເລຫວຽດນາມ. ຊາຍສະກັນລາວເກືອບທຸກຄົນໄດ້ຖືກເກນໄປສ້າງທາງຢ່າງໜ້ອຍ 60 ວັນ ໂດຍບໍ່ໄລວັນໄປແລະກັບ, ບໍ່ມີຄ່າຈ້າງ ແລະຊໍ້າບໍ່ຫນ່ຳຍັງຖືເຂົ້າກິນໄປກິນເອງ ມີຫລາຍຄົນເກືອບຮອດເຄິ່ງປີຈຶ່ງໄດ້ກັບຄືນບ້ານ. ນອກຈາກນັ້ນຍັງໄດ້ໄປເຮັດວຽກຮັບໃຊ້ຄອບຄົວສັກດີນາ 40 ວັນ, 14 ວັນແມ່ນຮັບໃຊ້ອາດຍາສິດທ້ອງຖິ່ນ, ເຫຼືອນັ້ນພໍ່ບ້ານ ຕາແສງຢາກເອີ້ນໄປເຮັດວຽກເວລາໃດກໍໄດ້.

ດ້ານພື້ນອື່ນ ເພື່ອກົດຂີ່ຂູດຮີດ ຝຣັ່ງໄດ້ວາງອັດຕາເສຍສ່ວຍໃສ່ປະຊາຊົນລາວຢ່າງໜັກ. ປະຊາຊົນທຸກຄົນຕ້ອງໄດ້ເສຍສ່ວຍ ເຊິ່ງພວກເຂົາເອີ້ນວ່າເສຍຄ່າຫົວ. ໃນປີ 1902 ປະຊາຊົນລາວບໍ່ວ່າຍິງຜູ້ຊາຍ ທີ່ມີອາຍຸແຕ່ 18 ຫາ 60 ປີ ຈໍາຕ້ອງໄດ້ເສຍສ່ວຍຄ່າຫົວຄົນລະ 2 ກີບຕໍ່ປີ ແລະເສຍສ່ວຍແຮງງານອີກ 2 ກີບຕໍ່ປີ ອັນຮ້າຍແຮງໄປກວ່ານັ້ນ ແມ່ນພວກເຂົາຍັງບັງຄັບໃຫ້ປະຊາຊົນລາວເສຍຄ່າຫົວສັດເຊັ່ນ: ງົວ, ຄວາຍ, ຊ້າງ, ມ້າ... ຖ້າຜູ້ໃດບໍ່ປະຕິບັດຕາມ, ເວລາຂາຍສັດດັ່ງກ່າວນັ້ນຕ້ອງປັນໃຫ້ຝຣັ່ງເຄິ່ງໜຶ່ງ. ການກະທໍາເຊັ່ນນັ້ນຂອງພວກລ່າເມືອງຂຶ້ນຝຣັ່ງໄດ້ເຮັດໃຫ້ປະຊາຊົນລາວຕົກທຸກໄດ້ຍາກແສນສາຫັດ. ການເກັບເງິນກັບສະໝໍ່າສະເໝີ, ມີການຈໍາແນກຊົນຊົນ, ຊົນຊາດ ຊົນຊາດສ່ວນໜ້ອຍໄດ້ເສຍຫຼາຍກວ່າຊົນຊາດສ່ວນໃຫຍ່, ລາວສູງ ເສຍຫຼາຍກວ່າລາວລຸ່ມ. ນອກຈາກນັ້ນ ປະຊາຊົນລາວຍັງຖືກປັບໃໝໃສ່ໂທດຢ່າງບໍ່ຍຸຕິທໍາ. ໃນການປັບໃໝນັ້ນ ຖ້າວ່າຜູ້ໃດບໍ່ມີເງິນເສຍ ຈະຕ້ອງຖືກບັງຄັບໃຫ້ໄປອອກແຮງງານໜັກ ຢ່າງບໍ່ກໍານົດ.

## 3. ນະໂຍບາຍດ້ານວັດທະນະທໍາ ແລະ ສັງຄົມ.

ພວກລ່າເມືອງຂຶ້ນຝຣັ່ງໄດ້ເຮັດທຸກສິ່ງທຸກຢ່າງ ເພື່ອເຮັດໃຫ້ຄົນລາວກາຍເປັນຄົນໂງ່ຈ້າຫຼາຫຼັງ. ພ້ອມດຽວກັນນັ້ນ ພວກເຂົາກໍໄດ້ນໍາເອົາວັດທະນະທໍາເພຍຕາເວັນຕົກເຂົ້າມາເບື່ອເມົາຊາວໜຸ່ມລາວດ້ວຍຮູບການຕ່າງໆ. ພວກເຂົາໄດ້ກົດໜ່ວງຖ່ວງດຶງປະຊາຊົນລາວໃຫ້ຈົມເລິກ ໃນຄວາມເຊື່ອຖືເພຍງົມງວາຍ. ການສຶກສາໃນໄລຍະຝຣັ່ງປົກຄອງນັ້ນແມ່ນການສຶກສາເພຍເມືອງຂຶ້ນ, ການຮຽນການສອນເປັນພາສາຝຣັ່ງ, ພວກເຂົາບໍ່ໄດ້ໃຫ້ຄວາມສົນໃຈແກ່ພາສາລາວເລີຍ. ໃນປີ 1902 ງົບປະມານການສຶກສາມີພຽງ 13.800 ຟຣັງ ເຊິ່ງເທົ່າກັບສອງສ່ວນຮ້ອຍຂອງງົບປະມານອິນດູຈີນເທົ່ານັ້ນ. ທົ່ວປະເທດມີໂຮງຮຽນແຕ່ພຽງ 2 ຫຼັງ, ຫຼັງໜຶ່ງຢູ່ຫຼວງພະບາງ ແລະອີກຫຼັງໜຶ່ງຢູ່ວຽງຈັນ. ໂຮງຮຽນສອງບ່ອນນັ້ນພຽງແຕ່ສ້າງຄົນໃຫ້ເປັນນາຍພາສາໃຫ້ແກ່ຝຣັ່ງ. ໃນປີ 1923

ພວກເຂົາໄດ້ສ້າງໂຮງຮຽນມັດທະຍົມຂັ້ນຕົ້ນໜຶ່ງຫຼັງທີ່ວຽງຈັນ ເອີ້ນວ່າ "ໂກແລ ປາວີ". ຮອດປີ 1939 ໝົດທັງສິ້ນຂອງໂຮງຮຽນຫຼັງດັ່ງກ່າວນັ້ນມີນັກຮຽນພຽງ 120 ຄົນ, ໃນນັ້ນ ມີນັກຮຽນຍິງ 17 ຄົນ, ນັກຮຽນສ່ວນຫຼາຍກໍແມ່ນຄົນຕ່າງດ້າວ ແລະລູກເຈົ້າຫຼານນາຍເທົ່ານັ້ນ. ໃນຈຳນວນນັກຮຽນ 110 ຄົນ ໃນປີ 1937 ນັກຮຽນລາວມີພຽງ 44 ຄົນ. ໃນປີ 1953, ທົ່ວປະເທດມີໂຮງຮຽນທັງໝົດ 180 ຫຼັງ ສ່ວນຫຼາຍແມ່ນໂຮງຮຽນມູນລະສຶກສາ, ໂຮງຮຽນປະຖົມມີພຽງ 5 ແຫ່ງ ແລະໂຮງຮຽນມັດທະຍົມ 1 ແຫ່ງ. ຢູ່ໃນເຂດຊົນຊາດຮອດບໍ່ມີໂຮງຮຽນຈັກຫຼັງເລີຍ. ຕາມຕົວເລກຂອງປີ 1923 ຈຳນວນຄົນບໍ່ຮູ້ໜັງສືມີ 96%. ຢູ່ເມືອງຕາໂອຍ ເຊິ່ງມີປະຊາຊົນ 14.000 ຄົນ, ມີຜູ້ຮູ້ອ່ານໜັງສືພຽງຜູ້ດຽວ. ສະນັ້ນ ພວກເຮົາຈຶ່ງເຫັນໄດ້ວ່າການສຶກສາແບບເມືອງຂຶ້ນຂອງຝະລັ່ງ, ເຮັດໃຫ້ສັງຄົມລາວ ແລະວັດທະນະທຳຫຼ້າຫຼັງ, ພາສາລາວກໍຖືກຢຽບຢ່ຳ ເຮັດໃຫ້ຄົນລາວ ຍົກຍ້ອງແລະນັບຖືພາສາຝະລັ່ງ. ທາງດ້ານສະຫວັດດີການຂອງພົນລະເມືອງພວກເຂົາກໍບໍ່ໄດ້ເອົາໃຈໃສ່. ງົບປະມານໃຊ້ເຂົ້າໃນກິດຈະການອະນາໄມ ແລະຕ້ານພະຍາດໃນປີ 1896 ມີພຽງແຕ່ 1,6% ຂອງງົບປະມານແຫ່ງຊາດ. ທົ່ວປະເທດມີໂຮງໝໍໃຫຍ່ພຽງແຕ່ແຫ່ງດຽວທີ່ວຽງຈັນ ແລະໂຮງໝໍນ້ອຍ 4 ແຫ່ງຢູ່ຫຼວງພະບາງ, ທ່າແຂກ, ປາກເຊ ແລະສະຫວັນນະເຂດ. ພະນັກງານແພດທັງໝົດ ມີພຽງແຕ່ 116 ຄົນ ໃນນັ້ນມີແພດຊັ້ນສູງ ເຊິ່ງແມ່ນຄົນຝະລັ່ງ 8 ຄົນ, ແພດຊັ້ນກາງຈາກຫາໂນ້ຍ 14 ຄົນ, ນາງພະດຸງຄັນ 11 ຄົນ, ນອກນັ້ນແມ່ນແພດຊັ້ນຕົ້ນ ແລະພາລະກອນກິນເງິນເບ້ຍ. ແຕ່ເຖິງຈະມີໂຮງໝໍດັ່ງທີ່ກ່າວມານັ້ນກໍຕາມ ອຸປະກອນຮັບໃຊ້ ແລະຢາປິ່ນປົວກໍຍັງຂາດເຂີນ. ໂຮງໝໍດັ່ງກ່າວນັ້ນຮັບໃຊ້ແຕ່ຄົນຝະລັ່ງ ແລະສັກດີນາເທົ່ານັ້ນ, ສ່ວນປະຊາຊົນຜູ້ອອກແຮງງານ ບໍ່ໄດ້ຮັບການປິ່ນປົວເທົ່າທີ່ຄວນ ປ່ອຍໃຫ້ໂລກລະບາດ ແລະລົ້ມຕາຍລົງຢ່າງໜ້າສົມເພດເວດທະນາ. ນອກນັ້ນພວກເຂົາບໍ່ມີແຜນການປາບພະຍາດຕ້ານພະຍຸແຕ່ຢ່າງໃດ ດັ່ງນັ້ນໂລກລະບາດ ແລະ ໂລກຕິດຕໍ່ຈຶ່ງເກີດຂຶ້ນເນື່ອງນິດ ເຊັ່ນ: ໄຂ້ປ່າ, ໂລກອະຫິວາ, ໝາກສຸກ ແລະອື່ນໆ. ອັນຮ້າຍແຮງກວ່ານັ້ນແມ່ນສັງຄົມອັນເປື່ອຍເບື່ອຍ ຍັງໄດ້ນຳເອົາກາມະໂລກມາສູ່ສັງຄົມລາວເຮົາອີກ. ເມື່ອບໍ່ມີທາງເລືອກ, ປະຊາຊົນລາວຈຶ່ງຫັນໄປເພິ່ງໝໍເປົ່າ, ໝໍທົມ ແລະໝໍຜີຢ່າງງົມງວາຍ.

ການປະຕິບັດນະໂຍບາຍລ່າເມືອງຂຶ້ນຂອງຝະລັ່ງ ຍັງໄດ້ຮັກສາລະບອບສັກດີນາ ແລະ ສ້າງໜໍ່ແໜງນາຍທຶນ ເພື່ອເປັນຂໍ້ໄຕ່ໃນການກົດຂີ່ຂູດຮີດ. ຊົນຊັ້ນສັກດີນາ ແລະນາຍທຶນເຫຼົ່ານັ້ນປະກອບເປັນກົງຈັກການປົກຄອງຫຸ່ນ ເພື່ອຂູດຮີດປະຊາຊົນລາວອີກ. ຍ້ອນນະໂຍບາຍລ່າເມືອງຂຶ້ນຂອງຝະລັ່ງເອງສັງຄົມລາວຈຶ່ງຕົກຢູ່ໃນສະພາບເປື່ອຍເປື່ອຍເໜົ່າເຫັນ ເກີດມີການຫຼິ້ນການພະນັນ ແລະ ແມ່ຈ້າງນາງເລັ້ງຂຶ້ນຕາມຕົວເມືອງຕ່າງໆທີ່ມີຝະລັ່ງ, ຊົນຊັ້ນຂຸນນາງແລະນາຍທຶນອາໃສຢູ່. ສະນັ້ນ

ປະຊາຊົນລາວທັງມວນ ເຊື້ອອັນດີງາມຈຶ່ງ ເກີດມີຄວາມເບື່ອໜ່າຍ ແລະກຽດຊັງລະບອບການປົກຄອງ—ດັ່ງກ່າວນັ້ນຫຼາຍທີ່ສຸດ.

## ຄຳຖາມເພື່ອຄົ້ນຄ້ວາ.

1./ ຈົ່ງເວົ້າເຖິງລະບອບການປົກຄອງເຜດ ເມືອງຂຶ້ນຂອງຝະລັ່ງຢູ່ລາວ.

2./ ພວກລ່າເມືອງຂຶ້ນຝະລັ່ງ ໄດ້ດຳເນີນນະໂຍບາຍທາງດ້ານເສດຖະກິດຢູ່ລາວຢ່າງໃດ ?

3./ ສະພາບການສຶກສາ ແລະ ສັງຄົມ ໃນສະໄໝຝະລັ່ງປົກຄອງເປັນແນວໃດ ?

---

ບົດທີ 4.

# ຂະບວນການຕໍ່ສູ້ປະກອບອາວຸດຂອງປະຊາຊົນລາວຕ້ານຜະລັ່ງ

ພາຍຫຼັງທີ່ພວກລ່າເມືອງຂຶ້ນຜະລັ່ງ ໄດ້ເຂົ້າມາຍຶດເອົາແຜ່ນດິນລາວເປັນເມືອງຂຶ້ນແລ້ວ, ພວກເຂົາກໍ່ດຳເນີນນະໂຍບາຍແບ່ງແຍກ, ປາບປາມ, ເກັບເກນ ແລະກົດຂີ່ຂູດຮີດປະຊາຊົນລາວຢ່າງໂຫດຮ້າຍປ່າເຖື່ອນ. ໃນສະພາບດັ່ງກ່າວນັ້ນ, ປະຊາຊົນລາວທີ່ມີມູນເຊື້ອຮັກຊາດ, ຮັກຄວາມເປັນເອກະລາດ ແລະບໍ່ເຄີຍຍອມຈຳນົນ, ໄດ້ລຸກຂຶ້ນຈັບອາວຸດຕໍ່ສູ້ຕ້ານພວກເຂົາຢ່າງອົງອາດ ກ້າຫານ. ຂະບວນຕໍ່ສູ້ໄດ້ລະເບີດຂຶ້ນຢູ່ທຸກຫົນທຸກແຫ່ງ ແຕ່ເໜືອຕະຫຼອດໃຕ້, ແຕ່ທົ່ງພຽງຮອດພູດອຍ. ຂະບວນທີ່ເດັ່ນ ແມ່ນຂະບວນທີ່ນຳພາໂດຍພໍ່ກະດວດ, ຂະບວນອົງແກ້ວອົງກົມມະດຳ ແລະຂະບວນເຈົ້າຟ້າປາໃຈ. ນອກຈາກນັ້ນຍັງມີຂະບວນຂອງເຈົ້າຟ້າເມືອງສິງ ຂະບວນຈານຄູຄຳຕ້ານຜະລັ່ງທີ່ວຽງຈັນ ແລະຂະບວນອື່ນໆ.

## 1. ຂະບວນຕໍ່ສູ້ຂອງພໍ່ກະດວດ ຄ. ສ. 1901 ຫາ 1903.

ພໍ່ກະດວດ ແມ່ນຊົນຊາດລາວເທິງ ເກີດຢູ່ບ້ານຄັນທະຈານ ເມືອງຄັນທະບູລີ ແຂວງສະຫວັນນະເຂດ. ຍ້ອນທົນຕໍ່ການກົດຂີ່ຂູດຮີດຂອງພວກຜະລັ່ງບໍ່ໄດ້ ແລະຍ້ອນນ້ຳໃຈຮັກຊາດແລະຮັກຄວາມເປັນເອກະລາດຢ່າງດູດດື່ມ, ພໍ່ກະດວດຈຶ່ງໄດ້ເຕົ້າໂຮມກຳລັງປະກອບດ້ວຍຊົນຊາດຊົນເຜົ່າຕ່າງໆທີ່ມີແນວຄິດຕ້ານຜະລັ່ງຂຶ້ນທີ່ບ້ານໂພນສີດາ ເມືອງຈຳພອນ ແຂວງສະຫວັນນະເຂດ. ໃນເດືອນພຶດສະພາ ປີ 1901 ຫຼັງຈາກໄດ້ເຝິກແອບກຳລັງໄດ້ດີ ພ້ອມທັງສະສົມອາວຸດ ແລະສະບຽງ ໄດ້ຈຳນວນພໍພຽງແລ້ວ, ພໍ່ກະດວດກໍ່ນຳພາຂະບວນເປີດສາກບຸກໂຈມຕີຜະລັ່ງ ໂດຍໄດ້ຍຶດໂຮງການໄປສະນີ ແລະຄ້າຍທະຫານຢູ່ທີ່ເມືອງສອງຄອນ ອັນເຮັດໃຫ້ທະຫານຜະລັ່ງບາດເຈັບ ແລະລົ້ມຕາຍລົງ ຈຳນວນໜຶ່ງ. ສ່ວນທີ່ເຫຼືອຕາຍກໍ່ປົບໜີເຂົ້າເມືອງສະຫວັນນະເຂດ. ເມື່ອຍຶດທີ່ນັ້ນໄດ້ແລ້ວ, ພໍ່ກະດວດກໍ່ປັບປຸງກຳລັງໃຫ້ເຂັ້ມແຂງ ໂດຍມີອາຈານຜ້າຂາວ ຊື່ວ່າ "ຍອດແກ້ວ" ເປັນທີ່ປຶກສາ. ຜະລັ່ງເຫັນດັ່ງນັ້ນກໍ່ເກີດຄວາມຢ້ານກົວ, ຈຶ່ງໄດ້ສົ່ງທະຫານກອງປາບຈາກໄຕງວຽນປະເທດຫວຽດນາມມາຊ່ວຍ ແຕ່ກໍ່ບໍ່ສຳເລັດ.

ເຖິງວັນທີ 19 ເດືອນ ເມສາ 1902 ຂະບວນຕໍ່ສູ້ໄດ້ເຄື່ອນທັບເຂົ້າປິດລ້ອມເມືອງ ສະຫວັນນະເຂດ ພວກທະຫານຜະລັ່ງມີຄວາມຢ້ານກົວ ຈຶ່ງເອົາກັນໄປເຕົ້າໂຮມຢູ່ທີ່ຄ້າຍຂອງພວກເຂົາທີ່ຕັ້ງຢູ່ກາງເມືອງສະຫວັນນະເຂດ (ບ່ອນໂຮງຮຽນການຊ່າງດຽວນີ້) ການປະທະກັນແຕ່ລະເທື່ອ ເຮັດ

ໃຫ້ທະຫານຝະລັ່ງລົ້ມຕາຍລົງເທື່ອລະເລັກລະໜ້ອຍ. ເມື່ອທະຫານຝະລັ່ງໄດ້ໄປເຕົ້າໂຮມກັນ ຢູ່ໃນຄ້າຍທີ່ອ້ອມດ້ວຍກຳແພງອັນໜາແໜ້ນແລ້ວ, ກໍ່ເອົາປືນໃຫຍ່ມາຕັ້ງໃສ່ຕໍ່ໜ້າປະຕູຄ້າຍລະດົມຍິງມາໃສ່ຂະບວນຕໍ່ສູ້ ເຮັດໃຫ້ກຳລັງຂອງພະກະດວດລົ້ມຕາຍລົງຮອດ 300 ກວ່າຄົນ. ເມື່ອເຫັນວ່າຈະເອົາຊະນະບໍ່ໄດ້ກຳລັງຂອງສັດຕູຫລາຍກວ່າ, ພະກະດວດຈຶ່ງສັ່ງໃຫ້ກອງທະຫານຂອງຕົນຖອຍອອກຈາກຕົວເມືອງ ແລະໄປຕັ້ງຕົວເພື່ອຟື້ນຟູກຳລັງຢູ່ທີ່ທ້ອງລິງກິງ. ພວກຝະລັ່ງໄດ້ເອົາກອງທະຫານມາຕິດຕາມເພື່ອກວາດລ້າງ, ແຕ່ພະກະດວດກໍ່ໄດ້ຕໍ່ສູ້ຢ່າງອົງອາດກ້າຫານ ຈົນໃນທີ່ສຸດກໍ່ຖືກທະຫານຝະລັ່ງຈັບຕົວໄດ້ ແລະຖືກນຳຕົວໄປທຸບຕີທໍລະມານ ຈົນເກືອບເຖິງແກ່ຄວາມຕາຍ, ອັນເປັນອາລະສຸດທ້າຍຂອງຂະບວນພະກະດວດຜູ້ຮັກຊາດ.

## 2. ຂະບວນຕໍ່ສູ້ຂອງອົງແກ້ວ ແລະ ອົງກົມມະດຳ ປີ ຄ. ສ. 1901 ຫາ 1937.

ຄຽງຄູ່ກັບຂະບວນຕໍ່ສູ້ຂອງປະຊາຊົນແຂວງສະຫວັນນະເຂດ ພາຍໃຕ້ການນຳພາຂອງພະກະດວດນັ້ນ, ຢູ່ພາກໃຕ້ຂອງລາວ ແຕ່ສາຍພູຫລວງແດນຫວຽດນາມ ຮອດຝັ່ງຂວາຂອງແມ່ນ້ຳຂອງ ເຂດຈັງຫວັດອຸບົນ, ປະຊາຊົນລາວພາຍໃຕ້ການນຳພາຂອງອົງແກ້ວ ເຊິ່ງແມ່ນຊົນຊາດລາວເທິງເຜົ່າແງະກໍ່ໄດ້ລຸກຂຶ້ນຕໍ່ສູ້ຕ້ານຝະລັ່ງ. ຂະບວນຕໍ່ສູ້ປະກອບດ້ວຍຜູ້ນຳຊົນຊາດຊົນເຜົ່າຕ່າງໆ ຄື: ອົງທອງເຜົ່າລະແວ ອົງລອງ ແລະອົງບອດ ເຜົ່າກະຕູ, ນາງແມ່ເຍຍ ເຜົ່າຕາໂອຍ, ເຂດພື້ນຂອງຂະບວນຕໍ່ສູ້ແມ່ນພູພຽງບໍລະເວນ ເຊິ່ງເປັນເຂດເໝາະແກ່ການປູກພືດອຸດສາຫະກຳຕ່າງໆ ດັ່ງນັ້ນພວກຝະລັ່ງຈຶ່ງໄດ້ວາງແຜນສ້າງນິຄົມກະເສດຂະໜາດໃຫຍ່ຂຶ້ນ ໂດຍໃຊ້ແຮງງານປະຊາຊົນທ້ອງຖິ່ນ, ຈຸດໜັກແມ່ນພວກເຂົາຢາກສ້າງໃຫ້ເປັນຖານທັບຍຸດທະສາດສຳຄັນ ເພື່ອຄວບຄຸມພາກໃຕ້ອິນດູຈີນ. ແຕ່ວ່າປະຊາຊົນໃນຂົງເຂດນີ້ບໍ່ຍອມກົ້ມຫົວໃຫ້ຝະລັ່ງ ຈຶ່ງໄດ້ລຸກຂຶ້ນຕໍ່ສູ້ຢ່າງອົງອາດກ້າຫານ, ຈົນພວກຝະລັ່ງຂະໜານນາມວ່າ "ພວກບໍ່ຍອມຈຳນົນ", ສັກດິນາຈຳປາສັກເອີ້ນຂະບວນນີ້ວ່າ "ຂ້າຂັດ" (ຂ້າຄົນບໍ່ຍອມເສຍສ່ວຍ). ການຕໍ່ສູ້ໄດ້ລະເບີດຂຶ້ນໃນວັນທີ 14 ສິງຫາ ປີ 1901 ທີ່ອັດຕະປື, ໄດ້ເຮັດໃຫ້ຝະລັ່ງລົ້ມຕາຍຈຳນວນຫລວງຫລາຍ ໃນນັ້ນມີນາຍທະຫານຊັ້ນຮ້ອຍຕີຜູ້ໜຶ່ງ ຊື່ວ່າ ຣົງລີ ຖືກຂ້າຕາຍຢູ່ທີ່ເຊປຽນ ແລະຮ້ອຍຕີ ປີແອ ກໍ່ຖືກຂ້າຕາຍຢູ່ບ້ານກະສົບ. ໃນຕົ້ນເດືອນ ຕຸລາ ປີດຽວກັນພວກຝະລັ່ງກໍ່ໄດ້ເລີ່ມປາບປາມຂະບວນຕໍ່ສູ້, ກວາດລ້າງໜ່ວຍຂອງຂະບວນທີ່ຕັ້ງຢູ່ບ້ານໜອງຫີນແຂວງສາລະວັນ. ການຕໍ່ສູ້ໄດ້ແກ່ຍາວມາຮອດເດືອນ ເມສາ 1902 ພວກຝະລັ່ງຈຶ່ງສາມາດຍຶດບ້ານໜອງຫີນໄດ້, ກຸ່ມຜູ້ນຳຂະບວນຈຶ່ງແຍກຍ້າຍກັນໄປເປັນກອງຫລອນ. ຢູ່ພູລະເພີນ (ຢູ່ພາກຕາເວັນອອກສຽງເໜືອຂອງເມືອງສາລະວັນ) ຢູ່ເຂດນີ້ຂະບວນຕໍ່ສູ້ນຳໂດຍອົງທອງ ໄດ້ທຳການເຄື່ອນໄຫວ

ແລະທອນຕີ ເພື່ອບັ່ນທອນກຳລັງຂອງຝະລັ່ງທີ່ເຄື່ອນໄຫວໄປມາ ແຕ່ພູກະແຕທາທົ່ງຫວາຍ. ຂະບວນຕໍ່ສູ້ໄດ້ຕ້ານການບຸກໂຈມຕີຂອງທະຫານຝະລັ່ງຢ່າງທໍລະຫົດອົດທົນ ເປັນເວລາ ໔ ປີ ຈຶ່ງໄດ້ຖອຍພີ້ໄປຕັ້ງໝັ້ນແຫ່ງອື່ນ.

ຕົ້ນປີ 1906 ພວກລ່າເມືອງຂຶ້ນຝະລັ່ງ ໄດ້ລະດົມກຳລັງ ແລະພາຫານະສົງຄາມບຸກໂຈມຕີ ທີ່ໝັ້ນຂອງຂະບວນຕໍ່ສູ້ທາງເຂດຝັ່ງຊ້າຍຂອງນ້ຳເຊກອງ ແລະພູກະແຕໂດຍສົມທົບປິດລ້ອມ ທາງດ້ານເສດຖະກິດ, ແຕ່ຂະບວນຕໍ່ສູ້ໄດ້ແຍກຍ້າຍກັນອອກເປັນຈຸເປັນໜ່ວຍ ເພື່ອຫຼີກເວັ້ນການປິດລ້ອມ , ແລະການບຸກໂຈມຕີດ້ວຍກຳລັງຫຼວງຂອງສັດຕູ. ການປ່ຽນຍຸດທະວິທີດັ່ງກ່າວນັ້ນ ໄດ້ເຮັດໃຫ້ແຜນການປິດລ້ອມໂຈມຕີຂອງຝະລັ່ງບໍ່ໄດ້ຮັບຜົນ.

ເມື່ອເຫັນວ່າການໃຊ້ກຳລັງອາວຸດບໍ່ໄດ້ຜົນ ພວກເຂົາກໍ່ຫັນມາໃຊ້ເລ່ກົນຊື້ຈ້າງຈອບອອຍ, ເພີ່ມທະວີການເຄື່ອນໄຫວນັກສືບສອດແນມ ເພື່ອລອບສັງຫານຜູ້ນຳໃນຂະບວນຕ່າງໆ. ໃນປີ 1907 ພວກເຂົາໄດ້ໃຊ້ລູກແຫຼ້ງຕີນມື ຜູ້ບອກໄດ້ໃຊ້ຟັງ, ໃຫ້ໄປໄກ່ເກ່ຍເອົາອົງແກ້ວເຂົ້າຮ່ວມເຈລະຈາກັນຄືໃຊ້ເຈົ້າລາດສະດາໄນ (ພໍ່ເຈົ້າບຸນອຸ້ມ) ເຊິ່ງເປັນສຽວກັບອົງແກ້ວໃຫ້ໄປໄກ່ເກ່ຍ ແລະເປີດການເຈລະຈາສະຫງົບເສິກ ແລະລົດຜ່ອນການເກັບເກນຈາກປະຊາຊົນລາວເທິງ. ກ່ອນຈະໄປເຈລະຈາກັບຝະລັ່ງ, ອົງແກ້ວໄດ້ແຕ່ງໃຫ້ອົງກົມມະດຳເປັນຜູ້ນຳພາແທນ ເພື່ອຮັກສາໝັ້ນ. ກອງປະຊຸມເຈລະຈາໄດ້ເປີດຂຶ້ນທີ່ວັດຮ້າງແຫ່ງໜຶ່ງກາງເມືອງສາລະວັນ ລະຫວ່າງອົງແກ້ວຜູ້ນຳຂະບວນຕໍ່ສູ້ຂອງປະຊາຊົນ ແລະຟັງເດີເລຕາງໜ້າຝະລັ່ງ. ໃນເວລາເຈລະຈາກັນຢູ່ນັ້ນ ຟັງເດີເລໄດ້ສອຍໂອກາດຕອນອົງແກ້ວເຜີຕົວ, ດຶງເອົາປືນສັ້ນມາຍິງອົງແກ້ວຈົນເສຍຊີວິດ (ປີ 1907) ພວກເຂົາຫວັງວ່າໃນເມື່ອຄາດຕະກຳຜູ້ນຳແລ້ວຈະດັບມອດຂະບວນຕໍ່ສູ້ຂອງປະຊາຊົນໄດ້.

ຫຼັງຈາກອົງແກ້ວໄດ້ຖືກລອບສັງຫານແລ້ວ ອົງກົມມະດຳໄດ້ສືບຕໍ່ນຳພາປະຊາຊົນຕໍ່ສູ້. ອົງກົມມະດຳເປັນຜູ້ນຳທີ່ມີສາຍຕາກວ້າງໄກ, ມີຄວາມສາມາດໃນການຈັດຕັ້ງນຳພາໄດ້ດີສົມຄວນ, ໄດ້ຂະຫຍາຍຕິດຕໍ່ພົວພັນກັບພີ່ນ້ອງລາວລຸ່ມ ແລະປະຊາຊົນຫວຽດນາມອີກ. ພາຍໃຕ້ການນຳ ຂອງອົງກົມມະດຳ, ຂະບວນຕໍ່ສູ້ຂອງປະຊາຊົນລາວພາກໃຕ້ໄດ້ເຕີບໃຫຍ່ເຂັ້ມແຂງກວ່າເກົ່າ. ອົງກົມມະດຳໄດ້ສ້າງຖານໝັ້ນ ແລະກຳລັງປ້ອງກັນໄວ້ຢ່າງເໜັ້ນໜາ; ກຳລັງຕໍ່ສູ້ຂອງກົມມະດຳ ໄດ້ຈັດຕັ້ງການຜະລິດທາງກຸ້ມຕົນເອງເຊັ່ນ: ຜະລິດປືນແກັບ, ປືນເພີງ, ພ້ອມກັນນັ້ນກໍ່ໄດ້ຈັດຕັ້ງກັນໄປຊື້ເກືອ, ປືນ ແລະເຄື່ອງໃຊ້ອັນຈຳເປັນອື່ນໆຈາກຝັ່ງໄທ.

ຫຼັງຈາກບຸກໂຈມຕີຫຼາຍຄັ້ງບໍ່ໄດ້ຮັບຜົນສຳເລັດແລ້ວ, ໃນປີ 1934 ສັດຕູກໍ່ເລີ່ມປະຕິບັດນະໂຍບາຍປິດລ້ອມທາງດ້ານເສດຖະກິດຢ່າງຮອບດ້ານ ພ້ອມກັນນັ້ນກໍ່ດຳເນີນການກວາດລ້າງ ຢ່າງຂະ

ພາດໃຫຍ່. ພວກເຂົາໄດ້ເຜົາຜານເຮືອນຊານບ້ານຊ່ອງຢ່າງຮ້າຍກາດ ສົມທົບການໃຊ້ນັກສືບສອດແນມເຂົ້າໄປທຳລາຍສະພາບການ.

ຮອດຕົ້ນປີ 1936 ພວກລ່າເມືອງຂຶ້ນຝະລັ່ງໄດ້ລະດົມກຳລັງຈາກເຂດຕ່າງໆທົ່ວອິນດູຈີນສຸມໃສ່ເຂດພູພຽງບໍລະເວນ. ໃນຕົ້ນເດືອນກັນຍາປີດຽວກັນ, ພວກເຂົາກໍໄດ້ເປີດການບຸກໂຈມຕີຂະໜາດໃຫຍ່ເຂົ້າທົ່ວພູພຽງ. ໃນທີ່ສຸດອົງກົມມະດຳໄດ້ເສຍຊີວິດໃນຂັ້ນຮົບປ້ອງກັນໃຈກາງໜ້ານັ້ນ; ສີທົນກົມມະດຳຜູ້ເປັນລູກຊາຍຖືກຈັບ. ແລະຂະບວນຕໍ່ສູ້ຢູ່ພາກໃຕ້ຂອງລາວກໍຍຸບຍອບລົງ.

## 3. ຂະບວນລຸກຮືຂຶ້ນຂອງເຈົ້າຟ້າປາໄຈ ຄ. ສ. 1918 ຫາ 1922.

ໃນເວລາທີ່ມີການຕໍ່ສູ້ຂອງປະຊາຊົນລາວທາງພາກໃຕ້ຢູ່ນັ້ນ, ຢູ່ທາງພາກເໜືອກໍໄດ້ມີຂະບວນຕໍ່ສູ້ລະເບີດຂຶ້ນຢ່າງເນື່ອງນິດລຽນຕິດຫຼາຍຂະບວນ ເດັ່ນກວ່າໝູ່ແມ່ນຂະບວນລຸກຮືຂອງພີ່ນ້ອງລາວສູງໂດຍການນຳຂອງເຈົ້າຟ້າປາໃຈ. ຊົນຊາດລາວສູງມີພູມເຊື້ອດຸໝັ່ນ, ມີອາຊີບໃນການເຮັດໄຮ່ໂດຍສະເພາະແມ່ນໄຮ່ຢາຝິ່ນ. ເນື່ອງຈາກວ່າຢາຝິ່ນເປັນສິນຄ້າທີ່ມີລາຄາແພງຢູ່ຕະຫຼາດໂລກ, ພວກລ່າເມືອງຂຶ້ນຝະລັ່ງຈຶ່ງເກັບເກນເອົາຢາຝິ່ນນຳພີ່ນ້ອງລາວສູງຢ່າງໜັກໜ່ວງ. ແຕ່ລະຄອບຄົວ ຈະແມ່ນໄດ້ເຮັດໄຮ່ຢາຝິ່ນຫຼືບໍ່ໄດ້ເຮັດກໍຕາມກໍຈຳຕ້ອງໄດ້ເສຍພາສີຢາຝິ່ນ 2 ກ.ລ. ຕໍ່ປີ. ອັນໄດ້ສ້າງຄວາມຄຽດແຄ້ນເພີ່ມໃຈໃຫ້ແກ່ພີ່ນ້ອງລາວສູງ ດ້ວຍເຫດນັ້ນຈຶ່ງມີຂະບວນຕໍ່ສູ້ເກີດຂຶ້ນ. ຂະບວນຕໍ່ສູ້ໄດ້ລະເບີດຂຶ້ນຢູ່ເຂດເມືອງຊ່ອນ ແຂວງຫົວພັນໃນທ້າຍປີ 1918 ເລີ່ມດ້ວຍຮູບການໄປເປັນກູ້ລີ ແລະບໍ່ຍອມເສຍພາສີຢາຝິ່ນ. ເຖິງເດືອນ ຕຸລາ 1918 ຂະບວນປະກອບອາວຸດຕໍ່ສູ້ໄດ້ລະເບີດຂຶ້ນພາຍດຽວໃນທົ່ວທຸກແຂວງທາງພາກເໜືອຂອງລາວ ໂດຍສະເພາະຢູ່ແຂວງຊຽງຂວາງ, ຫົວພັນ, ຫຼວງພະບາງ ແລະພາກຕາເວັນຕົກສຽງເໜືອຫວຽດນາມ. ເມື່ອເປັນດັ່ງນັ້ນ, ພວກລ່າເມືອງຂຶ້ນຝະລັ່ງຈຶ່ງໄດ້ລະດົມກຳລັງທະຫານກອງປາບຫຼາຍກອງ ຈາກພາກເໜືອຫວຽດນາມມາຊ່ວຍ.

ແຕ່ກຳລັງຂອງຂະບວນການຕໍ່ສູ້ໄດ້ນຳໃຊ້ຍຸດທະວິທີຕີແບບກອງຫຼອນຢ່າງຄ່ອງແຄ້ວຫຼັກແຫຼມ , ສວຍໃຊ້ພູມປະເທດພູຜາປ່າດົງ ແລະຄວາມຊົມເຄີຍກັບທ້ອງຖິ່ນ ເພື່ອຈັດວາງກຳລັງ ເຮັດໃຫ້ສັດຕູຕົກສະທ້ານຢ້ານກົວ.

ໃນລະດູແລ້ງປີ 1919–1920 ກຳລັງການຕໍ່ສູ້ໄດ້ສ້າງທີ່ໝັ້ນສຳຄັນໄດ້ຫຼາຍບ່ອນຢູ່ເຂດສົບສານ ເມືອງຊ່ອນ, ພູເລີຍ, ພູຫຼວງ ແລະລຽບຕາມແຄມຝັ່ງຂວາຂອງແມ່ນ້ຳອູ. ສະພາບການຂະຫຍາຍຕົວຂອງຂະບວນ ແລະພູມສັນຖານຂອງພາກເໜືອໄດ້ເຮັດໃຫ້ພວກລ່າເມືອງຂຶ້ນຝະລັ່ງ ຕ້ອງປະເຊີນໜ້າກັບຄວາມຫຍຸ້ງຍາກຫຼາຍປະການ, ກົງກັນຂ້າມ ພູສູງ ແລະເຫວຊັນໄດ້ເປັນຂໍ້ສະດວກ ໃຫ້ຂະ

ບ່ອນຕໍ່ສູ້ ເພື່ອພູມໃຊ້ຍຸດທະວິທີຕີແບບກອງຫຼອນ, ເຂົາເຈົ້າມີຄວາມຊຳນານໃນການທຽວທາງລັດແລະ ຂຶ້ນລົງຕາມພູຜາຊັນ.

ເຖິງປີ 1920 ກອງບັນຊາການທະຫານຝະລັ່ງຢູ່ອິນດູຈີນໄດ້ລະດົມກຳລັງທະຫານພິເສດ ຂອງຝະລັ່ງຈາກແຫ່ງຕ່າງໆ ເຂົ້າມາປາບປາມພາຍໃຕ້ການບັນຊາຂອງພັນຕີ ອັງເຊີລີ. ຕົ້ນປີ 1920ໄດ້ມີການສູ້ຮົບຢ່າງດຸເດືອດຢູ່ເຂດບ້ານຂານ, ຜາແດງ, ພູເລີຍ ແລະປ່າຄາ. ພັນຕີ ອັງເຊີລີໄດ້ສົ່ງເອົາທະຫານຈາກວຽງມາເພີ່ມ, ແຕ່ການເຄື່ອນທີ່ຕາມເສັ້ນທາງນ້ຳໂນ້ມນ ເລີຍກີດຂະບວນຕໍ່ສູ້ລົດຕີຈົນບໍ່ມາຮອດຊຽງຂວາງໄດ້.

ແຕ່ປີ 1921–1922 ການເຄື່ອນໄຫວຂອງກຳລັງການຕໍ່ສູ້ຍັງກະຈາຍໄປຢູ່ທົ່ວທຸກແຫ່ງ ເຮັດໃຫ້ຝະລັ່ງເອົາຊະນະໄດ້ຍາກ. ເມື່ອຝະລັ່ງພົດກຳລັງຈະເອົາຊະນະໄດ້ແລ້ວ, ພວກເຂົາຈຶ່ງຫັນທິດມາໃຊ້ເລ່ກົນໂດຍໄດ້ຈັດສົ່ງລູກແຫຼ້ງຕີນມືເຂົ້າໄປຊ່ອນຕົວຢູ່ໃນກຸ່ມແກວຂອງຂະບວນ ເພື່ອລອບສັງຫານເຈົ້າຟ້າປາໃຈ. ໃນທີ່ສຸດເຈົ້າຟ້າປາໃຈກໍ່ຖືກລອບສັງຫານທີ່ເມືອງເທີນ ແຂວງຫຼວງພະບາງ– ໃນວັນທີ 17 ພະຈິກ 1922. ນັບແຕ່ນັ້ນມາຂະບວນຂອງເຈົ້າຟ້າປາໃຈກໍ່ຄ່ອຍມຸດມອດລົງ.

4– <u>ຂະບວນລຸກຮື້ຂຶ້ນອື່ນໆ</u> :

ນອກຈາກຂະບວນທີ່ກ່າວມາຂ້າງເທິງນັ້ນແລ້ວ ຍັງມີຂະບວນລຸກຮື້ຂຶ້ນຂອງເຈົ້າຟ້າເມືອງສິງ ຢູ່ພາກເໜືອ ແລະຂະບວນຂອງນາຍຄູຄຳ ຢູ່ພາກກາງວຽງຈັນ.

– ຂະບວນລຸກຮື້ຂຶ້ນຂອງເຈົ້າຟ້າເມືອງສິງຢູ່ແຂວງຫຼວງນ້ຳທາ ພາກເໜືອຂອງລາວ. ຂະບວນການນີ້ເກີດຂຶ້ນຢູ່ເມືອງສິງ ເຊິ່ງເປັນເມືອງໜຶ່ງຕັ້ງຢູ່ຊາຍແດນລາວ–ພະມ້າ ໂດຍມີແມ່ນ້ຳຂອງເປັນຊາຍແດນ. ເມື່ອຝະລັ່ງມາເອົາປະເທດລາວເປັນເມືອງຂຶ້ນແລ້ວ ເຂົາກໍ່ສົ່ງ ວິຖີ ໄປເປັນຜູ້ຕາງໜ້າຝະລັ່ງຢູ່ທີ່ນັ້ນ. ໃນຂະນະທີ່ວິຖີປະຈຳການຢູ່ທີ່ນັ້ນ ເຂົາໄດ້ໃຊ້ອຳນາດທີ່ໂຫດຮ້າຍປ່າເຖື່ອນກົດຂີ່ຂູດຮີດຊາວລາວ ເຜົ່າລື້ດ້ວຍການເກັບພາສີ ແລະເກັບເກນຕ່າງໆນາໆ ເຮັດໃຫ້ປະຊາຊົນໃນທີ່ນັ້ນ ເກີດຄວາມຄຽດແຄ້ນພາກັນລຸກຂຶ້ນເຕົ້າໂຮມກຳລັງທີ່ແຄວ້ນຊານ ປະເທດພະມ້າ ພາຍໃຕ້ການນຳພາຂອງເຈົ້າຟ້າເມືອງສິງ ແລ້ວຍົກເຂົ້າມາຕີເມືອງສິງເພື່ອລົງໂທດ ວິຖີ ຜູ້ຕາງໜ້າຝະລັ່ງຢູ່ທີ່ນັ້ນ, ຕໍ່ມາ ວິຖີຈຶ່ງວາງກົນອຸບາຍຫຼອກລວງເອົາເຈົ້າຟ້າເມືອງສິງມາຂ້າ ໂດຍໃຊ້ຄົນໄປເຊີນເອົາເຈົ້າຟ້າຈາກແຄວ້ນຊານມາເຈລະຈາກັນ ເພື່ອລົດຜ່ອນຄວາມຕຶງຄຽດ. ເຈົ້າຟ້າເມືອງສິງບໍ່ຮູ້ກົນອຸບາຍນັ້ນຈຶ່ງມາຕາມຄຳເຊີນ, ເຈົ້າຟ້າຈຶ່ງຖືກທະຫານຝະລັ່ງຈັບຕົວໃນເວລາທີ່ກຳລັງຮັບປະທານອາຫານ ຢູ່ນັ້ນ ແລ້ວສົ່ງຕົວເຈົ້າຟ້າລົງມາກັກຂັງຢູ່ວຽງຈັນ. ເຖິງຢ່າງໃດກໍ່ຕາມ ເຈົ້າຟ້າໄດ້ນິພົກໄຫລ ເອົາຕົວຫຼົບໜີຈາກທີ່ຄຸມຂັງຂຶ້ນໄປລີ້ຊ່ອນຢູ່ເກົາຄັງ ໃນດິນແດນປະເທດພະມ້າ.

- ຂະບວນລຸກຮື້ຂຶ້ນຂອງນາຍຄູຄຳທີ່ວຽງຈັນ. ໃນຂະນະທີ່ຂະບວນຕໍ່ສູ້ຂອງປະຊາຊົນລາວ ຕ້ານຝະລັ່ງພວມລະເບີດຂຶ້ນຢູ່ພາກເໜືອ, ຢູ່ພາກໃຕ້ແລະພາກກາງຄືວຽງຈັນ ກໍມີຂະບວນລຸກຮື້ຂຶ້ນເຊັ່ນດຽວກັນ; ຂະບວນການຕໍ່ສູ້ນັ້ນແມ່ນຂະບວນຂອງປະຊາຊົນຊາວບ້ານທົ່ງ ເຊິ່ງນຳພາໂດຍນາຍຄູຄຳ. ນາຍຄູຄຳແມ່ນຄົນລາວຜູ້ມີນ້ຳໃຈຮັກຊາດ, ກຽດຊັງຝະລັ່ງ. ຫຼັງຈາກຮຽນຢູ່ໂຮງຮຽນວັດຈົນຈົບ - ແລ້ວກໍໄດ້ໄປເປັນຄູສອນຢູ່ໂຮງຮຽນວັດບ້ານທົ່ງ. ໃນເວລາເປັນຄູສອນຢູ່ນັ້ນ ທ່ານໄດ້ປຸກລະດົມປະຊາຊົນໃນຂົງເຂດນັ້ນໃຫ້ມີຄວາມຮັກຊາດ, ຮັກຄວາມເປັນທຳ, ມີນ້ຳໃຈຄຽດແຄ້ນ ແລະ ກຽດຊັງຝະລັ່ງ. ເມື່ອເປັນດັ່ງນັ້ນ ທ່ານກໍໄດ້ນຳພາປະຊາຊົນຕໍ່ຕ້ານດ້ວຍຮູບການທີ່ບໍ່ຍອມເສຍພາສີແລະບໍ່ຍອມໄປເປັນກຸລີ ຊ້ຳບັງພາກັນລັດຕີ ແລະຂ້າເຈົ້າໜ້າທີ່ຂອງຝະລັ່ງອີກ. ເຫດການເປັນດັ່ງນັ້ນກອງບັນຊາການຝະລັ່ງຢູ່ວຽງຈັນຈຶ່ງສົ່ງໃຫ້ທະຫານໄປກວາດລ້າງ ແລະເກັບກວາດເອົາຊັບສົມບັດ ຂອງປະຊາຊົນໃນຂົງເຂດນັ້ນຈົນໝົດ. ເມື່ອນາຍຄູຄຳເຫັນເຫດການອັນບໍ່ດີນັ້ນ ຈຶ່ງໄດ້ເຕົ້າໂຮມກຳລັງ-ຂຶ້ນທີ່ບ້ານທາດພັນຊາ ເພື່ອຕໍ່ສູ້ຄືນ. ພໍຮອດກາງເດືອນພະຈິກ 1920 ຂະບວນຂອງປະຊາຊົນ ກໍມຸ່ງໜ້າເຂົ້າສູ່ຕົວເມືອງວຽງຈັນ ເພື່ອຈະດັບສູນທະຫານຝະລັ່ງໃຫ້ສົມແຄ້ນ. ເມື່ອຂະບວນຜ່ານໄປຮອດບ້ານໃດປະຊາຊົນບ້ານນັ້ນ ກໍໃຫ້ຄວາມສະໜັບສະໜູນ ແລະປະກອບສ່ວນນຳ. ຝ່າຍກອງບັນຊາການທະຫານຝະລັ່ງເຫັນດັ່ງນັ້ນ ຈຶ່ງແຕ່ງກອງທະຫານໄປລັດທາງ ແລະຍິງປືນສຸ່ມໃສ່ທຳລາຍຂະບວນໃຫ້ແຕກສະຫຼາຍໄປ. ສ່ວນນາຍຄູຄຳກໍຖືກຈັບຕົວໄປ ໃນຂະນະທີ່ກະສູນປືນຂາດເຂີນຢູ່ນັ້ນ ໂດຍນຳຕົວໄປຂັງໄວ້ໃນຄຸກທີ່ວຽງຈັນ.

ຫຼັງຈາກນັ້ນ ຝະລັ່ງຈຶ່ງເອົາທ່ານໄປປົວຢາດແພທີ່ໂຮງໝໍມະໂຫສົດ. ນາຍຄູຄຳໄດ້ສວຍໂອກາດໃນຂະນະທີ່ນາຍຄຸມຝະລັ່ງເຜີຕົວນັ້ນ ທ່ານກໍໂດດໜີ ແລ້ວເອົາໄມ້ຊາງລຳພົ້ງ ລອຍຂ້າມຂອງໄປຂຶ້ນທ່າບ້ານກອງນາງ.

ການວິວັດຕໍ່ສູ້ຂອງປະຊາຊົນລາວຫຼາຍຂະບວນດັ່ງກ່າວມານັ້ນ ສະແດງໃຫ້ເຫັນນູນເຊື້ອອົງອາດກ້າຫານບໍ່ຍອມຈຳນົນສັດຕູ ເຖິງສັດຕູຈະມີກຳລັງພົນ ແລະກຳລັງອາວຸດຫຼາຍກວ່າກໍ່ຕາມ, ປະຊາຊົນລາວກໍໄດ້ຕໍ່ສູ້ຢ່າງພິລະອາດຫານ. ການຕໍ່ສູ້ຂອງປະຊາຊົນລາວສຸດທີ່ທະນົງອົງອາດ ແຕ່ສຸດທ້າຍຂະບວນຕ່າງໆກໍຖືກສັດຕູທຳລາຍໃຫ້ຍຸບຍອບລົງ. ຍ້ອນເຫດຜົນທີ່ວ່າ ການຕໍ່ສູ້ຂອງປະຊາຊົນ ລ້ວນແຕ່ລະເບີດຂຶ້ນເອງ ຂາດການນຳພາອັນຖືກຕ້ອງ, ຂາດການພົວພັນຮ່ວມມື ເຊິ່ງກັນແລະກັນລະຫວ່າງຊົນຊາດຊົນເຜົ່າທີ່ຮ່ວມຊາຕາກຳດຽວກັນ. ຜູ້ນຳຂະບວນສ່ວນຫຼາຍແມ່ນເຈົ້າກົກເຈົ້າເຫຼົ່າທີ່ມີຄວາມຂັດແຍ້ງທາງດ້ານສິດທິຜົນປະໂຫຍດຕົນເອງກັບຝະລັ່ງ, ກຳລັງການຕໍ່ສູ້ຂອງແຕ່ລະຂະບວນ ຍັງບໍ່ທັນເຂັ້ມແຂງພຽງພໍ ຂາດການຈັດຕັ້ງ, ອາວຸດທີ່ປະກອບກໍລ້ວນແຕ່ແມ່ນອາວຸດພົນເມືອງທີ່ຫຼ້າສະໄໝ.

ດັ່ງນັ້ນ ການຕໍ່ສູ້ຂອງປະຊາຊົນເຮົາ ຈຶ່ງບໍ່ໄດ້ຮັບໄຊຊະນະ ແຕ່ການຕໍ່ສູ້ນັ້ນ ກໍ່ໄດ້ກາຍເປັນມູນເຊື້ອອັນດີ ທີ່ຈາລຶກໄວ້ໃນຈິດໃຈຂອງປະຊາຊົນລາວທົ່ວຊາດ.

## ຄຳຖາມເພື່ອຄົ້ນຄວ້າ.

1. ອັນໃດເປັນສາຍເຫດຕົ້ນຕໍ ຂອງປະຊາຊົນລາວ ຕ້ານຈັກກະພັດລ່າເມືອງຂຶ້ນຝະລັ່ງ ?
2. ຂະບວນການຕໍ່ສູ້ຂອງປະຊາຊົນລາວ ມີຂະບວນໃດແດ່ທີ່ເດັ່ນ ? ຈົ່ງຍົກເອົາຂະບວນທີ່ເດັ່ນຂະບວນໃດຂະບວນໜຶ່ງ ມາອະທິບາຍເປັນຕົວຢ່າງ ?
3. ການຕໍ່ສູ້ຂອງປະຊາຊົນລາວ ໄດ້ໃຫ້ບົດຮຽນ ແລະມີມູນເຊື້ອແນວໃດ ?

---

24/VII
ຫ້າມຈຳໜ່າຍ

## ບົດທີ 5.

# ການສ້າງຕັ້ງພັກກອມມູນິດອິນດູຈີນ.

### 1. ການກຳເນີດຂອງພັກກອມມູນິດອິນດູຈີນ.

ໃນສະພາບທີ່ພວກລ່າ ເມືອງຂຶ້ນຝຣັ່ງ ໄດ້ເພີ່ມທະວີການປາບປາມ ແລະກົດຂີ່ຂູດຮີດປະຊາຊົນອິນດູຈີນ ນັບມື້ນັບໂຫດຮ້າຍປ່າເຖື່ອນຢູ່ນັ້ນ, ໄດ້ເກີດມີຂະບວນການຕໍ່ຕ້ານເກີດຂຶ້ນຢ່າງຟົດເດືອດ. ແຕ່ການຕໍ່ສູ້ນັ້ນ ມີລັກສະນະກະແຈກກະຈາຍ ຈຶ່ງບໍ່ໄດ້ຮັບໄຊຊະນະ. ເພື່ອຮັບປະກັນໄຊຊະນະຂັ້ນເດັດຂາດ, ຂະບວນການຕໍ່ສູ້ຈຶ່ງເຫັນມີຄວາມຈຳເປັນ ຕ້ອງມີການນຳພາຂອງພັກການເມືອງໃຫ້ຖືກຕ້ອງ.

ໃນປີ 1911 ຫງວຽນອ້າຍກວັກ (ໂຮ່ຈີມິນ) (1890-1969) ຜູ້ເຊິ່ງກໍ່ກຳເນີດມາຈາກຄອບຄົວປັນຍາຊົນທຸກຍາກຫວຽດນາມ ໄດ້ຊອກຫາຮ່ຳຮຽນເອົາແນວທາງກູ້ຊາດຢູ່ຕ່າງປະເທດ , ໂດຍສະເພາະຢູ່ປະເທດຝຣັ່ງ. ຢູ່ທີ່ນັ້ນ ທ່ານໄດ້ເຂົ້າຮ່ວມໃນຂະບວນຊາວໜຸ່ມກຳມະກອນຝຣັ່ງ, ໄດ້ຂຽນຂ່າວກ່ຽວກັບການກົດຂີ່ຂູດຮີດຢ່າງໂຫດຮ້າຍປ່າເຖື່ອນຂອງພວກລ່າເມືອງຂຶ້ນຝຣັ່ງໃນອິນດູຈີນ ແລະໄດ້ສົ່ງປຶ້ມ, ໜັງສືພິມກ່ຽວກັບທິດສະດີການປະຕິວັດເຂົ້າມາເຜີຍແຜ່ໃນອິນດູຈີນຢ່າງປິດລັບ. ທ່ານໄດ້ເຄື່ອນໄຫວຢ່າງຂະຫຍັນຫ້າວຫັນນຳພັກກອມມູນິດຝຣັ່ງ. ຫຼັງຈາກນັ້ນ ທ່ານໄດ້ເດີນທາງໄປສະຫະພາບສາທາລະນະລັດ ສັງຄົມນິຍົມໂຊວຽດ ເຊິ່ງເປັນລັດສັງຄົມນິຍົມທຳອິດໃນໂລກ. ທີ່ກຸງໂມດສະກູ ຫງວຽນອ້າຍກວັກ ໄດ້ຮ່ຳຮຽນເອົາແນວທາງການປະຕິວັດຂອງທ່ານ ເລນິນ ແລະດຳເນີນການເຄື່ອນໄຫວຢ່າງຫ້າວຫັນກັບບັນດານັກກອມມູນິດໂຊວຽດ ແລະໄດ້ເຂົ້າຮ່ວມກອງປະຊຸມສາກົນຫຼາຍເທື່ອ, ໂດຍສະເພາະແມ່ນກອງປະຊຸມຄັ້ງທີ 5 ຂອງກອມມູນິດສາກົນ.

ຮອດປີ 1924 ທ່ານໄດ້ເດີນທາງມາປະເທດຈີນ ແລະໄດ້ສ້າງຕັ້ງສະມາຄົມ "ຊາວໜຸ່ມຫວຽດນາມປະຕິວັດ" ຢູ່ ກວາງເຈົາ ປະເທດຈີນ ແລະໄດ້ກໍ່ສ້າງນັກປະຕິວັດ ເພື່ອເປັນຫຼັກແຫຼ່ງຂອງສະມາຄົມດັ່ງກ່າວນັ້ນ. ຫຼັງຈາກນັ້ນ ທ່ານກໍໄດ້ຈັດສົ່ງພະນັກງານປະຕິວັດເຂົ້າມາອິນດູຈີນ ເພື່ອເຜີຍແຜ່ລັດທິ ມາກ-ເລນິນ ແລະນຳພາປະຊາຊົນຕໍ່ສູ້. ໃນຂະນະທີ່ເຄື່ອນໄຫວຢູ່ຕ່າງປະເທດ ( ປີ 1911-1924 ) ນັ້ນ, ສະພາບການຢູ່ອິນດູຈີນ ມີອັນປ່ຽນແປງ, ຂະບວນກຳມະກອນກໍເຕີບໃຫຍ່ຂະຫຍາຍຕົວ, ອັນເປັນເງື່ອນໄຂສະດວກໃຫ້ແກ່ການລຸກຮື້ຂຶ້ນຍຶດອຳນາດ. ໃນປີ 1929 ຢູ່ຫວຽດນາມໄດ້ມີການຈັດຕັ້ງກອມມູນິດປະກົດຂຶ້ນ ຢູ່ທົ່ວທຸກແຫ່ງ.

ໃນວັນທີ 3 ກຸມພາ 1930 ໂດຍໄດ້ຮັບການແຕ່ງຕັ້ງຈາກຄະນະບໍລິຫານງານສູນກາງ ກອມມູນິດສາກົນ, ຫງວຽນອ້າຍກວັກ, ໄດ້ຮຽກໂຮມນັກປະຕິວັດຢູ່ອິນດູຈີນ ແລ້ວເປີດກອງປະຊຸມຂຶ້ນທີ່ຮົງ

ກິງ, ເປັນເວລາ 3 ວັນ, ໂດຍທ່ານເອງເປັນປະທານ. ກອງປະຊຸມໄດ້ຈັດຕັ້ງພັກກອມມູນິດຂຶ້ນ-ເອີ້ນວ່າ "ພັກກອມມູນິດຫວຽດນາມ" ພາຍໃຕ້ການຊີ້ນຳຂອງກອມມູນິດສາກົນ. ພັກກອມມູນິດຫວຽດນາມໄດ້ນຳພາປະຊາຊົນຕໍ່ສູ້ຕ້ານຈັກກະພັດຝະລັ່ງ. ຕໍ່ຈາກນັ້ນ ການຕໍ່ສູ້ຂອງປະຊາຊົນອິນດູຈີນ ໄດ້ກ້າວຂຶ້ນສູ່ລະດັບສູງ ແລະຂະຫຍາຍອອກນອກຂອບເຂດຂອງຫວຽດນາມ, ດັ່ງນັ້ນ ເພື່ອປະຕິບັດໜ້າທີ່ສາກົນຂອງພັກ, ເມື່ອເດືອນ ມີນາ 1930 ກອງປະຊຸມສົມກາງພັກຄັ້ງທີ 1 ໄດ້ຕັດສິນປ່ຽນຊື່ພັກ, ຈາກພັກກອມມູນິດຫວຽດນາມມາເປັນພັກ "ກອມມູນິດອິນດູຈີນ" ເພາະວ່າການປະຕິວັດຫວຽດນາມບໍ່ສາມາດຕັດແຍກອອກຈາກການປະຕິວັດລາວ ແລະກຳປູເຈຍໄດ້. ພ້ອມກັນນັ້ນ ພັກຍັງໄດ້ສ້າງຕັ້ງແນວໂຮມອັນໜຶ່ງຂຶ້ນ ໂດຍມີຊື່ວ່າ "ສະມາຄົມສຳພັນອິນດູຈີນຕ້ານຝະລັ່ງ".

## -2. ແນວທາງນະໂຍບາຍການປະຕິວັດຂອງພັກ.

ພັກກອມມູນິດອິນດູຈີນ ແມ່ນພັກຂອງຊົນຊັ້ນກຳມະກອນ ນຳພາການປະຕິວັດ, ເພື່ອສິດຜົນປະໂຫຍດຂອງປະຊາຊົນຊາວຜູ້ອອກແຮງງານທີ່ຖືກກົດຂີ່ຂູດຣີດ. ຫຼັງຈາກພັກໄດ້ຈັດຕັ້ງຂຶ້ນແລ້ວ, ກອງປະຊຸມຄັ້ງທີ 1 ຂອງພັກໄດ້ພິຈາລະນາໂຄງການການເມືອງ ປະຕິວັດຊາດປະຊາທິປະໄຕຂອງພັກ-ໂດຍແມ່ນສະຫາຍເຈີນຟູ ເລຂາທິການໃຫຍ່ຂອງພັກເປັນຜູ້ສະເໜີ ໂດຍອີງໃສ່ 3 ມູນການໃຫຍ່ຄື: ລັດທິ ມາກ-ເລນິນ, ການຕໍ່ສູ້ຂອງຂະບວນກຳມະກອນ ແລະຂະບວນຮັກຊາດຕ້ານຝະລັ່ງ ຂອງປະຊາຊົນ. ແນວທາງການປະຕິວັດຊາດປະຊາທິປະໄຕຂອງພັກ ລວມມີ 10 ຂໍ້ ຄື :

1 – ໂຄ່ນລົ້ມລະບອບຈັກກະພັດນິຍົມ, ລະບອບສັກດີນາ ແລະພວກປະຕິການ.

2 – ຍາດເອົາເອກະລາດອັນສົມບູນທົ່ວອິນດູຈີນ.

3 – ຈັດຕັ້ງລັດຖະບານ ທີ່ປະກອບດ້ວຍກຳມະກອນ, ຊາວນາ ແລະນັກຮົບ.

4 – ຢຶດເອົາທະນາຄານ, ບໍລິສັດວິສາຫະກິດ, ໂຮງຈັກໂຮງງານມາເປັນຂອງລັດ.

5 – ຢຶດເອົາທີ່ດິນ ຊັບສົມບັດ ແລະກຳມະສິດອື່ນໆຂອງພວກຈັກກະພັດ ແລະສັກດີນາປະຕິການ, ເພື່ອແບ່ງປັນໃຫ້ຊາວນາຜູ້ທຸກຍາກ.

6 – ປະຕິບັດເວລາເຮັດວຽກ ວັນລະ 8 ຊົ່ວໂມງ.

7 – ລົບລ້າງການກູ້ຢືມແບບຂູດຣີດ, ການເສຍສ່ວຍຄ່າຫົວ ແລະການເກັບພາສີແບບບໍ່ຍຸຕິທຳເຊິ່ງເປັນການແຕະຕ້ອງຜູ້ທຸກຍາກ.

8 – ປະຕິບັດສິດເສລີພາບ ປະຊາທິປະໄຕທົ່ວປວງຊົນ.

9 – ຂະຫຍາຍການສຶກສາໃຫ້ທົ່ວເຖິງ.

10 – ປະຕິບັດສິດສະເໝີພາບລະຫວ່າງເພດຊາຍ ແລະ ເພດຍິງ.

ຫຼັງຈາກນັ້ນ ພັກໄດ້ວາງຄຳຂວັນອອກຈຳນວນໜຶ່ງດັ່ງນີ້ :

" ຮິບໂຮມເອົາດິນມາຂອງສັກດິນາ, ຄະນະສົງ ກະໂຕລິກ ແລະ ເຈົ້າທີ່ດິນມາແບ່ງປັນໃຫ້ – ຊາວນາ".

" ຍິງຊາຍ ຕ້ອງມີສິດສະເໝີພາບກັນ ໃນການປະກອບອາຊີບ "

" ຊາດໃດຕ້ອງຕັດສິນບັນຫາໂດຍຕົນເອງ "

ໂດຍອີງໃສ່ແນວທາງອັນຖືກຕ້ອງຂອງພັກ, ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ໃນແຕ່ລະປະເທດໄດ້ເຄື່ອນໄຫວຢ່າງມີພົນສັກສິດ. ຢູ່ຫວຽດນາມກຳມະກອນໂຮງງານ ບາຊອນ ໄດ້ປະທ້ວງນັດຢຸດງານ ທວງໃຫ້ເພີ່ມເງິນເດືອນ 16%, ໃຫ້ເຮັດວຽກວັນລະ 8 ຊົ່ວໂມງ ແລະ ທວງໃຫ້ມີການພັກຜ່ອນປີລະ 30 ວັນ ໂດຍໃຫ້ມີການຈ່າຍເງິນເດືອນຢ່າງຄົບຖ້ວນ. ຢູ່ລາວ ກຳມະກອນຢູ່ບໍ່ກົ່ວໂພນຕິ້ວກໍ່ທຳການປະທ້ວງ ທີ່ມີລັກສະນະດຽວກັນ. ນັບແຕ່ເວລານັ້ນເປັນຕົ້ນມາ, ອິນດູຈີນໄດ້ມີພັກການເມືອງ, ເຊິ່ງເປັນພັກຂອງຊົນຊັ້ນກຳມະກອນ, ນຳພາການຕໍ່ສູ້ ຍາດເອົາເອກະລາດ. ການປະຕິວັດຢູ່ອິນດູຈີນໄດ້ກາຍເປັນພາກສ່ວນໜຶ່ງຂອງຂະບວນການປະຕິວັດໂລກ.

### 3. ການພົວພັນລະຫວ່າງພັກກອມມູນິດອິນດູຈີນ ແລະ ການປະຕິວັດລາວ.

ດັ່ງທີ່ພວກເຮົາໄດ້ເວົ້າຜ່ານມາແລ້ວວ່າ ການປະຕິວັດສາມຊາດອິນດູຈີນ ບໍ່ສາມາດຈະຕັດແຍກອອກຈາກກັນໄດ້, ແຕ່ວ່າຊາດໃດຕ້ອງຕັດສິນບັນຫາພາຍໃນດ້ວຍຕົນເອງ. ດັ່ງນັ້ນ, ມາຮອດປີ 1934 ຈຶ່ງໄດ້ມີການຈັດຕັ້ງຄະນະພັກຂຶ້ນໃນລາວ ໂດຍໃສ່ຊື່ວ່າ "ຄະນະພັກແຄວ້ນລາວ" ເພື່ອນຳພາການຕໍ່ສູ້. ຫຼັງຈາກນັ້ນຂະບວນກຳມະກອນ ນັກຮຽນ ນັກສຶກສາໃນຫຼາຍຕົວເມືອງ ເລີ່ມມີການເຄື່ອນໄຫວພາຍໃຕ້ການນຳພາຂອງຄະນະພັກ ອັນເຮັດໃຫ້ຂະບວນລາວຕໍ່ຕ້ານເຜີຍໄທ ຂະຫຍາຍຕົວ ເຊິ່ງມີຊື່ວ່າຂະບວນລາວອິດສະຫຼະໃນເດືອນ ສິງຫາ 1950 ກອງປະຊຸມໃຫຍ່ແນວລາວຕໍ່ຕ້ານໄດ້ປ່ຽນຊື່ຈາກຂະບວນລາວອິດສະຫຼະມາເປັນ "ແນວລາວອິດສະຫຼະ" ແລະ ຈັດຕັ້ງຄະນະ ລັດຖະບານລາວຕໍ່ຕ້ານຂຶ້ນ ເພື່ອນຳພາການຕໍ່ສູ້ກູ້ຊາດ. ເພື່ອໃຫ້ແທດເໝາະກັບສະພາບຕົວຈິງ ໃນແຕ່ລະປະເທດ, ຄະນະນຳພັກກອມມູນິດອິນດູຈີນ ຈຶ່ງເຫັນມີຄວາມຈຳເປັນໃຫ້ແຕ່ລະປະເທດ ຈັດຕັ້ງພັກຂອງຕົນຂຶ້ນ. ດັ່ງນັ້ນ, ໃນວັນທີ 22 ມີນາ 1955 ພັກປະຊາຊົນລາວ (ດຽວນີ້ແມ່ນພັກປະຊາຊົນປະຕິວັດລາວ) ໄດ້ຮັບການສ້າງຕັ້ງຂຶ້ນ, ໃນວັນທີ 6 ເດືອນ ມັງກອນ 1956 ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 2 ໄດ້ລົງມະຕິປ່ຽນຊື່ ແນວລາວອິດສະຫຼະມາເປັນ "ແນວລາວຮັກຊາດ"

ເຊິ່ງແມ່ນແນວໂຮມແຫ່ງຊາດທີ່ຕັ້ງຂຶ້ນ ບົນພື້ນຖານພັນທະພາບກຳມະກອນຊາວນາ ພາຍໃຕ້ການນຳພາຂອງພັກ.

ຢູ່ຫວຽດນາມ ທ່ານປະທານ ໂຮ່ຈິມິນ ຜູ້ນຳທີ່ຍິ່ງໃຫຍ່ກໍ່ໄດ້ຈັດຕັ້ງພັກຂຶ້ນ ເອີ້ນວ່າ " ພັກຄົນງານຫວຽດນາມ " (ລາວດົງ) ແລະສ້າງແນວໂຮມແຫ່ງຊາດຂຶ້ນໃຫ້ຊື່ວ່າ "ພັນທະມິດຫວຽດນາມເອກະລາດ" ແນວໂຮມແຫ່ງຊາດນີ້ ມີໜ້າທີ່ຈັດຕັ້ງປະກອບອາວຸດ, ນຳພາປະຊາຊົນລຸກຮື້ຂຶ້ນ ເປັນແຕ່ລະພາກສ່ວນ ເພື່ອກຽມຍຶດອຳນາດ. ຮອດເດືອນ ສິງຫາ 1945 ໄດ້ຍຶດອຳນາດຢູ່ພາກເໜືອສຳເລັດ ແລະສ້າງຕັ້ງລະບອບ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ນຳພາປະຊາຊົນກໍ່ສ້າງພື້ນຖານເສດຖະກິດ ກ້າວຂຶ້ນສັງຄົມນິຍົມ ແລະສືບຕໍ່ປົດປ່ອຍພາກໃຕ້. ກອງປະຊຸມໃຫຍ່ຄັ້ງທີ4 ຂອງພັກຄົນງານຫວຽດນາມ, ໄຂຂຶ້ນໃນທ້າຍປີ 1977 ໄດ້ຕັດສິນປ່ຽນຊື່ ພັກຄົນງານຫວຽດນາມ ມາເປັນພັກ "ກອມມູນິດຫວຽດນາມ" ແລະສ້າງປະເທດຫວຽດນາມທັງໝົດໃຫ້ກາຍເປັນ ປະເທດ ສາທາລະນະລັດສັງຄົມນິຍົມຫວຽດນາມ. ບໍ່ວ່າໃນໄລຍະສົງຄາມ ກໍ່ຄືໃນຍາມສັນຕິພາບ, ປະຊາຊົນສອງຊາດ ລາວ ຫວຽດນາມ ໄດ້ມີການພົວພັນຊ່ວຍເຫຼືອເຊິ່ງກັນ ແລະກັນ ເພາະວ່າ ພັກທັງສອງຊາດລ້ວນແຕ່ກຳເນີດມາຈາກພັກກອມມູນິດອິນດູຈີນ. ພາລະກິດຂອງທ່ານປະທານ ໂຮ່ຈິມິນ ແມ່ນຍິ່ງໃຫຍ່ທີ່ສຸດ, ທ່ານເປັນອາຈານຜູ້ປີຊາສາມາດຂອງການປະຕິວັດ, ເປັນນັກເຄື່ອນໄຫວທີ່ເກັ່ງກ້າຂອງຂະບວນກອມມູນິດສາກົນ ແລະຂະບວນປົດປ່ອຍຊາດ. ທ່ານປະທານ ໂຮ່ຈິມິນ ເປັນຫ່ວງເປັນໄຍນຳໂຊກຊາຕາກຳຂອງຊາດລາວ, ທ່ານໄດ້ຮຽກຮ້ອງໃຫ້ປະຊາຊົນຫວຽດນາມ ເຊິ່ງອຸທິດທຸກສິ່ງທຸກຢ່າງ ເພື່ອຊ່ວຍເຫຼືອການປະຕິວັດລາວ, ຈະເຫັນໄດ້ຈາກບົດກະວີຂອງເພິ່ນ ທີ່ເວົ້າເຖິງຄວາມສາມັກຄີແບບພິເສດ ລະຫວ່າງ ລາວ ແລະຫວຽດນາມ, ເຊິ່ງມີເນື້ອໃນໃຈຄວາມເປັນພາສາລາວດັ່ງນີ້ :

ຮັກຮໍ່ກັນໝາຍໝັ້ນ ຫຼາຍສັນພູກໍປີນໄຕ່
ຫຼາຍຫ້ວຍໃຫຍ່ແລະໂຄກຄ້ອຍ ຂວາງໜ້າກໍ່ດຸ່ງໄປ
ສອງຊາດລາວຫວຽດໄດ້ ຮັກຮໍ່ສາມັກຄີ
ຮຽງຮ່າທັງລຳຂອງ ບໍ່ເລີກປຸ່ນປານໄດ້

ໃນສຸນທອນພົດຂອງທ່ານ ໄກສອນ ພົມວິຫານ ເລຂາທິການໃຫຍ່ ສູນກາງພັກປະຊາຊົນ ປະຕິວັດລາວ ທີ່ກ່າວໃນງານຊຸມນຸມມິດຕິງ ຕ້ອນຮັບຄະນະຜູ້ແທນພັກ ແລະລັດຖະບານ ສາທາລະນະລັດສັງຄົມນິຍົມຫວຽດນາມ ທີ່ມາຢ້ຽມຢາມປະເທດເຮົາ ໃນປີ 1977 ໄດ້ເວົ້າວ່າ "ປະຊາຊົນຫວຽດນາມແມ່ນເພື່ອນຮ່ວມຮົບທີ່ສະໜິດເໜັ້ນຂອງປະຊາຊົນລາວ" ຄວາມສາມັກຄີ ລາວ—ຫວຽດນາມ ບໍ່ມີ

ຫຍັງມາສັ່ນສະເທືອນໄດ້.

ຄຳຖາມເພື່ອຄົ້ນຄວ້າ.

1. ຈົ່ງເວົ້າເຖິງການກຳເນີດຂອງພັກກອມມູນິດອິນດູຈີນ.
2. ແນວທາງການປະຕິວັດຊາດປະຊາທິປະໄຕ ຂອງພັກກອມມູນິດອິນດູຈີນມີຫຍັງແດ່ ? ແນວທາງນັ້ນວາງຂຶ້ນ ອີງໃສ່ ມູນການອັນໃດ ?
3. ການປະຕິວັດລາວໄດ້ມີການພົວພັນກັບພັກກອມມູນິດຫວຽດນາມ ແລະພັກກອມມູນິດອິນດູຈີນແນວໃດ ?

ບົດທີ 6.

# ການລຸກຮືຂຶ້ນຍຶດອຳນາດຂອງປະຊາຊົນລາວ ໃນປີ ຄ. ສ. 1945.

1. ສະພາບການຂອງໂລກກ່ອນວັນຍຶດອຳນາດ.

ຕົ້ນສະຕະວັດທີ 20 ເປັນສະໄໝທີ່ລະບອບທຶນນິຍົມ ໄດ້ກ້າວຂຶ້ນເປັນຈັກກະພັດ, ແລ້ວກໍເກີດຂັດແຍ້ງກັນ, ລັດທິຟາດຊິດໄດ້ປະກົດຕົວຂຶ້ນ, ເຮັດໃຫ້ລະບອບທຶນນິຍົມແຍກກັນອອກເປັນສອງຝ່າຍ. ຝ່າຍໜຶ່ງແມ່ນ ທຶນນິຍົມເສລີປະຊາທິປະໄຕ, ອັນມີ ອັງກິດ, ອາເມລິກາ ແລະຝະລັ່ງ. ຝ່າຍນີ້ແມ່ນ ຢາກຮັກສາຕົວເມືອງຂຶ້ນ ແລະ ເຄື່ອງເມືອງຂຶ້ນໄວ້ຄືເກົ່າ. ອີກຝ່າຍໜຶ່ງແມ່ນທຶນນິຍົມແບບ ຟາດຊິດ ອັນມີ ເຢຍລະມັນ, ອີຕາລີ ແລະຍີ່ປຸ່ນ. ຝ່າຍນີ້ມີຈຸດປະສົງຈະຍາດເອົາຕະຫຼາດຈຳໜ່າຍສິນຄ້າ – ແລະຍຶດເອົາແຫຼ່ງວັດຖຸດິບຕ່າງໆໃນໂລກ ທີ່ພວກລ່າເມືອງຂຶ້ນແຕ່ເກົ່າຍຶດຄອງໄວ້. ລະບອບຟາດຊິດບໍ່ພຽງແຕ່ເປັນສັດຕູຂອງລະບອບທຶນນິຍົມເທົ່ານັ້ນ ແຕ່ຍັງເປັນສັດຕູຕົວຕົ້ນຕໍຂອງຊາວຜູ້ອອກແຮງງານໃນໂລກ, ເປັນຕົ້ນແມ່ນກັບສະຫະພາບໂຊວຽດ. ດັ່ງນັ້ນ ສົງຄາມໂລກຄັ້ງທີສອງ ຈຶ່ງລະເບີດຂຶ້ນຢູ່ໂລບ, ເລີ່ມຕົ້ນຈາກການບຸກໂຈມຕີຫຼາຍປະເທດໃນຢູໂລບຂອງພວກຟາດຊິດ ຮິດເລ ແລະລວງເຂົ້າດິນແດນຂອງສະຫະພາບໂຊວຽດ ເກືອບຈະຮອດນະຄອນຫຼວງໂມສະກູ. ທາງຝ່າຍນາຍທຶນເສລີປະຊາທິປະໄຕ ເຫັນເຢຍລະມັນບຸກເຂົ້າໂຊວຽດກໍມີທ່າທີເສີຍເມີຍ ເພາະພວກເຂົາຢາກ-ທັບມ້າງລະບອບສັງຄົມນິຍົມຂອງໂຊວຽດ. ແຕ່ຫຼັງຈາກທະຫານຟາດຊິດບຸກຍຶດເອົາພາກເໜືອ ຂອງປະເທດຝະລັ່ງ ແລະຄຸກຄາມປະເທດອັງກິດຝ່າຍທຶນນິຍົມຈຶ່ງຕັດສິນໃຈຮ່ວມມືກັບສະຫະພາບໂຊວຽດ ເພາະກ້າຈະສະຫງວນທ່າທີຕໍ່ໄປກໍເຫັນວ່າຕົນເອງຈະມີອັນຕະລາຍ. ດັ່ງນັ້ນ ສອງຝ່າຍຈຶ່ງມາຮ່ວມມືກັນ ໂດຍໄດ້ເປີດກອງປະຊຸມທີ່ລອນດອນ ແລະເຊັນສັນຍາຮ່ວມກັນຕ້ານຟາດຊິດ. ຈາກນັ້ນມາໃນຕົ້ນເດືອນທັນວາ 1941 ກອງທັບແດງໂຊວຽດ ໄດ້ຕ້ານໂຈມຕີຟາດຊິດເຢຍລະມັນ ແລະພຽງແຕ່ 48 ວັນກໍສາມາດຕີກອຍກອງທັບຟາດຊິດໃຫ້ແຕກທະລາຍໄປ ແລະກ້າວຂຶ້ນສູ່ທ່າບຸກ. ເມື່ອເຫັນວ່າກອງທັບແດງໂຊວຽດໄດ້ຮັບໄຊຊະນະ, ຝ່າຍນາຍທຶນເສລີປະຊາທິປະໄຕ ກໍຟ້າວຟັ່ງເປີດການໂຈມຕີຟາດຊິດ ຢູ່ເຂດທະເລເມດີແຕລານເນ ແລະພາກຕາເວັນຕົກຂອງທະວີບຢູໂລບ. ພ້ອມດຽວກັນນັ້ນກອງທັບອາເມລິກາກໍທຳລາຍກອງທັບເຮືອຍີ່ປຸ່ນ ໃນມະຫາສະມຸດປາຊີຟິກ. ໃນຕົ້ນປີ 1945 ກອງທັບແດງໂຊວຽດ ໄດ້ສືບຕໍ່ປົດປ່ອຍພາກຕາເວັນອອກຂອງຢູໂລບ ແລະເຄື່ອນທັບເຂົ້າປົດປ່ອຍ ເອົາຕົວເມືອງເບກແລງ ເຊິ່ງເປັນໃຈກາງບັນຊາຂອງພວກຟາດຊິດ.

ຕໍ່ໜ້າສະພາບການປະລາໄຊຢ່າງໜັກໜ່ວງນັ້ນ, ໃນວັນທີ 1 ເມສາ ປີດຽວກັນ ຮິດເລ ໄດ້ຂ້າໂຕເອງຕາຍຢູ່ຫໍບັນຊາການ. ວັນທີ 8 ພຶດສະພາ 1945 ກອງທັບແດງໂຊວຽດ ໄດ້ເຂົ້າໄປປົດປ່ອຍຕົວເມືອງແບກແລງສຳເລັດ ເຮັດໃຫ້ພວກຟາດຊິດຍອມຈຳນົນ. ໃນສະພາບທີ່ພວກຟາດຊິດ - ຍອມຈຳນົນ, ອາເມລິກາ ຈຶ່ງສວຍໂອກາດຍາດແຍ່ງເອົາຜົນງານ ໂດຍໄດ້ເອົາລູກລະເບີດປະລາມະນູໄປຖິ້ມໃສ່ເມືອງຮີໂລຊິມາ ແລະນາກາສະກີຂອງຍີ່ປຸ່ນ ອັນເຮັດໃຫ້ຊີວິດ ແລະ ຊັບສິນຂອງປະຊາຊົນຍີ່ປຸ່ນສູນເສຍຢ່າງຫຼວງຫຼາຍ. ສົງຄາມໂລກຄັ້ງທີ 2 ໄດ້ສິ້ນສຸດລົງດ້ວຍການຕົກລົງ ເຊັນສັນຍາທີ່ເມືອງໂປດສະດາມ ປະເທດ ເຢລະມັນ. ສັນຍາດັ່ງກ່າວ ໄດ້ມອບສິດໃຫ້ທະຫານ ຈຽງໄກເຊັກ (ຈົມກົກມິງຕັງ) ແລະທະຫານອັງກິດ ປົດອາວຸດທະຫານຍີ່ປຸ່ນ ຢູ່ອິນດູຈີນ.

## 2. ສະພາບການໃນລາວກ່ອນວັນຍຶດອຳນາດ.

ດັ່ງທີ່ກ່າວມາແລ້ວວ່າ ໃນຂະນະທີ່ສົງຄາມໂລກຄັ້ງທີສອງພວມດຳເນີນຢູ່ນັ້ນ, ປະເທດຝະລັ່ງກໍຖືກບຸກໂຈມຕີຈາກກອງທະຫານຟາດຊິດຮິດເລຢ່າງໜັກ. ດັ່ງນັ້ນອຳນາດການປົກຄອງຝະລັ່ງ ຢູ່ຕາມຫົວເມືອງຂຶ້ນຕ່າງໆ ກໍອ່ອນກຳລັງລົງ. ສ່ວນຢູ່ພາກອາຊີຕາເວັນອອກ ຍີ່ປຸ່ນກໍເປີດບັ້ນຮົບ ໃຫຍ່ຂຶ້ນເພື່ອຂະຫຍາຍອິດທິພົນຂອງຕົນ, ໂດຍອ້າງວ່າຈະສ້າງ "ວົງໄພບູນ ມະຫາອາຊີບູລະພາ". ສະນັ້ນເມື່ອຟາດຊິດຍີ່ປຸ່ນບຸກເຂົ້າອິນດູຈີນແລ້ວ, ໄດ້ບັງຄັບໃຫ້ພວກລ່າເມືອງຂຶ້ນຝະລັ່ງເຊັນສັນຍາຮ່ວມ - ປ້ອງກັນອິນດູຈີນ. ເປັນອັນວ່າອິນດູຈີນຕົກຢູ່ພາຍໃຕ້ແອກຄອບຄອງຝະລັ່ງ ແລະຍີ່ປຸ່ນ. ເພື່ອສືບຕໍ່ປັດເຂ່ຍຈັກກະພັດຝະລັ່ງອອກຈາກອິນດູຈີນ ຍີ່ປຸ່ນຈຶ່ງຊຸກຍູ້ໃຫ້ໄທ ຂະຫຍາຍ "ລັດທິຊາດໄທໃຫຍ່ " ເຂົ້າມາດິນລາວກຳປູເຈຍ, ດັ່ງນັ້ນຝະລັ່ງ ແລະໄທ ຈຶ່ງເກີດສົງຄາມຍາດດິນແດນກັນ. ໃນທີ່ສຸດຍີ່ປຸ່ນກໍບັງຄັບໃຫ້ຝະລັ່ງຍົກດິນແດນສ່ວນໜຶ່ງຂອງແຂວງຈຳປາສັກທາງຝັ່ງຂວາຂອງແມ່ນ້ຳຂອງ ແຂວງໄຊຍະບູລີຂອງລາວ ແລະແຂວງພະຕະບອງ, ສຽມລຽບ ແລະສີໂສພົນຂອງກຳປູເຈຍໃຫ້ໄທ. ເມື່ອກຳລັງຂອງຝະລັ່ງຢູ່ອິນດູຈີນອ່ອນລົງຈົນສຸດຂີດແລ້ວ, ຍີ່ປຸ່ນຈຶ່ງໃຊ້ກຳລັງຍຶດອິນດູຈີນທັງໝົດ ໃນວັນທີ 9 ມີນາ 1945, ແລ້ວກໍໄດ້ສ້າງຕັ້ງອຳນາດການປົກຄອງຫຸ່ນຂຶ້ນ ເພື່ອຮັບໃຊ້ຜົນປະໂຫຍດຂອງຕົນ.

ພາຍໃຕ້ການປົກຄອງຂອງຍີ່ປຸ່ນນັ້ນ, ປະຊາຊົນລາວໄດ້ຮັບຄວາມເດືອດຮ້ອນຢ່າງໜັກໜ່ວງ ເປັນຕົ້ນແມ່ນຖືກເກນໄປສ້າງເສັ້ນທາງຍຸດທະສາດ ແລະໄປລຳລຽງຂົນສົ່ງອາວຸດຍຸດໂທປະກອນ.

## 3. ການລຸກຂຶ້ນຍຶດອຳນາດຂອງປະຊາຊົນລາວໃນປີ ຄ. ສ. 1945.

ນັບແຕ່ກາງປີ 1945 ເປັນຕົ້ນມາ ສະພາບການຂອງສົງຄາມໂລກຄັ້ງທີ 2 ໄດ້ຜັນແປຢ່າງມີຜົນດີໃຫ້ແກ່ສັນຕິພາບຂອງໂລກ. ຢູ່ຢູໂລບ, ໃນວັນທີ 8 ພຶດສະພາ 1945 ກອງທັບແດງໂຊວຽດໄດ້ຕີຍຸບສົມກຳລັງຟາດຊິດເຢຍລະມັນ, ຢູ່ທາງອາຊີກອງທັບແດງໂຊວຽດ ພ້ອມດ້ວຍທະຫານສຳພັນທະມິດກໍໄດ້ຕີຍຸບສົມຟາດຊິດຍີ່ປຸ່ນຢູ່ທຸກສະໜາມຮົບ, ໂດຍສະເພາະຢູ່ດ້ານຮົບ ມັງຈູລີ ແລະກວາງເຈົາ, ກອງທະຫານຟາດຊິດຍີ່ປຸ່ນ ໄດ້ຍອມຈຳນົນຕໍ່ກອງທັບແດງໂຊວຽດຢ່າງບໍ່ມີເງື່ອນໄຂ. ໃນເວລານັ້ນການປະຕິວັດເດືອນ ສິງຫາ ຂອງຫວຽດນາມກໍໄດ້ຮັບຜົນສຳເລັດ ແລະກ້າວໄປເຖິງການສ້າງຕັ້ງ-ປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມໃນວັນທີ 2 ກັນຍາ 1945. ເຫດການທັງໝົດດັ່ງກ່າວໄດ້ສ້າງເງື່ອນໄຂອັນສະດວກໃຫ້ປະຊາຊົນລາວບັນດາຊົນຊາດ ລຸກຂຶ້ນຍຶດອຳນາດຈາກ-ກຳມືຂອງຟາດຊິດຍີ່ປຸ່ນ ໃນຂອບເຂດທົ່ວປະເທດ ໃນວັນທີ 23 ສິງຫາ 1945.

ໃນວັນທີ 12 ຕຸລາ ປີດຽວກັນ ຢູ່ທີ່ນະຄອນຫຼວງວຽງຈັນ ເຈົ້າເພັດຊະລາດ ຕາງໜ້າໃຫ້ລັດຖະບານລາວອິດສະຫຼະ ໄດ້ຂຶ້ນປະກາດຕໍ່ປະຊາຊົນລາວ ແລະຊາວໂລກຮູ້ວ່າ ປະຊາຊົນລາວໄດ້ທັບມ້າງຊີກໂສ້ແຫ່ງຄວາມເປັນຂ້ອຍຂ້າຊາດອື່ນຢ່າງສິ້ນເຊີງ ເຮັດໃຫ້ປະເທດລາວເປັນປະເທດເອກະລາດມີອຳນາດອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງຕົນ; ພ້ອມດຽວກັນນັ້ນ ກໍໄດ້ປະກາດໃຊ້ລັດຖະທຳມະນູນສະບັບຊົ່ວຄາວ ເພື່ອບໍລິຫານປະເທດ.

ດັ່ງທີ່ພວກເຮົາໄດ້ເວົ້າຜ່ານມາແລ້ວວ່າ ປະເທດລາວໄດ້ຕົກເປັນເມືອງຂຶ້ນຝະລັ່ງແຕ່ປີ 1893 ເປັນຕົ້ນມາ. ການຕໍ່ສູ້ຂອງປະຊາຊົນລາວ ກໍໄດ້ດຳເນີນເລື້ອຍມາຈົນຮອດປີ 1936 ເຊິ່ງເປັນປີທີ່ຂະບວນຕໍ່ສູ້ນຳໂດຍ ອົງແກ້ວ ແລະອົງກົມມະດຳ ໄດ້ສິ້ນສຸດລົງ. ນັບແຕ່ນັ້ນມາຂະບວນການຕໍ່ສູ້-ຂອງປະຊາຊົນລາວກໍຍັງດຳເນີນຢູ່, ເມື່ອໄດ້ຮັບແສງສະຫວ່າງຈາກລັດທິ ມາກ-ເລນິນແລ້ວ ການຕໍ່ສູ້ໃນໄລຍະນັ້ນ ກໍມີການຫັນປ່ຽນດ້ວຍຫຼາຍຮູບຫຼາຍແບບ ເຊັ່ນ: ການນັດຢຸດງານ, ຫວ່ານໃບປິວ, ໂຮມຊຸມນຸມປະທ້ວງ ແລະບັນດາຂະບວນສະແດງກຳລັງຂອງກຳມະກອນ ຢູ່ຕາມໂຮງຈັກໂຮງງານ. ຈົນກ້າວໄປສູ່ການຍຶດອຳນາດ, ຈັດຕັ້ງລັດຖະບານ ແລະປະກາດເອກະລາດ.

### ຄຳຖາມເພື່ອຄົ້ນຄວ້າ.

1 – ຈົ່ງເວົ້າເຖິງສະພາບການຂອງໂລກ ກ່ອນວັນຍຶດອຳນາດຂອງປະຊາຊົນລາວ.

2 – ສະພາບການໃນລາວ ກ່ອນວັນຍຶດອຳນາດເປັນແນວໃດ ?

3 – ຈົ່ງເລົ່າເຫດການຂອງການຍຶດອຳນາດໃນປີ 1945.

ບົດທີ 7.

# ພວກລ່າເມືອງ ຂຶ້ນຝະລັ່ງ ກັບມາຮຸກຮານລາວເທື່ອທີສອງ.

## 1. ສະພາບການໃນລາວພາຍຫຼັງຍຶດອຳນາດ.

ເມື່ອສົງຄາມໂລກຄັ້ງທີສອງສິ້ນສຸດລົງແລ້ວ, ກອງທະຫານອັງກິດ ແລະທະຫານຈີນ ຈຽງໄຄເຊັກໄດ້ຮັບໜ້າທີ່ຈາກກຳລັງສຳພັນທະມິດ ປົດອາວຸດຂອງທະຫານຍີ່ປຸ່ນຢູ່ອິນດູຈີນຕາມສັນຍາທີ່ເມືອງປົດສະດາມ. ກອງທະຫານອັງກິດໄດ້ເຂົ້າມາປົດອາວຸດຍີ່ປຸ່ນ ນັບແຕ່ເສັ້ນຂະໜານທີ 16 ລົງໄປ ສ່ວນທະຫານຈີນ ຈຽງໄຄເຊັກນັບແຕ່ເສັ້ນຂະໜານທີ່ 16 ຂຶ້ນໄປ. ໃນຂະນະນັ້ນ ຝະລັ່ງກໍສວຍໂອກາດຂົນກອງທະຫານຂອງຕົນເຂົ້າມາລາວທາງພາກເໜືອ ພວກເຂົາໄດ້ຕົກລົງເຮັດສັນຍາລັບກັບທະຫານຈີນ ຈຽງໄຄເຊັກ (ສັນຍາຈຸງກິງ) ແລະຂົນທະຫານກົມມັງໂດມາໂດດຈ້ອງລົງເຂດໂພນສະ-ຫວັນ (ແຂວງຊຽງຂວາງ) ທາງພາກໃຕ້ພວກເຂົາໄດ້ຂົນທະຫານຂຶ້ນມາຕັ້ງຢູ່ປາກເຊ ໂດຍການຮ່ວມມືຂອງ ເຈົ້າບຸນອຸ້ມ. ໃນເວລານັ້ນ, ລັດຖະບານລາວອິດສະຫຼະ ໄດ້ປັ່ນປ່ວນກຳລັງແລະປຸກລະດົມປະຊາຊົນໃຫ້ຮ່ວມມື ເພື່ອຕ້ານພວກລ່າເມືອງຂຶ້ນຝະລັ່ງ ແຕ່ເຈົ້າຊີວິດ ສີສະຫວ່າງວົງ ແຫ່ງອານາຈັກຫຼວງພະບາງບໍ່ໃຫ້ການສະໜັບສະໜູນ ເພາະຍັງຢາກຢູ່ໃຕ້ອາລັກຂາຂອງຝະລັ່ງ, ຈຶ່ງໄດ້ສັ່ງປົດເຈົ້າເພັດຊະລາດອອກຈາກຕຳແໜ່ງ ມະຫາອຸປະຮາດ. ເພື່ອເປັນການຕອບໂຕ້ຄຳສັ່ງເຈົ້າສີສະຫວ່າງວົງ, ລັດຖະບານລາວອິດສະຫຼະ ໄດ້ໄຂສະພາປະຊາຊົນຂຶ້ນ, ສັ່ງປົດເຈົ້າຊີວິດອອກຈາກລາຊະບັນລັງ ແລະປະກາດບໍ່ຮັບຮູ້ສັນຍາລາວ ຝະລັ່ງ ທີ່ໄດ້ເຊັນກັນມາ. ຢູ່ຫຼວງພະບາງ ປະຊາຊົນກໍໄດ້ໃຊ້ກຳລັງປິດລ້ອມ ແລະບັງຄັບໃຫ້ເຈົ້າຊີວິດຢູ່ໃນບໍລິເວນລາຊະວັງ ແລະກັກຂັງນາຍພັນໂທແອນແຟນ ພ້ອມດ້ວຍລູກນ້ອງ 12 ຄົນ ທີ່ຝະລັ່ງໄດ້ສົ່ງມາເຈລະຈາກັບເຈົ້າຊີວິດ. ໃນເວລານັ້ນ ພວກລ່າເມືອງຂຶ້ນຝະລັ່ງ ກໍກຽມຂົນທະຫານເຂົ້າມາລາວ ເປັນການໃຫຍ່ເພື່ອຫວັງຈະຍຶດຄອງລາວອີກ.

## 2. ການຕໍ່ສູ້ຂອງລາວອິດສະຫຼະເພື່ອປົກປັກຮັກສາເອກະລາດ.

ຕໍ່ໜ້າສະພາບການດັ່ງກ່າວນັ້ນ, ລັດຖະບານລາວອິດສະຫຼະກໍໄດ້ປັ່ນປ່ວນກຳລັງໃຫ້ເຂັ້ມແຂງເພື່ອປົກປັກຮັກສາເອກະລາດຂອງຊາດ ໂດຍໄດ້ຈັດສົ່ງກຳລັງທະຫານໄປປະຈຳການຕາມຈຸດຕ່າງໆທີ່ສຳຄັນ ໂດຍສະເພາະຢູ່ສະຫວັນນະເຂດ ແລະທ່າແຂກ. ຢູ່ດ້ານຮົບເຂດນີ້ ສະເດັດເຈົ້າສຸພານຸວົງ ,

ເຊິ່ງໃນເວລານັ້ນດຳລົງຕຳແໜ່ງລັດຖະມົນຕີວ່າການ ກະຊວງປ້ອງກັນປະເທດຂອງລັດຖະບານລາວອິດສະຫຼະ ພ້ອມທັງເປັນຜູ້ບັນຊາການສູງສຸດ ກອງທັບລາວອິດສະຫຼະໄດ້ລົງໄປບັນຊາການໂດຍກົງ. ໃນຕົ້ນປີ 1946 ຈັກກະພັດຝະລັ່ງ ກໍເປີດສາກບຸກໂຈມຕີປະເທດລາວ ເຂົ້າທຸກໆດ້ານຢ່າງຂະໜາດໃຫຍ່ ໂດຍໄດ້ສົມທົບກັບພວກທະຫານຝະລັ່ງທີ່ລີ້ຊ່ອນຢູ່ຕາມປ່າດົງໃນເມື່ອກ່ອນ. ຢູ່ທາງພາກເໜືອ-ທະຫານຝະລັ່ງທີ່ຕັ້ງຢູ່ພາກໃຕ້ຂອງປະເທດຈີນ ກໍໄດ້ເຄື່ອນທັບລົງມາຍຶດເອົາແຂວງຜົ້ງສາລີ ໃນລະຫວ່າງເດືອນ ກຸມພາ 1946. ໃນປີດຽວກັນ ຝະລັ່ງກໍໂດດຈ້ອງລົງຍຶດເອົາແຂວງຊຽງຂວາງ . ທາງພາກໃຕ້ໂດຍຮັບການຮ່ວມມືຂອງ ເຈົ້າບຸນອູ້ມ ແລະໄດ້ຮັບການຊ່ວຍເຫຼືອທາງທະຫານຈາກອັງກິດ, ຝະລັ່ງໄດ້ໃຊ້ກຳລັງຍຶດເອົາພູພຽງບໍລະເວນ ແລະເສັ້ນທາງເລກທີ 9 ໃນເດືອນ ມີນາ ປີ 1946 ຝະລັ່ງໄດ້ຕີເຂົ້າເມືອງສະຫວັນນະເຂດ, ກອງທະຫານຂອງລັດຖະບານ ແລະ ປະຊາຊົນກໍ່ໄດ້ຕ້ານຄືນຢ່າງແຂງແຮງ ເຮັດໃຫ້ທະຫານຝະລັ່ງຜູ້ຮຸກຮານລົ້ມຕາຍ ແລະບາດເຈັບຈຳນວນຫຼວງ-ຫຼາຍ, ຈຶ່ງໄດ້ສົ່ງເອົາກອງທະຫານຈາກປາກເຊມາຊ່ວຍ. ດັ່ງນັ້ນພວກເຂົາຈຶ່ງຍຶດເອົາສະຫວັນນະເຂດໄດ້ ໃນວັນທີ 10 ມີນາ 1946. ຫຼັງຈາກນັ້ນ ຝະລັ່ງກໍ່ໄດ້ມາຕີເອົາເມືອງທ່າແຂກ. ກອງທັບລັດຖະບານລາວອິດສະຫຼະ ແລະປະຊາຊົນເມືອງທ່າແຂກ ໄດ້ທຳການຕໍ່ສູ້ຕ້ານທານຢ່າງແຂງ-ແຮງດ້ວຍວິທີດັກສະກັດລັດຕີແບບກອງຫຼອນ ສົມທົບກັບການຕີຂອງກຳລັງຫຼວງ. ຍ້ອນກຳລັງຍັງອ່ອນນ້ອຍ ອາວຸດກໍ່ບໍ່ພຽງພໍ ຈຶ່ງເສຍທີ່ໝັ້ນປ້ອງກັນຢູ່ດ້ານນອກເມືອງທ່າແຂກ ເຊັ່ນ: ປາກນ້ຳຫີນບູນ-ມະຫາໄຊ, ບົນມະລາດ ແລະນາກາຍ ໃຫ້ແກ່ສັດຕູ, ແລ້ວກໍ່ຖອຍເຂົ້າມາສົມທົບກັບກຳລັງຫຼວງ ທີ່ເມືອງທ່າແຂກ. ຫຼັງຈາກນັ້ນ ສັດຕູກໍ່ບຸກໂຈມຕີເຂົ້າໂຕເມືອງທ່າແຂກເປັນການໃຫຍ່. ການຕໍ່ສູ້ປ້ອງກັນຕົວເມືອງທ່າແຂກ ພາຍໃຕ້ການບັນຊາຂອງ ສະເດັດ ເຈົ້າສຸພານຸວົງ ແລະທ່ານ ສິງກະໂປໄດ້ດຳເນີນໄປຢ່າງດຸເດືອດ ພິລະອາດຫານ ເປັນເວລາຫຼາຍວັນ, ຈົນຮອດວັນທີ 21 ມີນາກໍສູນເສຍເມືອງທ່າແຂກໃຫ້ແກ່ສັດຕູ. ກຳລັງທະຫານລາວອິດສະຫຼະ ຈຶ່ງໄດ້ຖອນອອກຈາກຕົວເມືອງຂ້າມຂອງໄປຢູ່ປະເທດໄທ ເພື່ອກະກຽມການຕໍ່ສູ້ຍາວນານ. ໃນຂະນະທີ່ກຳລັງຂ້າມຂອງຢູ່ນັ້ນພວກທະຫານຝະລັ່ງໄດ້ໃຊ້ເຮືອບິນຍິງທະລົ່ມຢ່າງໜັກ ເຮັດໃຫ້ສະເດັດເຈົ້າສຸພານຸວົງໄດ້ຮັບບາດເຈັບ ທີ່ບ່າໄລ່ເບື້ອງຊ້າຍ, ແຕ່ກໍສາມາດພາທາລົກບິນຮອດຝັ່ງໄທໄດ້. ສ່ວນຢູ່ທີ່ເມືອງທ່າແຂກ ພວກທະຫານຝະລັ່ງກໍ່ເຂັ່ນຂ້າປະຊາຊົນຢ່າງໂຫດຮ້າຍປ່າເຖື່ອນທີ່ສຸດ, ພວກເຂົາໄດ້ເອົາເດັກນ້ອຍ ຍັດໃສ່ກະເປົ໋າປ່ານແລ້ວຖິ້ມລົງນ້ຳຂອງ ຫຼືຖິ້ມລົງນ້ຳສ້າງ, ເອົາປະຊາຊົນໄປລຽນແຖວໄວ້ຕາມແຄມຂອງແລ້ວຍິງປືນກວາດໃສ່ ເຮັດໃຫ້ນ້ຳຂອງເຕັມໄປດ້ວຍຊາກສົບ ແລະກິ່ນຄາວ. ສະນັ້ນ ວັນທີ 21 ມີນາ ປີ 1946 ຈຶ່ງກາຍມາເປັນວັນຄຽດແຄ້ນໃນປະຫວັດສາດຂອງປະຊາຊົນລາວ.

ທົ່ວງຈັນ ກອງທະຫານລາວອິດສະຫຼະ ກໍໄດ້ຕໍ່ສູ້ແລະຕ້ານທານສັດຕູຢ່າງດຸເດືອດ ແລະ ພີລະອາດຫານເໝືອນກັນ ຢູ່ຕາມທີ່ໝັ້ນອ້ອມນອກ ເຊັ່ນ: ບ້ານເກີນ, ບ້ານຫວາຍ, ໂພນໂຮງ, ອື່ໄລ ແລະໃກ້ກວ່າໝູ່ແມ່ນເຂດບ້ານທົ່ວຊຽງ ແລະບ້ານທ່າເດື່ອ.

ຕົກມາຮອດວັນທີ 24 ເມສາ ສັດຕູກໍຍຶດເອົານະຄອນວຽງຈັນໄດ້. ຄະນະລັດຖະບານລາວອິດສະຫຼະກໍໄດ້ຂ້າມຂອງໄປຢູ່ບາງກອກ ປະເທດໄທ. ໃນວັນທີ 13 ພຶດສະພາ ຝະລັ່ງກໍຍຶດຫຼວງພະບາງໄດ້.

3. ເລ່ກົນອັນເລິກແລບຂອງພວກລ່າເມືອງຂຶ້ນຝະລັ່ງ ແລະການຕໍ່ຕ້ານ
ຂອງກຳລັງລາວອິດສະຫຼະ.

ຫຼັງຈາກພວກລ່າເມືອງຂຶ້ນຝະລັ່ງຍຶດເອົາປະເທດລາວໄດ້ ເປັນເທື່ອທີ່ສອງແລ້ວ, ກໍໄດ້ວາງແຜນນະໂຍບາຍອັນເລິກແລບ ເພື່ອຄອບຄອງລາວຕໍ່ໄປ ໂດຍໄດ້ໂຄສະນາຫຼອກລວງວ່າ ຈະມອບເອກະລາດໃຫ້ແກ່ລາວ. ດັ່ງນັ້ນ ພວກເຂົາຈຶ່ງໄດ້ຈັດຕັ້ງກົງຈັກການປົກຄອງຂຶ້ນ ໂດຍຍົກເອົາພຸກຄົນທີ່ມີຄວາມຈົງຮັກພັກດີຕໍ່ຕົນຂຶ້ນກຳອຳນາດ. ພວກເຂົາໄດ້ບົ່ງການໃຫ້ຈັດຕັ້ງລັດຖະບານ ແລະສະພາຮ່າງລັດຖະທຳມະນູນຂຶ້ນ ເພື່ອປົກຄອງປະເທດ. ພໍຮອດ ວັນທີ 11 ພຶດສະພາ 1949 ເຈົ້າຊີວິດສີສະຫວ່າງວົງ ກໍໄດ້ປະກາດໃຊ້ລັດຖະທຳມະນູນເປັນທາງການ. ຕໍ່ມາໃນວັນທີ 27 ເດືອນດຽວກັນກໍໄດ້ມີການເຊັນສັນຍາຮ່ວມສະບັບໜຶ່ງ ລະຫວ່າງຝະລັ່ງ ແລະລັດຖະບານຫຸ່ນເອີ້ນວ່າ "ໂນດດອີວັງດີ" ສັນຍາດັ່ງກ່າວໄດ້ມອບສິດອຳນາດການປົກຄອງພາຍໃນບາງສ່ວນໃຫ້ແກ່ລັດຖະບານ – ສ່ວນທະຫານ, ເສດຖະກິດຕ່າງປະເທດ ແລະວັດທະນະທຳ ແມ່ນຍັງຂຶ້ນກັບຝະລັ່ງຢູ່.

ໃນວັນທີ 18 ມີນາ 1949 ພວກເຂົາກໍໄດ້ແຕ່ງຕັ້ງໃຫ້ບຸນອູ້ມ ເປັນນາຍົກລັດຖະມົນຕີ. ລັດຖະບານຂອງບຸນອູ້ມ ໄດ້ເປີດການເຈລະຈາກັບຝະລັ່ງຮອດ ວັນທີ 19 ກໍລະກົດ ໃນປີດຽວກັນກໍໄດ້ເຊັນສັນຍາຮ່ວມຝະລັ່ງ ລາວ ຂຶ້ນ ເພື່ອມອບອັນທີ່ເຂົາເອີ້ນວ່າ "ເອກະລາດໃນເຄືອສະຫະພັນຝະລັ່ງ" (ເອກະລາດແບບຈອມປອມ) ໃຫ້ແກ່ລາວ. ພວກເຂົາໄດ້ອອກແຮງອູ້ມຊູລັດຖະບານຂອງບຸນອູ້ມ ໂດຍສະເພາະທາງດ້ານການທະຫານ, ພວກເຂົາໄດ້ສ້າງໂຮງຮຽນນາຍທະຫານ ທີ່ດົງເໜັນ ແລະໃຫ້ການເຝິກແອບກອງທະຫານຢູ່ຕາມທ້ອງຖິ່ນຕ່າງໆ. ໃນຂະນະດຽວກັນ ກໍໄດ້ອອກແຮງໂຄສະນາດູດດຶງເອົາລາວອິດສະຫຼະ ທີ່ໜີໄປຢູ່ປະເທດໄທໃຫ້ເຂົ້າມາຍອມຈຳນົນ.

ສ່ວນລາວອິດສະຫຼະ ກໍໄດ້ເຄື່ອນໄຫວຕໍ່ສູ້ດ້ວຍກຳລັງອາວຸດ ຢູ່ທຸກໜົນທຸກແຫ່ງທາງພາກຕາເວັນອອກ ແຕ່ແຂວງຫົວພັນຮອດສາລະວັນອັດຕະປື. ພວກທີ່ຢູ່ປະເທດໄທກໍໄດ້ແບ່ງໜ້າທີ່ກັນ ຮັບຜິດຊອບເປັນຕົ້ນວ່າ ຊອກວຽກເຮັດງານທຳ ເພື່ອຫາເງິນຊື້ອາວຸດ, ອີກຈຳນວນໜຶ່ງ ຂ້າມມາສະກັດລັດຕີ

ເພື່ອບັ່ນທອນກຳລັງສັດຕູ ແລະຍາດອາວຸດຈາກສັດຕູມາຕີສັດຕູ, ໂດຍມີການປະສານສົມທົບ ກັບຂະບວນລາວຕໍ່ຕ້ານທາງພາກຕາເວັນອອກ.

ຕໍ່ໜ້າການໂຄສະນາຖູດດຶງຂອງພວກລ່າເມືອງຂຶ້ນຝະລັ່ງນັ້ນ, ໃນຂະບວນລາວອິດສະຫຼະພັດກົມ ກໍ່ໄດ້ມີການຂັດແຍ້ງກັນ. ສະມະຊິກລາວອິດສະຫຼະຈຳນວນໜຶ່ງທີ່ມີແນວຄິດຄອນເຄນ ແລະ ເປັນນັກສວຍໂອກາດເຫັນດີໃຫ້ຍຸບຂະບວນລາວອິດສະຫຼະ ແລ້ວເຂົ້າມາຮ່ວມມືກັບຝະລັ່ງ. ພວກນີ້ ໄດ້ທະຍອຍກັນມາຮ່ວມມືກັບຝະລັ່ງ ເຊັ່ນ: ກະຕາຍ, ອຸ່ນ ຊະນະນິກອນ... ອີກພວກໜຶ່ງ ອັນມີສະເດັດສຸພານຸວົງເປັນຫົວໜ້າ ເຫັນວ່າ ຕ້ອງຍົກສູງຄົມທຸງລາວອິດສະຫຼະ ເດັດດ່ຽວຕໍ່ສູ້ ຈົນເຖິງຂັ້ນຂາດເອົາໄຊຊະນະຢ່າງສົມບູນ ຈຶ່ງໄດ້ພາກັນເດີນທາງກັບຄືນປະເທດ ເພື່ອສືບຕໍ່ເຮັດການຕໍ່ສູ້.ສະເດັດສຸພານຸວົງ, ທ່ານ ພູມີ ວົງວິຈິດ ໄດ້ເຄື່ອນໄຫວຢູ່ຕາມເຂດຊາຍແດນ ລາວ ໄທ ໃນເຂດເມືອງຊຽງຮ່ອນ ຊຽງລົມ ແຂວງໄຊຍະບູລີ ແລະ ຫົວຂອງ. ສ່ວນທ່ານ ສີງກະໂປໄດ້ເຄື່ອນໄຫວ ຢູ່ແຂວງຄຳມ່ວນ ແລະສະຫວັນນະເຂດ. ຕໍ່ມາຜູ້ນຳແຕ່ລະຂະບວນກໍ່ໄດ້ເດີນທາງໄປສົມທົບກັບບັນດາຜູ້ນຳຂະບວນຕໍ່ຕ້ານຢູ່ທາງພາກຕາເວັນອອກ ເພື່ອວາງແຜນນະໂຍບາຍການເມືອງ ແລະ ທິດທາງການຕໍ່ສູ້ໃນຂັ້ນຕໍ່ໄປ.

## ຄຳຖາມເພື່ອຄົ້ນຄວ້າ.

1. ຈົ່ງເລົ່າເຖິງສະພາບການ ໃນລາວພາຍຫຼັງໄດ້ຍຶດອຳນາດ.
2. ລັດຖະບານລາວອິດສະຫຼະໄດ້ຕໍ່ສູ້ຕ້ານຝະລັ່ງ ເພື່ອປົກປັກຮັກສາເອກະລາດແນວໃດ ?
3. ຈົ່ງເລົ່າເຖິງເລ່ກົນຂອງພວກລ່າເມືອງຂຶ້ນຝະລັ່ງ ແລະການຕໍ່ສູ້ຂອງຂະບວນລສວອິດສະຫຼະ ?

ບົດທີ 8.

# ການສ້າງຕັ້ງແນວລາວອິດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານ.

ຫຼັງຈາກທີ່ລັດຖະບານລາວພັດຖິ່ນ ເກີດແຕກແຍກກັນອອກເປັນສອງກຸ່ມແລ້ວ, ກຸ່ມໜຶ່ງ ມີກະຕາຍເປັນຫົວໜ້າ ໄດ້ຊັກຊວນອອນເອົາລາວອິດສະຫຼະຈຳນວນໜຶ່ງ ເຊິ່ງມີຫຼາກໜົມຄອນແຄມ ແລະ ເປັນມັກສວຍໂອກາດພັ້ນເຂົ້າມາຍອມຈຳນົນຕໍ່ຝຣັ່ງ ແລະ ເຂົ້າຮ່ວມລັດຖະບານຫຸ່ນ ທີ່ຝຣັ່ງຕັ້ງຂຶ້ນ ໂດຍມີບຸນອູ້ມ ເປັນນາຍົກ. ອີກກຸ່ມໜຶ່ງ ໂດຍແມ່ນສະເດັດ ສຸພານຸວົງ ເປັນຫົວໜ້າ ໄດ້ເດັດດ່ຽວຕໍ່ສູ້ເພື່ອຄວາມເປັນເອກະລາດ. ກຸ່ມນີ້ໄດ້ມີການປະສານສົມທົບກັບຂະບວນລາວຕໍ່ຕ້ານ ຢູ່ທາງພາກຕາເວັນອອກ ເມື່ອມີການປະສານສົມທົບກັນລະຫວ່າງກຳລັງຕໍ່ຕ້ານ ໄດ້ເຮັດໃຫ້ຂະບວນຕໍ່ສູ້ຂະຫຍາຍອອກໄປທົ່ວປະເທດ, ໂດຍສະເພາະແມ່ນການຕໍ່ສູ້ແບບກອງຫຼອນ ເພື່ອບັ່ນທອນກຳລັງຂອງສັດຕູ. ແຕ່ວ່າການພົວພັນລະຫວ່າງພື້ນຕ່າງໆ ຍັງບໍ່ທັນແໜ້ນແຟ້ນເທື່ອ, ດັ່ງນັ້ນ ການຕໍ່ສູ້ຈຶ່ງໄດ້ຮຽກຮ້ອງໃຫ້ມີການນຳເປັນເອກະພາບກັນໃນທົ່ວປະເທດ, ເພື່ອນຳພາການຕໍ່ສູ້ຍາດເອົາໄຊຊະນະໃນໄລຍະໃໝ່.

## 1. ກອງປະຊຸມໃຫຍ່ສ້າງຕັ້ງແນວລາວອິດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານ.

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສະພາບການດັ່ງກ່າວ, ສະເດັດເຈົ້າສຸພານຸວົງ, ຕາງໜ້າຂະບວນການຕໍ່ຕ້ານ ໄດ້ຮຽກໂຮມກອງປະຊຸມໃຫຍ່ຜູ້ແທນລາວຕໍ່ຕ້ານ ເຊິ່ງລວມມີລາວອິດສະຫຼະທີ່ບໍ່ຍອມຈຳນົນ ແລະ ພວກທີ່ສືບຕໍ່ການຕໍ່ຕ້ານຝຣັ່ງຢູ່ເຂດເມືອງບໍລະພາ, ມະຫາໄຊ, ເມືອງແມດ, ກາສີ, ຊຽງຄໍ້, ຫົວພັນ, ອັດຕະປື ແລະລວມທັງພວກທີ່ເຄື່ອນໄຫວ ຢູ່ເຂດຄວບຄຸມຂອງສັດຕູ ໃນທົ່ວປະເທດ ໃຫ້ມາຮ່ວມປະຊຸມກັນ. ກອງປະຊຸມນີ້ໄດ້ໄຂຂຶ້ນຢູ່ເຂດສາຍແດນລາວ ຫວຽດນາມ ແຂວງຫົວພັນ ໃນວັນທີ 13 ສິງຫາ 1950 ຜູ້ແທນຈຳນວນ 150 ຄົນ ຕາງໜ້າໃຫ້ຊົນຊາດ, ຊົນເຜົ່າ ຊັ້ນຄົນ ແລະຂະບວນຕໍ່ສູ້ຕ່າງໆ ໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ. ກອງປະຊຸມນີ້ ໄດ້ລົງມະຕິຈັດຕັ້ງແນວໂຮມແຫ່ງຊາດຂຶ້ນ ເອີ້ນວ່າ "ແນວລາວອິດສະຫຼະ" ເພື່ອສືບທອດພາລະກິດຂອງລາວອິດສະຫຼະ ແລະໄດ້ວາງແນວທາງການເມືອງ 12 ຂໍ້ ອອກ ເພື່ອນຳພາການຕໍ່ສູ້ໃນໄລຍະໃໝ່.

ກອງປະຊຸມໄດ້ເລືອກຕັ້ງ ຄະນະກຳມະການສູນກາງແນວລາວອິດສະຫຼະ ໂດຍແມ່ນ ສະເດັດສຸພານຸວົງເປັນປະທານ ແລະຈັດຕັ້ງລັດຖະບານລາວຕໍ່ຕ້ານຂຶ້ນ ເຊິ່ງປະກອບດ້ວຍບຸກຄົນດັ່ງຕໍ່ໄປນີ້:

1. ສະເດັດເຈົ້າສຸພານຸວົງ ເປັນນາຍົກລັດຖະມົນຕີວ່າການຕ່າງປະເທດ.

2. ໄກສອນ ພົມວິຫານ ລັດຖະມົນຕີປ້ອງກັນຊາດ

3. ພູຣົກ ພູມສະຫວັນ ລັດຖະມົນຕີ ເສດຖະກິດ ການເງິນ.

4. ພູມີ ວົງວິຈິດ ລັດຖະມົນຕີ ກະຊວງພາຍໃນ

5. ເຈົ້າສຸກ ວົງສັກ ລັດຖະມົນຕີ ໂຄສະນາ ສຶກສາ ແລະວັດທະນະທໍາ.

ກອງປະຊຸມໃຫຍ່ໄດ້ຕົກລົງ ເອົາທຸງວົງເດືອນ ເຊິ່ງແມ່ນທຸງລາວອິດສະຫຼະ ເປັນທຸງປະຈໍາຊາດ ແລະຮັບຮອງເອົາເນື້ອຮ້ອງເພງຊາດໃໝ່ທີ່ແຕ່ງໂດຍ ທ່ານ ສີຊະນະ ສີສານ.

## 2. ບົດບາດຂອງແນວລາວອິດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານ.

ຫຼັງຈາກກອງປະຊຸມໃຫຍ່ໄດ້ສໍາເລັດລົງແລ້ວ, ບັນດາຜູ້ແທນທົ່ວປະເທດ ກໍໄດ້ດໍາເນີນການປຸກລຸກຂົນຂວາຍປະຊາຊົນຢ່າງກວ້າງຂວາງ. ບັນດາຊົນຄົນຕ່າງໆ ແລະອົງການຈັດຕັ້ງທີ່ຮັກຊາດເຊັ່ນ: ສະມາຄົມຊາວໜຸ່ມກູ້ຊາດ, ສະມາຄົມແມ່ຍິງອິດສະຫຼະ, ສະມາຄົມລາວສູງຕ້ານຜະລັ່ງ... ກໍໄດ້ເຂົ້າຮ່ວມໃນແນວລາວອິດສະຫຼະຢ່າງໜາແໜ້ນ. ພຽງແຕ່ໃນໄລຍະ 1 ປີ ເທົ່ານັ້ນ, ແນວລາວອິດສະຫຼະໄດ້ເຕົ້າໂຮມເອົາສະມາຊິກເຂົ້າໃນອົງການຈັດຕັ້ງໄດ້ນັບເປັນພື້ນໆຄົນ. ດ້ວຍນັ້ນ ຄວາມສາມັກຄີປວງຊົນຈຶ່ງນັບມື້ນັບແໜ້ນແກ່ນ, ໄດ້ກາຍເປັນບ່ອນອີງໃຫ້ອໍານາດການປົກຄອງຕໍ່ຕ້ານ, ເຮັດໃຫ້ຂະບວນແນວລາວອິດສະຫຼະເຕີບໃຫຍ່ຂະຫຍາຍຕົວຢ່າງກວ້າງຂວາງ, ສາມາດຕີເອົາຊະນະສັດຕູຢ່າງລຽນຕິດ, ເຂດປົດປ່ອຍໄດ້ຕິດຈອດກັນແຕ່ເໜືອຮອດໃຕ້ທາງພາກຕາເວັນອອກ.

ຕໍ່ເວທີສາກົນ ຊື່ສຽງຂອງລັດຖະບານລາວຕໍ່ຕ້ານ ໄດ້ດັງກ້ອງໄປທົ່ວໂລກ ອັນເຮັດໃຫ້ບັນດາປະຊາຊາດ ທີ່ຮັກຫອມສັນຕິພາບໃນທົ່ວໂລກຮູ້ຈັກ ເຫັນໃຈ ແລະໃຫ້ຄວາມສະໜັບສະໜູນການຕໍ່ຕ້ານອັນເປັນທໍາຂອງປະຊາຊົນລາວ. ໃນວັນທີ 11 ມີນາ 1951 ລັດຖະບານລາວຕໍ່ຕ້ານໄດ້ເຂົ້າຮ່ວມ - ກອງປະຊຸມ "ແນວພັນທະພາບປະຊາຊົນອິນດູຈີນ" ເຊິ່ງປະກອບດ້ວຍ ຜູ້ຕາງໜ້າຂອງລາວ, ຫວຽດນາມ ແລະກໍາປູເຈຍ. ກອງປະຊຸມໄດ້ຜ່ານກະແຫຼງການຮ່ວມສະບັບໜຶ່ງ ເພື່ອເປັນພື້ນຖານໃຫ້ແກ່ການປະຕິວັດຊາດຄື: "ຂັບໄລ່ຈັກກະພັດຜະລັ່ງຜູ້ຮຸກຮານອອກຈາກປະເທດຂອງຕົນ, ສ້າງສາມປະເທດໃຫ້ເປັນປະເທດ ເອກະລາດ ເອກະພາບ ປະຊາທິປະໄຕ ຮັ່ງມີແລະເຂັ້ມແຂງ" ກອງປະຊຸມດັ່ງກ່າວນີ້ ຈັດຂຶ້ນບົນພື້ນຖານຄວາມສະເໝີພາບ, ຊ່ວຍເຫຼືອເຊິ່ງກັນແລະກັນ, ເຄົາລົບອະທິປະໄຕຂອງກັນແລະກັນ ກ້າວໄປເຖິງມີການຈັດຕັ້ງກໍາມະການພັນທະພາບປະຊາຊົນສາມຊາດ. ໃນເດືອນກັນຍາ 1952 ແນວລາວອິດສະຫຼະ ໄດ້ສົ່ງຜູ້ແທນຂອງຕົນໄປຮ່ວມກອງປະຊຸມສາມັກຄີສາກົນ ອາຊີ ອາຟຣິກາ - ປາຊີຟິກ ຢູ່ປັກກິ່ງປະເທດຈີນ ແລະກອງປະຊຸມສາກົນທີ່ກຸງວຽນ ປະເທດໂອຕາລິດ .

ໃນປີດຽວກັນນັ້ນເອງ ຜູ້ແທນຊາວໜຸ່ມກໍໄດ້ໄປຮ່ວມກອງປະຊຸມໃຫຍ່ຊາວໜຸ່ມ ແລະນັກສຶກສາສາກົນ ທີ່ເມືອງບູກາແລດ ປະເທດ ລູມານີ. ໃນແຕ່ລະກອງປະຊຸມໃຫຍ່ດັ່ງກ່າວ, ຜູ້ແທນລາວ ໄດ້ຂຶ້ນກ່າວຟ້ອງໂທດກຳຂອງຈັກກະພັດຜະລັ່ງ ທີ່ມີຕໍ່ປະຊາຊົນລາວ, ອັນເຮັດໃຫ້ບັນດາກຳລັງຮັກຫອມສັນຕິພາບ ແລະຄວາມເປັນທຳໃນທົ່ວໂລກ ເຫັນອົກເຫັນໃຈ ແລະສະໜັບສະໜູນການຕໍ່ສູ້ອັນເປັນທຳຂອງປະຊາຊົນລາວ. ກອງປະຊຸມສັນຕິພາບໂລກ ຢູ່ກຸງວຽນ (ປະເທດໂອຕາລິດ 1952 ໄດ້ລົງມະຕິ ສະໜັບສະໜູນການຕໍ່ສູ້ຂອງປະຊາຊົນລາວ ແລະທວງໃຫ້ຈັກກະພັດຜະລັ່ງຜູ້ຮຸກຮານ ຕ້ອງຖອນອອກຈາກລາວ—ຫວຽດນາມ ແລະກຳປູເຈຍໂດຍໄວ.

ຜົນສະທ້ອນຂອງກອງປະຊຸມໃຫຍ່ສ້າງຕັ້ງແນວລາວອິດສະຫຼະ ໄດ້ໄຂຊ່ອງທາງໃຫ້ການຕໍ່ສູ້ເຕີບໃຫຍ່ຂະຫຍາຍຕົວ, ພ້ອມທັງເປັນການປ່າວເຕືອນ ໃຫ້ຊາວໂລກຮັບຮູ້ການຕໍ່ສູ້ອັນຖືກຕ້ອງແລະເປັນທຳຂອງປະຊາຊົນລາວອີກດ້ວຍ.

## ຄຳຖາມເພື່ອຄົ້ນຄວ້າ.

1. ຈົ່ງເລົ່າເຖິງກອງປະຊຸມໃຫຍ່ສ້າງຕັ້ງແນວລາວອິດສະຫຼະ ແລະລັດຖະບານລາວຕໍ່ຕ້ານ.
2. ຫຼັງຈາກກອງປະຊຸມໃຫຍ່ແນວລາວອິດສະຫຼະ ໄດ້ສຳເລັດລົງແລ້ວ, ແນວລາວອິດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານ ໄດ້ມີບົດບາດສຳຄັນຕໍ່ພາຍໃນ ແລະຕໍ່ໂລກແນວໃດ ?

## ບົດທີ 9.

# ກອງປະຊຸມ ເຊີແນວປີ 1954
# ກ່ຽວກັບການສ້າງສັນຕິພາບ ຢູ່ອິນດູຈີນ.

ໃນຂະນະທີ່ບັນດາປະເທດມະຫາອຳນາດ ຄື: ສະຫະພາບໂຊວຽດ, ຈີນ, ອາເມລິກາ, ຝຣັ່ງ ແລະອັງກິດ ຫາກໍສຳເລັດໃນການເຈລະຈາແກ້ໄຂບັນຫາເກົາຫຼີຢູ່ປັນມຸນ, ພໍດີຂ່າວການ ເສຍໄຊ ຂອງຈັກກະພັດຝຣັ່ງ, ຢູ່ການທັບ ດຽນບຽນຟູ ໄດ້ສົ່ງມາເຖິງ. ພໍຮອດວັນທີ 8 ເດືອນພຶດສະພາ 1954. ກອງປະຊຸມໄດ້ເລີ່ມເປີກສາຫາລືບັນຫາອິນດູຈີນຕໍ່ ອັນເຮັດໃຫ້ກອງປະຊຸມໄດ້ດຳເນີນໄປ-ຢ່າງເຄັ່ງຂຶ້ນ, ດຸເດືອດ ແລະຮຸນແຮງ, ເນື່ອງຈາກມີການຂັດແຍ້ງກັນຫຼາຍບັນຫາ, ອັນສຳຄັນກວ່າກວ່າໝູ່ແມ່ນການຂັດແຍ້ງລະຫວ່າງຄວາມມຸ່ງມາດປາດຖະໜາຢາກເປັນເອກະລາດ ຂອງປະຊາຊົນອິນດູຈີນກັບຈັກກະພັດຝຣັ່ງຢາກຮັກສາຫົວເມືອງຂຶ້ນຂອງຕົນໄວ້. ເຖິງວ່າຈັກກະພັດຝຣັ່ງ ຈະຖືກຕີໃຫ້ປະລາໄຊຟຢ່າງອັບອາຍຂາຍໜ້າແລ້ວກໍຕາມ, ແຕ່ກໍຍັງຊື່ງຂັງມັນງໍ ຢາກຮັກສາອິດທິພົນຂອງເຂົາຕໍ່ໄປ, ພວກເຂົາໄດ້ຕັ້ງຈຸດປະສົງໄວ້ວ່າ ຈະຕ້ອງກອບຈາກອິນດູຈີນຢ່າງມີກຽດ.ແຕ່ເຖິງຢ່າງໃດກໍຕາມ, ຊາວໂລກໄດ້ຮັບຮູ້ແລ້ວວ່າ, ຝຣັ່ງໄດ້ຖືກຕີໃຫ້ປະລາໄຊຢ່າງອັບອາຍຂາຍໜ້າ - ແລ້ວຈຶ່ງກົ້ມໜ້າໄປຮ່ວມກອງປະຊຸມທີ່ເຊີແນວ ເພື່ອແກ້ໄຂບັນຫາອິນດູຈີນ.

## I ສາຍເຫດທີ່ພາໃຫ້ເກີດມີກອງປະຊຸມ.

1. <u>ສະພາບການຂອງໂລກ</u>. ພາຍຫຼັງສົງຄາມໂລກຄັ້ງທີສອງສິ້ນສຸດລົງ, ໄດ້ເກີດມີປະເທດ-ສັງຄົມນິຍົມຂຶ້ນຢູ່ຢູໂຣບຕາເວັນອອກອີກຫຼາຍປະເທດ, ອັນເຮັດໃຫ້ລະບົບສັງຄົມນິຍົມທີ່ຕິດຕໍ່ເນື່ອງກັນຢູ່ພາກຕາເວັນອອກກາຍເປັນລະບົບໜຶ່ງທີ່ເຂັ້ມແຂງ, ອັນພາຍເຖິງການພັງທະລາຍຂອງລະບອບທຶນນິຍົມທີ່ຄອບຄອງບັນດາປະເທດເຫຼົ່ານັ້ນ. ພໍມາຮອດ 1949, ປະເທດສາທາລະນະລັດ ປະຊາຊົນຈີນໄດ້ຮັບການສ້າງຕັ້ງຂຶ້ນ ອັນເຮັດໃຫ້ຄ້າຍສັງຄົມນິຍົມຍິ່ງເພີ່ມໃຫຍ່ ເຂັ້ມແຂງຂຶ້ນອີກ. ພ້ອມກັນນັ້ນ. ກຳລັງແຮງຂອງຂະບວນປົດປ່ອຍຊາດໄດ້ຟົດເດືອດຂຶ້ນໃນທຸກຂົງເຂດທີ່ເປັນຫົວເມືອງຂຶ້ນຂອງຝຣັ່ງໂດຍສະເພາະແມ່ນຢູ່ອິນດູຈີນ ແລະເຂດທະວີບອາຟຣິກາເໜືອ. ຂະບວນຕໍ່ສູ້ ຂອງຊາວກຳມະກອນຢູ່ປະເທດນາຍທຶນກໍແຮງເປັນກະແສຟົດເດືອດ ອັນເຮັດໃຫ້ນັກລ່າເມືອງຂຶ້ນຝຣັ່ງ ,ຈຳຕ້ອງກົ້ມຫົວໄປເຂົ້າກອງປະຊຸມທີ່ເຊີແນວ.

2. <u>ສະພາບການພາຍໃນຂອງປະເທດຝະລັ່ງ</u>: ຝະລັ່ງກໍ່ເປັນປະເທດໜຶ່ງທີ່ຖືກສົງຄາມໂລກຄັ້ງທີສອງທຳລາຍຢ່າງໜັກ, ໂຮງງານອຸດສາຫະກຳຫຼາຍແຫ່ງຖືກເຜົາຜານ, ເສດຖະກິດພາຍໃນປະເທດຕົກຕໍ່າ, ໄພຫວ່າງງານນັບມື້ນັບເພີ່ມຂຶ້ນ, ພິເສດກວ່າໝູ່ແມ່ນຂະບວນຕໍ່ສູ້ຂອງປະຊາຊົນຝະລັ່ງທີ່ທວງໃຫ້ລັດຖະບານຂອງເຂົາຢຸດເຊົາເຮັດສົງຄາມຢູ່ອິນດູຈີນ. ຍ້ອນວ່າສົງຄາມອິນດູຈີນ ໄດ້ເຮັດໃຫ້ລູກຮັກຫຼານແພງຂອງເຂົາເຈົ້າລົ້ມຕາຍຢ່າງຫຼວງຫຼາຍ, ງົບປະມານທາງທະຫານສ່ວນໃຫຍ່ ກໍ່ແມ່ນໃຊ້ເຂົ້າໃນສົງຄາມອິນດູຈີນ. ຍ້ອນການຕໍ່ສູ້ຢ່າງຮຸນແຮງຂອງປະຊາຊົນຝະລັ່ງ, ຈຶ່ງເຮັດໃຫ້ລັດຖະບານຝະລັ່ງສັບສົນວຸ້ນວາຍ ມີການສັບປ່ຽນລັດຖະບານຕັ້ງຫຼາຍຄັ້ງຫຼາຍທີ, ເຮັດໃຫ້ສະພາບການຢູ່ໃນປະເທດມີຄວາມສັບສົນ. ຂະບວນການຕໍ່ສູ້ປາກົດຂຶ້ນດ້ວຍຫຼາຍຮູບການ, ເຊັ່ນ: ເດີນຂະບວນ, ປະທ້ວງຫວ່ານໃບປິວ ແລະອື່ນໆ, ອັນທີ່ເດັ່ນກວ່າໝູ່ແມ່ນຊາຍສະກັນຜູ້ໜຶ່ງຊື່ ທ້າວ ຣັງລີມາກແຕງ ໄດ້ຂັດຄ້ານບໍ່ຍອມເປັນທະຫານ ເພື່ອມາຮຸກຮານອິນດູຈີນ. ນາງໄວມົງດຽງໄດ້ທຳການປະທ້ວງໂດຍການໄປນອນຂວາງທາງລົດໄຟ ທີ່ຂົນອາວຸດລົງກຳປັ່ນມາອິນດູຈີນ. ເມື່ອກອງປະຊຸມເຈີແນວໄຂຂຶ້ນແລ້ວ, ຂະບວນຕ້ານສົງຄາມອິນດູຈີນຢູ່ຝະລັ່ງ, ໄດ້ສົ່ງຜູ້ຕາງໜ້າຂອງຕົນໄປເຈີແນວເພື່ອທວງໃຫ້ຄະນະຜູ້ແທນຝະລັ່ງທີ່ກອງປະຊຸມຍອມເຊັນສັນຍາ ເພື່ອຢຸດຕິສົງຄາມໂດຍໄວ. ເຫດການເຫຼົ່ານັ້ນ ລ້ວນແຕ່ໄດ້ສ້າງຄວາມຫຍຸ້ງຍາກສັບສົນໃຫ້ລັດຖະບານຝະລັ່ງ ໃນການທີ່ຈະດຳເນີນ ສົງຄາມຢູ່ອິນດູຈີນຕໍ່ໄປ.

3. <u>ສະພາບການຢູ່ອິນດູຈີນ</u>. ຢູ່ທຸກໆສະໜາມຮົບ, ໃນອິນດູຈີນ, ກຳລັງຕໍ່ຕ້ານຂອງປະຊາຊົນລາວ, ຫວຽດນາມ ແລະກຳປູເຈຍພວມຕໍ່ສູ້ຢ່າງແຂງແຮງ ແລະພວມຢູ່ໃນທ່າມີໄຊທຸກບ່ອນ. ສະເພາະຢູ່ລາວ, ຄຽງຄູ່ກັບກອງທັບ ແລະປະຊາຊົນຫວຽດນາມ ທີ່ທຳການບຸກໂຈມຕີເຂົ້າດຽນບຽນຟູນັ້ນກອງທັບ ແລະປະຊາຊົນລາວກໍ່ໄດ້ເປີດໜ້າຮົບຂຶ້ນໃນລາວ ເພື່ອເປັນການສົມທົບກັບກອງທັບແລະປະຊາຊົນທົ່ວອິນດູຈີນ.

ກ. <u>ບັ້ນລົບລະດູໜາວຕໍ່ລະດູບານໃໝ່</u>: ເພື່ອເປັນການສົມທົບກັບທຸກໆສະໜາມຮົບຢູ່ອິນດູຈີນ ໃນເວລານັ້ນ, ພໍຮອດ ເດືອນ 12 ປີ 1953 ກອງທັບລາວອິດສະລະ ສົມທົບກັບທະຫານ ອາສາສະໝັກຫວຽດນາມ ໄດ້ເປີດໜ້າຮົບຢູ່ພາກກາງຂອງລາວ ປົດປ່ອຍໄດ້ສ່ວນໃຫຍ່ຂອງແຂວງຄຳມ່ວນແລະສ່ວນໜຶ່ງຂອງແຂວງສະຫວັນນະເຂດ, ອັນເຮັດໃຫ້ສັດຕູຕົກຢູ່ໃນສະພາບຖືກຕັດແບ່ງ ແລະ ປິດລ້ອມຕົວເມືອງທ່າແຂກ ແລະການທັບອາກາດເຊໂນ. ພ້ອມກັນນັ້ນກໍ່ເປີດໜ້າຮົບປົດປ່ອຍແຂວງຫົວພັນ . ພໍຮອດເດືອນ ກຸມພາ 1954 ກອງທັບ ແລະປະຊາຊົນເຮົາກໍ່ໄດ້ບຸກຕີເຂົ້າພູພຽງທາງພາກໃຕ້, ປົດປ່ອຍແຂວງອັດຕະປື, ພູພຽງບໍລະເວນ ແລະຕົວເມືອງເຫຼົ່າງາມ ແຂວງສາລະວັນສຳເລັດ. ໃນປີ

ດຽວກັນນັ້ນ ຢູ່ພາກເໜືອກອງທັບກໍໄດ້ບຸກໂຈມຕີຂະໜາດໃຫຍ່ເຂົ້າດ້ານຣົບ ນ້ຳຮູ ປົດປ່ອຍໝົດແຂວງຜົ້ງສາລີ ແລະສ່ວນໜຶ່ງຂອງແຂວງຫຼວງພະບາງ. ລວມຄວາມວ່າ, ຂັ້ນຣົບລະດູໜາວຕໍ່ລະດູບານໃໝ່ນີ້, ສັດຕູກໍຖືກໂຈມຕີຢ່າງໜັກ, ພວກເຮົາສາມາດທັບມ້າງແນວປ້ອງກັນດ້ານຣົບນ້ຳຮູ ປົດປ່ອຍແຂວງຜົ້ງສາລີ, ຊຳເໜືອ, ຕັດທາງລຳລຽງໄປຫາ ດຽນບຽນຟູ ເຮັດໃຫ້ການທັບ ດຽນບຽນຟູ ຖືກໂດດດ່ຽວຢູ່ໃນວົງປິດລ້ອມ.

ຂ. <u>ຂັ້ນຣົບ ດຽນບຽນຟູ</u>. ເພື່ອສືບຕໍ່ທັບມ້າງແຜນການທາງທະຫານຂອງສັດຕູ, ໃນວັນທີ 13 ເດືອນ ມີນາ 1954 ກອງທັບ ແລະປະຊາຊົນຫວຽດນາມ ໄດ້ເປີດການບຸກໂຈມຕີເຂົ້າການທັບໝັ້ນແຫ່ງສຸດທ້າຍ ຂອງຝຣັ່ງຢູ່ດຽນບຽນຟູ ຢ່າງພິລະອາດຫານ, ສາມາດທັບສູນສັດຕູໄດ້ 16.200 ຄົນ, ຍິງແລະທຳລາຍບິນໄດ້ 62 ລຳ, ໃນຂັ້ນຣົບທີ່ດຸເດືອດ ແລະທຸລະກັນດານທີ່ສຸດ. ນັກຣົບຫວຽດນາມຫຼາຍຮ້ອຍສະຫາຍ ໄດ້ຖືກຄັດເລືອກເປັນວິລະຊົນ ແລະນັກຣົບແຂ່ງຂັນ. ໄຊຊະນະຢູ່ດຽນບຽນຟູພ້ອມກັບໄຊຊະນະລະດູໜາວ ແລະລະດູ ບານໃໝ່ ແລະແຫ່ງອື່ນໆ ໃນທົ່ວອິນດູຈີນ, ລ້ວນແຕ່ປະສານສົມທົບກັນເປັນຈັງຫວະ ແລະສົ່ງຜົນສະທ້ອນໃຫ້ແກ່ການຕັດສິນ ໃນການສ້າງສັນຕິພາບ ໃນອິນດູຈີນ. ໄຊຊະນະດັ່ງກ່າວໄດ້ເປັນຂີດໝາຍບາດລ້ຽວອັນສຳຄັນ, ມັນໄດ້ບັງຄັບໃຫ້ພວກລ່າເມືອງຂຶ້ນຝຣັ່ງຕ້ອງຍອມເຂົ້າຮ່ວມກອງປະຊຸມເຈີແນວປີ 1954 ກ່ຽວກັບການສ້າງສັນຕິພາບຢູ່ອິນດູຈີນ.

## II ບັນຫາຂັດແຍ້ງຢູ່ໃນກອງປະຊຸມເຈີແນວປີ 1954.

ຫຼັງຈາກການເຈລະຈາແກ້ໄຂບັນຫາເກົາຫຼີສິ້ນສຸດລົງ, ພໍດີຂ່າວການເສຍໄຊຂອງຝຣັ່ງທີ່ດຽນບຽນຟູ ມາເຖິງ. ເມື່ອນັ້ນ ໂມໂລຕອບ ຕາງໜ້າຄະນະຜູ້ແທນໂຊວຽດ ໄດ້ສະເໜີໃຫ້ ໄຂກອງປະຊຸມຂຶ້ນ ເພື່ອແກ້ໄຂບັນຫາອິນດູຈີນ, ໂດຍໄດ້ເຊີນເອົາຄະນະຜູ້ແທນຫວຽດນາມ, ລາວ ແລະກຳປູເຂົ້າຮ່ວມ. ກອງປະຊຸມໄດ້ໄຂຂຶ້ນໃນວັນທີ 8 ພຶດສະພາ 1954 ພາຍໃຕ້ບັນຍາກາດທີ່ເຄັ່ງຂຶງ ແລະດຸເດືອດ. ທ່ານ ຟາມວັນດົງ ຫົວໜ້າຄະນະຜູ້ແທນ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ (ໃນເວລານັ້ນ ທ່ານ ເປັນຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງ ຕ່າງປະເທດແຫ່ງລັດຖະບານ ປະຊາທິປະໄຕ ຫວຽດນາມ) ໄດ້ສະເໜີກອງປະຊຸມໃຫ້ເຊີນເອົາ ຝ່າຍທີ່ກ່ຽວຂ້ອງກັບສົງຄາມອິນດູຈີນເຂົ້າຮ່ວມເຈລະຈານຳ, ໂດຍສະເພາະແມ່ນຜູ້ແທນຂອງຝ່າຍປະເທດລາວ ແລະຜູ້ແທນຂອງຂະແນວຕໍ່ຕ້ານ. ຄຳສະເໜີ ໄດ້ຮັບຄຳເຫັນດີຈາກຄະນະຜູ້ແທນ ສະຫະພາບ

ໂຊວຽດ ແລະຈີນ (1) ແຕ່ວ່າກໍຖືກຄັດຄ້ານຢ່າງເດັດຂາດ ຈາກຄະນະຜູ້ແທນຝະລັ່ງ ແລະອາເມລິກາ. ພາຍຫຼັງຈາກຟັງຄຳອະທິບາຍອັນຊອບດ້ວຍເຫດແລະຜົນຂອງທ່ານ ຟາມວັນດົງ, ພວກຈັກກະພັດຈິ່ງຍອມຮັບເອົາຄະນະຜູ້ແທນຂອງຝ່າຍປະເທດລາວ ໂດຍແມ່ນ ທ່ານ ໜູຮັກ ພູມສະຫວັນ ເປັນຫົວໜ້າ.

ແຕ່ເຖິງຢ່າງໃດກໍຕາມ ພວກເຂົາຍັງກີດໜ່ວງກ່ວງດຶງທ່າອຽງຂອງຝ່າຍປະເທດລາວ ກົງກັນຂ້າມພວກເຂົາຊ້ຳໄປສະໜັບສະໜູນຄຳເຫັນຂອງຄະນະຜູ້ແທນລັດຖະບານລາຊະອານາຈັກລາວ ອັນມີ ສຸຍ ຊະນະນິກອນ ເປັນຫົວໜ້າ.

ໃນເວລານັ້ນ ຢູ່ອິນດູຈີນ ພາຍຫຼັງໄຊຊະນະໃຫຍ່ຢູ່ດຽນບຽນຟູ ປະຊາຊົນລາວ, ຫວຽດນາມ ແລະກຳປູເຈຍໄດ້ສືບຕໍ່ຕີສັດຕູຢູ່ທົ່ວທຸກບ່ອນ ອັນເຮັດໃຫ້ກອງທະຫານຝະລັ່ງຖືກດັບສູນຢ່າງຫຼວງຫຼາຍ ສະພາບເປັນເຊັ່ນນັ້ນ ໄດ້ເຮັດໃຫ້ປະຊາຊົນຝະລັ່ງຜູ້ຮັກຫອມສັນຕິພາບ ເກີດຄວາມເບື່ອໜ່າຍ ພາກັນລຸກຮື້ຂຶ້ນເດີນຂະບວນຄັດຄ້ານລັດຖະບານເຮັດໃຫ້ ແວງຊັງ ໂອລີໂອນ ຕົກຕຳແໜ່ງໄປ. ພາຍຫຼັງການເຈລະຈາຖົກຖຽງກັນຢ່າງເຄັ່ງຂຶ້ນເປັນເວລາ 75 ວັນ ສັນຍາເຊີແນວຈຶ່ງໄດ້ຖືກເຊັນກັນ ໃນວັນທີ 20 ກໍລະກົດ 1954.

## III ເນື້ອໃນແລະ ຄວາມໝາຍຂອງສັນຍາເຊີແນວກ່ຽວກັບອິນດູຈີນ.

1. ເນື້ອໃນລວມ: ເນື້ອໃນອັນເປັນພື້ນຖານຂອງສັນຍາເຊີແນວ ປີ 1954 ລວມມີ 2 ເນື້ອໃນໃຫຍ່ຄື: - ບັນດາປະເທດທີ່ຮ່ວມກອງປະຊຸມ ປະກາດຮັບຮອງເອກະລາດ, ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງສາມປະເທດອິນດູຈີນ ຄື: ລາວ ຫວຽດນາມ ແລະກຳປູເຈຍ.

- ເພື່ອຍຸຕິສົງຄາມ ແລະນຳເອົາສັນຕິພາບມາສູ່ຫວຽດນາມນັ້ນ ກອງປະຊຸມໄດ້ເຫັນດີໃຫ້ສອງຝ່າຍປະຕິບັດການຍຸດຍິງ, ສົ່ງສະເລີຍເສິກ, ຮັບປະກັນບໍ່ໃຫ້ມີການຈຳແນກຝ່າຍໃດ ຝ່າຍໜຶ່ງ ແລະບໍ່ໃຫ້ເກັບເຄັ້ນບຸກຄົນທີ່ໄດ້ຮ່ວມງານກັບຝ່າຍໃດຝ່າຍໜຶ່ງ. ເຂດປອດທະຫານຊົ່ວຄາວ ໄດ້ກຳນົດເອົາເສັ້ນຂະໜານທີ 17 ເຊິ່ງຢູ່ລຽບຕາມແຄມຝັ່ງແມ່ນ້ຳເບັນຫາຍ ເຂດປອດທະຫານນີ້ພຽງແຕ່ມີລັກສະນະຊົ່ວຄາວເທົ່ານັ້ນ ບໍ່ອາດວ່າເປັນສາຍແດນຕະຫຼອດໄປໄດ້.

ສັນຍາເຊີແນວ ຍັງຫ້າມບໍ່ໃຫ້ສົ່ງທະຫານ ຫຼືພົນລະເຮືອນ, ການທະຫານຂອງຕ່າງປະເທດເຂົ້າມາອິນດູຈີນ. ຫ້າມບໍ່ໃຫ້ຕ່າງປະເທດຕັ້ງຖານທັບຢູ່ອິນດູຈີນ ແລະບໍ່ອະນຸຍາດໃຫ້ຊາດໃດ ໃຊ້

---

(1) ໝາຍເຫດ: ຈີນໃນເວລານັ້ນ ຍັງເປັນມິດກັບຄ້າຍສັງຄົມນິຍົມຢູ່.

ດິນແດນຂອງອິນດູຈີນ ເພື່ອກໍ່ສົງຄາມຮຸກຮານປະເທດອື່ນ.

2. <u>ເນື້ອໃນຂອງສັນຍາເຊີເນວຕໍ່ລາວ</u>:

ເນື້ອໃນຂອງສັນຍາໄດ້ບົ່ງບອກຢ່າງຈະແຈ້ງຕໍ່ແຕ່ລະບັນຫາຂອງແຕ່ລະປະເທດ. ຕໍ່ລາວ, ສັນຍາໄດ້ວາງບັນຫາອອກເປັນ 6 ບັນຫາໃຫຍ່ລວມມີ 40 ມາດຕາ.

<u>ບັນຫາທີ 1</u>: ການຢຸດຍິງ ແລະການຖອນທະຫານຕ່າງດ້າວອອກຈາກລາວ ໃຫ້ທຸກຝ່າຍເລີ່ມປະຕິບັດແຕ່ 8 ໂມງເຊົ້າ ເວລາທ້ອງຖິ່ນຂອງວັນທີ 6 ສິງຫາ 1954 ເປັນຕົ້ນໄປ ສ່ວນການຖອນທະຫານຕ່າງດ້າວອອກຈາກລາວນັ້ນ ໃຫ້ເຮັດແລ້ວພາຍໃນກຳນົດ 120 ວັນ ນັບແຕ່ວັນທີ່ສັນຍາ ມີຜົນບັງຄັບໃຊ້ເປັນຕົ້ນໄປ.

<u>ບັນຫາທີ 2</u>: ຫ້າມບໍ່ໃຫ້ກອງທະຫານຕ່າງດ້າວໃດໆ ເຂົ້າມາແຊກຊຶມ ແລະຫ້າມນຳເອົາອາວຸດຍຸດທະພັນໃໝ່ເຂົ້າມາປະເທດລາວ ຍົກເວັ້ນແຕ່ອາວຸດທີ່ຈຳເປັນແກ່ການປ້ອງກັນຊາດ. ຖ້າຫາກເອົາເຂົ້າມາກໍໃຫ້ເອົາໄວ້ຕາມທີ່ຕ່າງໆ ດັ່ງນີ້: ຫຼວງພະບາງ, ຊຽງຂວາງ, ວຽງຈັນ, ເຊໂນ, ປາກເຊ, ສະຫວັນນະເຂດ ແລະເຊໂປນ.

<u>ບັນຫາທີ 3</u>: ການແບ່ງກຳລັງ ແລະກຳນົດທີ່ຕັ້ງຂອງກອງທະຫານ, ໃນໄລຍະເວລາລໍຖ້າ – ການໂຮມລາວ, ກອງທະຫານຂອງຝ່າຍປະເທດລາວ ໃຫ້ໄປເຕົ້າໂຮມຊົ່ວຄາວຢູ່ສອງແຂວງຄືຜົ້ງສາລີ ຊຳເໜືອ (ຍົກເວັ້ນພວກທີ່ຖືກປົດປ່ອຍອອກຈາກທະຫານ ຢູ່ແຕ່ລະທ້ອງຖິ່ນ). ເນື່ອງຈາກວ່າ – ແຂວງ ຜົ້ງສາລີ ແລະ ຊຳເໜືອມີຊາຍແດນຕິດຕໍ່ຈອດກັນ, ດັ່ງນັ້ນ ກຳລັງຂອງຝ່າຍປະເທດລາວມີສິດ ແລະອິດສະລະພາບທຸກຢ່າງໃນການທ່ອງທ່ຽວໄປມາຫາກັນ ລະຫວ່າງສອງແຂວງນີ້ ໂດຍໄປຕາມທາງທີ່ກຳນົດໃຫ້ລຽບຕາມຊາຍແດນ ລາວ ຫວຽດນາມ ທາງໃຕ້ບໍ່ໃຫ້ກາຍສົບກົ້ມ, ນາພີ, ຊີບຊາມ ແລະເມືອງຂອນ.

<u>ບັນຫາທີ 4</u>: ສ່ວນຊະເລີຍເສິກທີ່ຕ່າງຝ່າຍຈັບໄດ້ ແລະພົນລະເຮືອນທີ່ຖືກກັກຂັງໃນ ປາງສົງຄາມນັ້ນໃຫ້ປ່ອຍຕົວພາຍໃນກຳນົດ 30 ວັນ, ພ້ອມທັງຮັບປະກັນສິດເສລີພາບຂອງເຂົາເຈົ້າ. ສ່ວນຊະເລີຍເສິກທີ່ເປັນຊາວຕ່າງດ້າວນັ້ນ ໃຫ້ມອບໃຫ້ແກ່ເຈົ້າໜ້າທີ່ກ່ຽວຂ້ອງ ເພື່ອຫາວິທີສົ່ງພວກກ່ຽວກັບບ້ານເດີມ.

<u>ບັນຫາທີ 5</u>: ວິທີແກ້ໄຂ ກໍລະນີຜິດພາດ ໃຫ້ຖືເອົາສອງເປັນເອກະສັນກັນ. ພ້ອມກັນນັ້ນ ສັນຍາຍັງໄດ້ເວົ້າເຖິງ ການຈັດຕັ້ງກຳມະການປະສົມ ແລະກຳມະການສາກົນ ເພື່ອກວດກາ ກຳມະການກວດກາສາກົນປະກອບດ້ວຍຜູ້ຕາງໜ້າປະເທດ ອິນເດຍ, ການາດາ ແລະ ໂປໂລຍ ໂດຍເອົາຜູ້ຕາງໜ້າປະເທດອິນເດຍເປັນປະທານ. ກຳມະການກວດກາສາກົນ ປະກອບດ້ວຍ ກອງທະຫານທີ່

ນີ້ຕັ້ງຢູ່, ປາກເຊ, ເຊໂນ, ເຊໂປນ, ວຽງຈັນ, ຊຽງຂວາງ, ຜົ້ງສາລີ ແລະຊຳເນືອແຂວງ ທົວພັນ. ໃນກໍລະນີທີ່ເຫົ້າໄຂບັນຫາບໍ່ໄດ້ ລະຫວ່າງກຳມະການກວດກາສາກົນ, ໃຫ້ສົ່ງບັນຫານັ້ນຂຶ້ນ ໄປຫາສອງປະທານຮ່ວມ ໂຊວຽດ ອັງກິດ ເພື່ອຮຽກໂຮມກອງປະຊຸມໃຫມ່. ສັນຍາສະບັບນີ້ ໄດ້ ເລີ່ມປະຕິບັດແຕ່ເວລາ 0 ໂມງ ຂອງວັນທີ 20 ເດືອນ ກໍລະກົດ 1954 ເວລາທີ່ເຊີເນວ.

## IV ຄວາມໝາຍສຳຄັນ ແລະ ຜົນສະທ້ອນຂອງສັນຍາເຊີແນວປີ 1954.

ສັນຍາເຊີເນວປີ 1954 ເປັນໄຊຊະນະອັນຍິ່ງໃຫຍ່ຂອງປະຊາຊົນລາວ ກໍຄືບັນດາປະຊາຊາດ ໃນທົ່ວອິນດູຈີນ. ພ້ອມທັງເປັນໄຊຊະນະຂອງບັນດາປະຊາຊາດທີ່ຮັກຫອມສັນຕິພາບໃນທົ່ວໂລກ. ເຖິງວ່າອາເມລິກາໄດ້ທຸ້ມເທອາວຸດ ແລະຍຸດໂທປະກອນຢ່າງຫຼວງຫຼາຍ ເພື່ອຊ່ວຍພວກລ່າເມືອງຂຶ້ນ ຝະລັ່ງໃຫ້ຮັກສາທົວເມືອງຂຶ້ນໃນຂົງເຂດນີ້ໄວ້ກໍຕາມ, ພວກເຂົາກໍບໍ່ສາມາດຮັກສາໄດ້. ສັນຍາເຊີ ແນວໄດ້ເປັນສິ່ງຢັ້ງຢືນເຖິງຄວາມອົງອາດກ້າຫານຂອງປະຊາຊົນອິນດູຈີນ, ພ້ອມທັງໄດ້ປ່າວ ປະ ກາດໃຫ້ໂລກຮັບຮູ້, ການປະລາໄຊອັນເຈັບແສບຂອງພວກລ່າເມືອງຂຶ້ນຝະລັ່ງ.

1. ຄວາມໝາຍສຳຄັນຕໍ່ລາວ: ສັນຍາດັ່ງກ່າວໄດ້ສ້າງເງື່ອນໄຂໃໝ່ ທີ່ອຳນວຍຄວາມສະດວກ ໃຫ້ແກ່ການໂຮມລາວ. ມັນໄດ້ເຮັດໃຫ້ກຳລັງແນວລາວອິດສະຫຼະກາຍເປັນກຳລັງທີ່ຖືກຕາມກົດໝາຍ. ປະຊາຊົນລາວມີຄວາມເບີກບານມ່ວນຊື່ນຕໍ່ສັນຕິພາບ. ສິ່ງດັ່ງກ່າວໄດ້ເປັນໄຊຊະນະ ທີ່ມີຄວາມ ໝາຍປະຫວັດສາດຂອງປະຊາຊົນລາວ ແລະ ໄດ້ຢັ້ງຢືນອີກເທື່ອໜຶ່ງ, ເຖິງສັດຈະທຳແຫ່ງຍຸກສະໄໝ ຂອງລັດທິມາກ-ເລນິນ ທີ່ວ່າ " ຊາດໜຶ່ງ, ເຖິງຈະນ້ອຍ ເມື່ອສາມັກຄີເປັນໃນດວງອັນກໍສາມາດ ຕີເອົາຊະນະຈັກກະພັດຜູ້ຮຸກຮານໄດ້ ".

2. ຕໍ່ອິນດູຈີນ: ສັນຍາເຊີເນວ ໄດ້ທັບມ້າງກົນອຸບາຍຂອງຈັກກະພັດຝະລັ່ງ ອາເມລິກາ ທີ່ ຫວັງຢາກເຮັດໃຫ້ສົງຄາມຢູ່ອິນດູຈີນຍືດຍາວອອກໄປນັ້ນແຕກສະຫຼາຍໄປ. ພ້ອມທັງໄດ້ສ້າງເງື່ອນ- ໄຂໃຫ້ຍຸຕິສົງຄາມ ແລະສະກັດກັ້ນການແຊກແຊງຂອງພວກຈັກກະພັດເຂົ້າໃນຂົງເຂດນີ້ ຮັບຮູ້ຄວາມ ເປັນເອກະລາດ, ອຳນາດອະທິປະໄຕ ແລະພື້ນແຜ່ນດິນອັນຄົບຖ້ວນຂອງສາມຊາດອິນດູຈີນ ຄື: ລາວ ຫວຽດນາມ ແລະ ກຳປູເຈຍ.

3. ຕໍ່ສາກົນ: ໄຊຊະນະອັນຍິ່ງໃຫຍ່ຂອງປະຊາຊົນອິນດູຈີນ ໄດ້ເປັນການປຸກລະດົມຈິດໃຈ ບັນ ດາປະຊາຊາດ ທີ່ຖືກກົດຂີ່ຂູດຮີດໃນໂລກ, ທີ່ພວມຕໍ່ສູ້ທຳການປົດປ່ອຍຕົນເອງອອກຈາກແອກ ເມືອງ ຂຶ້ນຂອງຈັກກະພັດ. ໄຊຊະນະດັ່ງກ່າວ ໄດ້ສົ່ງຜົນສະທ້ອນອັນດີໃຫ້ແກ່ບັນດາປະເທດທີ່ເປັນທົ່ວເມືອງ

ຂຶ້ນຝະລັ່ງ ເຊັ່ນ: ຕູນີຊີ, ອານເຊລີ, ແລະ ມາລົກ ທຳການຕໍ່ສູ້ປົດປ່ອຍຕົນເອງສຳເລັດໃນເວລາຕໍ່ມາ.

## ຄຳຖາມເພື່ອຄົ້ນຄວ້າ.

1. ຈົ່ງຍົກໃຫ້ເຫັນສາຍເຫດທີ່ກໍ່ໃຫ້ເກີດມີກອງປະຊຸມເຊີແນວ ປີ 1954 ກ່ຽວກັບອິນດູຈີນ.
2. ຈົ່ງເວົ້າເຖິງ ການເປີດຂັ້ນຮົບລະດູໜາວ ຕໍ່ລະດູບານໃໝ່ຢູ່ລາວ. ຂັ້ນຮົບນັ້ນ ໄດ້ສົ່ງຜົນສະທ້ອນເຖິງຂັ້ນຮົບ ດຽນບຽນຟູແນວໃດ ?
3. ຈົ່ງເວົ້າເຖິງເນື້ອໃນຂອງສັນຍາເຊີແນວ ປີ 1954 ກ່ຽວກັບລາວ.
4. ຈົ່ງເວົ້າເຖິງຄວາມໝາຍສຳຄັນຂອງສັນຍາເຊີແນວ ປີ 1954 ຕໍ່ລາວ, ຕໍ່ອິນດູຈີນ ແລະຕໍ່ໂລກ.

---

## ບົດທີ 10.

# ການແຊກແຊງລາວຂອງຈັກກະພັດອາເມລິກາ ແລະ ການຕໍ່ສູ້ຂອງປະຊາຊົນລາວແຕ່ປີ 1954 – 59.

ອາເມລິກາ ເປັນປະເທດນາຍທຶນທີ່ຮັ່ງມີແລະເຂັ້ມແຂງປະເທດໜຶ່ງ. ໃນເວລາທີ່ບັນດາປະເທດນາຍທຶນທາງຢູໂລບ ເຊັ່ນ: ຝະລັ່ງ, ອັງກິດ, ເຢລະມັນ... ຖືກທຳລາຍຍ້ອນສົງຄາມໂລກຄັ້ງທີສອງ, ແຕ່ກົງກັນຂ້າມຈັກກະພັດອາເມລິກາພັດໄດ້ສວຍໂອກາດໃນຍາມສົງຄາມ ສ້າງຄວາມສ້າລວຍໃຫ້ແກ່ຕົນເອງ ຈົນໄດ້ກາຍເປັນຈອມຈັກກະພັດ.

ສົງຄາມໂລກຄັ້ງທີສອງ ໄດ້ເຮັດໃຫ້ມະນຸດໃນໂລກເສຍຊີວິດເປັນຕັ້ງ 50 ກວ່າລ້ານຄົນ ແຕ່ບໍລິສັດນາຍທຶນອາເມລິກາຊ້ຳພັດໄດ້ກຳໄລຢ່າງຫຼວງຫຼາຍຈາກການຂາຍອາວຸດ. ດ້ວຍວ່າສົງຄາມໄດ້ເຮັດໃຫ້ອາເມລິກາຮັ່ງມີ ແລະກາຍເປັນຈອມຈັກກະພັດ ເຂົາຈຶ່ງແຜ່ອິດທິພົນອອກໄປຢ່າງກວ້າງຂວາງແລະເປີດສົງຄາມຂຶ້ນທົ່ວທຸກມຸມໂລກ. ສະເພາະຢູ່ອິນດູຈີນ ຫຼັງຈາກພວກລ່າເມືອງຂຶ້ນຝະລັ່ງປະລາໄຊແລ້ວ ອາເມລິກາກໍຄອຍປັດເຂຍອິດທິພົນຂອງຝະລັ່ງອອກ ແລ້ວຕົນເອງກໍເຂົ້າມາແທນທີ່ໂດຍບໍ່ຍອມປະຕິບັດຕາມສັນຍາເຊີແນວ ທີ່ຫາກໍເຊັນກັນມາ ໃນວັນທີ 20–7–54 ເຖິງຢ່າງໃດກໍຕາມ ປະຊາຊົນລາວ ໄດ້ສາມັກຄີກັບປະຊາຊົນໃນອິນດູຈີນລຸກຂຶ້ນຕໍ່ສູ້ຕ້ານຄືນຢ່າງພິລະອາດຫານ.

## 1. ການແຊກແຊງທາງດ້ານການເມືອງຂອງຈັກກະພັດອາເມລິກາເຂົ້າໃນລາວ ແລະ ບົດບາດຂອງແນວລາວຮັກຊາດ.

ເຖິງວ່າອາເມລິກາ ໄດ້ເຂົ້າຮ່ວມກອງປະຊຸມເຊີແນວ 1954 ກ່ຽວກັບອິນດູຈີນກໍຕາມ, ແຕ່ກໍໄດ້ພະຍາຍາມກີດໜ່ວງກ່ວງດຶງກອງປະຊຸມ ໂດຍສະເພາະໄດ້ທຳການຂັດຂວາງບໍ່ຮັບຮູ້ຄະນະຜູ້ແທນລາວຕໍ່ຕ້ານ. ໃນທີ່ສຸດ ຈອນຟົດສະເຕີດາແລດ ລັດຖະມົນຕີຕ່າງປະເທດອາເມລິກາ ພ້ອມດ້ວຍຄະນະໄດ້ລຸກໜີຈາກທີ່ປະຊຸມ ໂດຍບໍ່ໄດ້ຮ່ວມລົງລາຍເຊັນນຳສັນຍານັ້ນເລີຍ. ຕໍ່ມາ ພວກເຂົາຈຶ່ງອອກແຮງຊຸກຍູ້ພວກກຳອຳນາດວຽງຈັນ ໃຫ້ທຳການຂັດຂວາງການເຕົ້າໂຮມລາວ ດ້ວຍວິທີການຕ່າງໆດັ່ງນີ້ :

ເລີ່ມທຳລາຍຂອງຈັກກະພັດອາເມລິກາ: ສັນຍາເຊີແນວໄດ້ສ້າງເງື່ອນໄຂໃຫ້ມີການເຈລະຈາໂຮມລາວ. ໃນວັນທີ 21–11–1954, ອາເມລິກາ ໄດ້ຈັດຕັ້ງລັດຖະບານໃໝ່ ທີ່ມີຍົນຕົນຂຶ້ນທີ່ວຽງຈັນ ໂດຍແມ່ນກະຕ່າຍເປັນນາຍົກ. ມາຮອດກາງປີ 1955 ໂດຍປະຕິບັດຕາມຄຳສັ່ງຂອງຈັກ

ກະພັດອາເມລິກາ ພວກເຂົາໄດ້ສະດົມກອງທະຫານຫຸ່ນ ເປັນຈຳນວນເກືອບ 2/3 ຂອງຈຳນວນທະຫານຫຸ່ນທັງໝົດບຸກໂຈມຕີສອງແຂວງເຕົ້າໂຮມ ພ້ອມກັນນັ້ນກໍດຳເນີນການກຳຣາບປາບປາມ ປະຊາຊົນຢູ່ໃນ 10 ແຂວງຢ່າງປ່າເຖື່ອນ.

ຕໍ່ໜ້າສະພາບການດັ່ງກ່າວນັ້ນ ພັກເຮົາໄດ້ວາງແຜນນະໂຍບາຍປຸກລຸກທົ່ວປວງຊົນ ສາມັກຄີກັນ ລຸກຂຶ້ນຕໍ່ສູ້, ເປີດກວ້າງແນວໂຮມເອກະພາບແຫ່ງຊາດ, ສ້າງຕັ້ງແນວລາວຮັກຊາດຂຶ້ນ ໃນວັນທີ 6 ມັງກອນ 1956, ນຳພາກອງທັບ ແລະປະຊາຊົນສອງແຂວງ ເດັດດ່ຽວຕໍ່ສູ້ຕ້ານການບຸກໂຈມຕີ-ຂອງສັດຕູ ສົມທົບກັບການປຸກລຸກທາງການເມືອງຢູ່ໃນ 10 ແຂວງ ແລະສຸດທ້າຍກໍບັງຄັບໃຫ້ຈັກກະພັດອາເມລິກາ ແລະລູກມືຕ້ອງຍອມເຊັນສັນຍາວຽງຈັນ ໃນວັນທີ 22 ຕຸລາ 1957.

ສັນຍາວຽງຈັນໄດ້ສ້າງເງື່ອນໄຂໃຫ້ຢຸດຕິການຂ້າຟັນລົ້ມແຫງກັນ ເຮັດໃຫ້ປະເທດລາວ ກ້າວເດີນຕາມເສັ້ນທາງ ສັນຕິພາບ ເປັນກາງ ແລະຮັບຮູ້ຖານະອັນຖືກຕ້ອງຂອງແນວລາວຮັກຊາດ, ສ້າງລັດຖະບານປະສົມແຫ່ງຊາດ ໂດຍມີຜູ້ຕາງໜ້າແນວລາວຮັກຊາດເຂົ້າຮ່ວມນຳຢ່າງສົມກຽດ.

ຫຼັງຈາກໄດ້ມີການສ້າງຕັ້ງລັດຖະບານປະສົມແລ້ວ, ແນວລາວຮັກຊາດ ໄດ້ສະເໜີແກ້ໄຂ ກົດໝາຍເລືອກຕັ້ງ ແລະທຳການເລືອກຕັ້ງເພີ່ມເຕີມ.

ການເລືອກຕັ້ງເພີ່ມເຕີມ ໄດ້ຈັດຂຶ້ນຕາມກົດໝາຍເລືອກຕັ້ງສະບັບແກ້ໄຂໃໝ່ ໂດຍມີຜູ້ຕາງໜ້າແນວລາວຮັກຊາດເຂົ້າຮ່ວມ. ໃນການເລືອກຕັ້ງຄັ້ງນີ້ ຜູ້ແທນຝ່າຍແນວລາວຮັກຊາດ ຖືກເລືອກຕັ້ງຢ່າງຫຼວງຫຼາຍ ໃນນັ້ນສະເດັດເຈົ້າສຸພານຸວົງ ປະທານສູນກາງແນວລາວຮັກຊາດ ກໍຖືກເລືອກຕັ້ງຢູ່ແຂວງວຽງຈັນ ດ້ວຍຄະແນນນິຍົມທີ 1; ໃນຈຳນວນຜູ້ແທນ 59 ທ່ານ ໃນສະພານັ້ນ, ມີຜູ້ແທນເພດຍິງພຽງຄົນດຽວ ເຊິ່ງສັງກັດຝ່າຍແນວລາວຮັກຊາດ ກໍຖືກເລືອກຢູ່ໃນແຂວງຫຼວງພະບາງດ້ວຍຄະແນນນິຍົມເຊັ່ນດຽວກັນ. ນັ້ນເປັນອັນຈະແຈ້ງວ່າ ປະຊາຊົນບັນດາຊົນຊາດລາວ ແມ່ນສະໜັບສະໜູນແລະເປັນໃຈຢ່າງສະເໝີຕົ້ນສະເໝີປາຍຕໍ່ແນວທາງສັນຕິພາບ, ເປັນກາງ ຂອງແນວລາວ ຮັກຊາດ, ເຊິ່ງຍາມໃດກໍຢາກໃຫ້ປະເທດລາວເປັນເອກະລາດ, ປະຊາຊົນທົ່ວຊາດໄດ້ຢູ່ດີກິນດີ.

ເມື່ອໄດ້ຖືກເລືອກຕັ້ງເປັນຕົວແທນຂອງປະຊາຊົນແລ້ວ, ຜູ້ແທນແນວລາວຮັກຊາດ ກໍໄດ້ອີງໃສ່ຖານະຂອງຕົນກ່າວປະນາມຈັກກະພັດອາເມລິກາ ແລະລູກມືທີ່ທຳການຂັດຂວາງທຳລາຍບາງຜົນສັນຍາເຊີເນວ ປີ 1954.

ພາຍຫຼັງການເຊັນສັນຍາວຽງຈັນ ບໍ່ທັນຮອດ 1 ປີ ແລະພາຍຫຼັງລັດຖະບານປະສົມໄດ້ຮັບການສ້າງຕັ້ງຂຶ້ນບໍ່ເທົ່າໃດ ຈັກກະພັດອາເມລິກາ ກໍຫາທຸກວິທີທາງເພື່ອທຳລາຍ. ພວກເຂົາໄດ້ຈັດຕັ້ງອົງການທີ່ເອີ້ນວ່າ "ກຳມະການປ້ອງກັນສິດຜົນປະໂຫຍດຂອງຊາດ" (ຊປຊ) ຂຶ້ນໃນວັນທີ 29–6–58.

ເພື່ອຮັບໃຊ້ສິດທິປະໂຫຍດຂອງພວກເຂົາ. ກຸ່ມດັ່ງກ່າວນີ້ ໄດ້ເຄື່ອນໄຫວຂັດຂວາງ ການດຳເນີນງານຂອງລັດຖະບານປະສົມດ້ວຍຫຼາຍຮູບການ. ຍ້ອນການກົດດັນທາງການເມືອງຈາກກຸ່ມດັ່ງກ່າວ – ເຈົ້າສຸວັນນະພູມາ ຈຳຕ້ອງລາອອກຈາກຕຳແໜ່ງນາຍົກລັດຖະມົນຕີ ໃນວັນທີ 18 ສິງຫາ 1958. ອາເມລິກາ ໄດ້ຈັດຕັ້ງລັດຖະບານປະຕິການຂຶ້ນ ໂດຍແມ່ນ ຜູຍ ຊະນະນິກອນເປັນນາຍົກ. ລັດຖະບານຊຸດນີ້ ໄດ້ໃຊ້ກຸ່ມ ເຊດີ ທຳການປາບປາມນາບຂູ່ ແລະຄາດຕະກຳປະຊາຊົນຜູ້ຮັກຊາດ.ຮ້າຍແຮງໄປກວ່ານັ້ນ, ໃນວັນທີ 27 ເດືອນ ກໍລະກົດ 1959 ພວກເຂົາໄດ້ຈັບກຸມສະເດັດເຈົ້າສຸພານຸວົງ ແລະບັນດາຜູ້ນຳອື່ນໆລວມ 16 ທ່ານ ໄປຂັງໄວ້ທີ່ຄຸກໂພນເຄັງ.

ຫຼັງຈາກນັ້ນ, ການຕໍ່ສູ້ທາງດ້ານການເມືອງ ສົມທົບກັບການທະຫານໄດ້ດຳເນີນໄປຢ່າງດຸເດືອດ, ແລະຮຸນແຮງ, ທ້າຍປີ 1959 ມີປະຊາຊົນ 2 ພື້ນຄົນໂຮມຊຸມນຸມນັດຕົງປະທ້ວງ, ແຫ່ຂະບວນ, ຫວ່ານໃບປິວ ທວງໃຫ້ພວກກຳອຳນາດຫຸ່ນປ່ອຍຕົວສະເດັດ ແລະທ່ານຜູ້ນຳອື່ນໆທີ່ຖືກກັກຂັງຢ່າງຜິດກົດໝາຍ. ຕໍ່ໜ້າສະພາບທີ່ບັນດາຜູ້ນຳແນວລາວຮັກຊາດຖືກຈັບ ລໍຖ້າຈະເອົາໄປປະຫານຊີວິດນັ້ນ , ສະພາທະນາຍຄວາມຂອງໂລກກໍ່ໄດ້ສົ່ງຜູ້ແທນຂອງຕົນມາວຽງຈັນ ເພື່ອຕໍ່ສູ້ຄະດີໃຫ້ປ່ອຍຕົວບັນດາຜູ້ນຳແນວລາວຮັກຊາດ. ທ່ານດັກຮຳມາໂຊນ, ເລຂາທິການໃຫຍ່ ອົງການສະຫະປະຊາຊາດໃນສະໄໝນັ້ນ ກໍ່ໄດ້ເດີນທາງມາສັງເກດສະພາບການດ້ວຍຕົນເອງ. ພ້ອມກັນນັ້ນທ່ານກໍ່ໄດ້ກ່າວປະນາມ–ພວກກຳອຳນາດຫຸ່ນວຽງຈັນ ທີ່ຮັບໃຊ້ແຜນການຂອງຈັກກະພັດອາເມລິກາ.

ຍ້ອນແນວທາງອັນຖືກຕ້ອງ ຂອງແນວລາວຮັກຊາດ, ກະແສຟອງຕ້ານອາເມລິກາ ແລະ ລູກມືຈຶ່ງນັບມື້ນັບແຮງຂຶ້ນ ແລະສາມາດດູດດຶງເອົາປະຊາຊົນໃນຊັ້ນຕ່າງໆ ໃນທຸກຊົນຊາດຢ່າງຫຼວງຫຼາຍ. ອັນເດັ່ນທີ່ສຸດແມ່ນ ບັນດາສາລະວັດທະຫານຈຳນວນໜຶ່ງ ທີ່ຮັກສາຄຸກຄ້າຍໂພນເຄັງໄດ້ຕື່ນຕົວ ເປັນໃຈນຳ, ພາສະເດັດແລະບັນດາຜູ້ນຳອື່ນໆ ໂຕນອອກຈາກຄຸກໂພນເຄັງສຳເລັດ ໃນກາງຄືນຂອງວັນທີ 23–24 ພຶດສະພາ 1960.

## 2. ການແຊກແຊງທາງດ້ານການທະຫານຂອງຈັກກະພັດອາເມລິກາເຂົ້າລາວ.

ຫຼັງຈາກທີ່ຈັກກະພັດອາເມລິກາ ທຳການແຊກແຊງລາວທາງດ້ານການເມືອງບໍ່ສຳເລັດແລ້ວ ກໍ່ຫັນເຂົ້າມາແຊກແຊງທາງດ້ານທະຫານ, ເຮັດສົງຄາມກັບປະຊາຊົນລາວ ໂດຍໃຊ້ພວກກຳອຳນາດຫຸ່ນວຽງຈັນ ເປັນໄມ້ນຶແລະຈັດຕັ້ງກຸ່ມຮຸກຮານທາງທະຫານຂຶ້ນໃນພາກພື້ນອາຊີອາຄະເນ ເພື່ອຕ້ານກັບກະແສຟອງປະຕິວັດໃນຂົງເຂດນີ້.

ໃນເບື້ອງຕົ້ນ ຈັກກະພັດອາເມລິກາ ໄດ້ເປັນເຈົ້າການໃນການຈັດຕັ້ງກຸ່ມຮຸກຮານ ຊີອາໂຕຂຶ້ນ

ແລະຈ່ອງດຶງເອົາປະເທດລາວເຂົ້າໃນອາລັກຂາ. ກຸ່ມຮຸກຮານນີ້ກໍຕັ້ງຂຶ້ນຕາມສັນຍາທີ່ກຸງມະນີລາ ນະຄອນຫຼວງຂອງຟີລິບປິນ ໃນວັນທີ 8 ກັນຍາ 1954 ເຊິ່ງປະກອບດ້ວຍສະມາຊິກ 8 ປະເທດຄື: ໂອດສະຕາລີ, ອາເມລິກາ, ຝະລັ່ງ, ອັງກິດ, ນິວຊີແລນ, ປາກິດສະຖານ, ຟີລິບປິນ, ແລະ ໄທ. ຈຸດປະສົງຂອງກຸ່ມດັ່ງກ່າວ ແມ່ນແນ່ໃສ່ຕ້ານກັບກະແສຟອງປະຕິວັດປົດປ່ອຍຊາດ ໃນອາຊີອາຄະເນ. ສຳນັກງານໃຫຍ່ຂອງອົງການນີ້ຕັ້ງຢູ່ບາງກອກ ນະຄອນຫຼວງຂອງປະເທດໄທ. ບັນດາສະມາຊິກຂອງອົງການນີ້ ມີໜ້າທີ່ຊ່ວຍເຫຼືອທາງດ້ານກຳລັງພົນ, ກຳລັງອາວຸດ ແລະເງິນຄຳ ເພື່ອຄ້ຳຊູພວກກຳອຳນາດຫຸ່ນຢູ່ໃນ 3 ປະເທດອິນດູຈີນ.

ຮອດເດືອນ ເມສາ 1955 ຫຼັງຈາກທີ່ລັດຖະບານກະຕ່າຍຂຶ້ນກຳອຳນາດແລ້ວ ກໍໄດ້ອອກຄຳສັ່ງໃຫ້ກອງທັບລາຊະອານາຈັກ ສົມທົບກັບກອງປົ້ນລວມມີ 10 ກອງພັນ ບຸກໂຈມຕີສອງແຂວງເຕົ້າໂຮມ, ຜົ້ງສາລີ ຊຳເໜືອ ຢ່າງປ່ອງບ້າ. ເພື່ອປະຕິບັດຕາມແຜນນະໂຍບາຍ, ດ້ານໜຶ່ງ ກຳລັງຂອງຝ່າຍປະເທດລາວ ທີ່ເຕົ້າໂຮມຢູ່ສອງແຂວງນັ້ນ, ແມ່ນຍຶດໝັ້ນໃນການເຈລະຈາ, ພ້ອມກັນນັ້ນກໍໄດ້ຮັກສາແລະຊຸກຍູ້ຂະບວນປະຕິວັດຢູ່ໃນ 10 ແຂວງ, ປຸກລະດົມມະຫາຊົນໃນເຂດຄວບຄຸມຂອງສັດຕູ, ເຮັດປະທ້ວງທວງໃຫ້ມີການເຈລະຈາ, ດ້ານໜຶ່ງອີກ ກໍໄດ້ນຳພານັກຮົບປະຕິວັດແລະປະຊາຊົນສອງແຂວງ, ຕີຕ້ານທຸກການບຸກໂຈມຕີຂອງທະຫານຫຸ່ນລູກມືອາເມລິກາ ໃຫ້ປະລາໄຊລົງ. ໃນໄລຍະການຕໍ່ສູ້ຢ່າງທະນົງອົງອາດນັ້ນ, ກຳລັງຝ່າຍປະເທດລາວ ໄດ້ດັບສູນສັດຕູ 5 ພັນກວ່າຄົນ-ແລະສາມາດປົກປັກຮັກສາເຂດເຕົ້າໂຮມສອງແຂວງໄດ້ຢ່າງໝັ້ນຄົງ.

ຍ້ອນການປະລາໄຊທາງດ້ານການທະຫານ ແລະການເມືອງຢ່າງລຽນຕິດ ຈັກກະພັດອາເມລິກາຈຳຕ້ອງວາງທ່າທີໃໝ່. ພາຍຫຼັງລັດຖະບານປະສົມກົກຈັດຕັ້ງຂຶ້ນບໍ່ທັນໃດ ຈັກກະພັດອາເມລິກາ-ແລະລູກມືກໍໄດ້ບີບຮັດທາງດ້ານການເມືອງ ເຮັດໃຫ້ລັດຖະບານປະສົມກົກໂຄ່ນລົ້ມໄປ, ແລ້ວພວກເຂົາກໍໄດ້ປະກອບລັດຖະບານໃໝ່ຂຶ້ນ ໂດຍແມ່ນ ຜູ້ຍ ຊະນະນິກອນ ເປັນນາຍົກ. ຢູ່ພາຍໃນພວກເຂົາໄດ້ເຕົ້າໂຮມ, ເອົາປະຕິການສຸດຂີດຈຳນວນໜຶ່ງມາປະກອບເປັນກຸ່ມ "ປ້ອງກັນສິດຜົນປະໂຫຍດຂອງຊາດ" (ເຊດີ) ເພື່ອເປັນເຄື່ອງມືປາບປາມ ແລະກົດຂີ່ຂູດຮີດປະຊາຊົນຜູ້ຮັກຊາດ. ຢູ່ທາງນອກພວກເຂົາໄດ້ໃຊ້ກອງທະຫານຫຸ່ນໄປທຳການເກາະຜິດ ປິດລ້ອມທະຫານກອງພັນທີໜຶ່ງ ແລະກອງພັນທີສອງຂອງຝ່າຍປະເທດລາວ ທີ່ເຂົ້າມາໂຮມຢູ່ ຊຽງເງິນ ແລະ ທົ່ງໄຫຫີນ ໃນເບື້ອງຕົ້ນ ພວກເຂົາໄດ້ໃຊ້ວິທີຈ້າງຈອບອອບ, ໃຫ້ຍົດໃຫ້ຊັ້ນ ຫວັງຈະໃຫ້ອ້າຍນ້ອງນັກຮົບໃນກອງພັນທີສອງຍອມຈຳນົນ. ແຕ່ກົງກັນຂ້າມ, ອ້າຍນ້ອງກອງພັນທີສອງເດັດຂາດບໍ່ຍອມຈຳນົນ ຈຶ່ງເຮັດໃຫ້ກົນອຸບາຍຂອງຈັກກະພັດອາເມລິກາປະລາໄຊໄປ. ໃນເມື່ອພວກເຂົາໃຊ້ວິທີຈ້າງຈອບອອບບໍ່ໄດ້ແລ້ວ, ພວກ

ເຂົາກໍເປີດສາກເກາະພິດປິດລ້ອມເຊັ່ນ: ບັງຄັບໃຫ້ອັກຍັ້ງນັກຮົບພວກເຮົາຢູ່ໃນເຂດຈຳກັດ, ປິດລ້ອມທາງດ້ານເສດຖະກິດ ແລະສ້າງສະຖານະການໃຫ້ເຄັ່ງຕຶງໄປທົ່ວປະເທດ. ຫຼັງຈາກ ບັນດາສູ້ນຳທີ່ເຂົ້າມາຮ່ອມທ້ອງ ຈັນທຶກທັກຂັງແລ້ວ ອ້າຍນ້ອງທັງພັນທີສອງ ກໍພາກັນຕີແຫກວົງລ້ອມ ຂອງສັດຕູອອກໄປສູ່ການພື້ນປະຕິວັດໄດ້ຢ່າງປອດໄພ ແລະໄດ້ສືບຕໍ່ປົດປ່ອຍແຂວງເພື່ອສຳເລັດ.

### 3. ການແຊກແຊງລາວທາງດ້ານເສດຖະກິດ ຂອງຈັກກະພັດອາເມລິກາ.

ເພື່ອຄວບຄຸມທາງດ້ານການທະຫານ, ການເມືອງ, ວັດທະນະທຳ ແລະອື່ນໆ, ຈັກກະພັດອາເມລິກາໄດ້ໃຫ້ການຊ່ວຍເຫຼືອທາງດ້ານເສດຖະກິດແກ່ລັດຖະບານລາຊະອານາຈັກ. ພວກເຂົາ ໄດ້ທຸ້ມເທເງິນໂດລາຈຳນວນຫຼວງຫຼາຍເຂົ້າມາໃນລາວ. ໃນເບື້ອງຕົ້ນຄື ເດືອນ ມັງກອນ 1951 ຫຼັງຈາກທີ່ຈັກກະພັດອາເມລິກາໄດ້ອຸ້ມຊູທາງດ້ານອາວຸດ ແລະເງິນຄຳ ເພື່ອຊ່ວຍເຫຼືອຈັກກະພັດຝະລັ່ງໃນການເຮັດສົງຄາມຢູ່ອິນດູຈີນ ກໍໜັ້ນມາແຊກແຊງໂດຍກົງ. ພວກເຂົາໄດ້ເຊັນສັນຍາຮ່ວມມື – ທາງດ້ານເສດຖະກິດກັບລັດຖະບານລາຊະອານາຈັກ. ແຕ່ຕົ້ນປີ 1955–1958 ອາເມລິກາໄດ້ໃຊ້ເງິນຮອດ 135 ລ້ານໂດລາ ເຂົ້າມາໃນລາວ ໂດຍຕີລາຄາ 1 $ ເທົ່າ 35 ກີບ, ຕົນາ 1 $ ເທົ່າ 80 ກີບ ... ເງິນຈຳນວນນີ້ ສ່ວນຫຼວງຫຼາຍແມ່ນໃຊ້ໄວ້ຊື້ຈ້າງເອົາບັນດາພວກກຳອຳນາດ ເຮັດໃຫ້ພວກນີ້ກາຍເປັນໄມ້ຄ້ຳຜູ້ບອກໄດ້ໃຊ້ຟັງ ແລະເຮັດໃຫ້ຊົນຊັ້ນນາຍທຶນຂະຫຍາຍຕົວ. ດ້ວຍນະການບໍລິຫານງານທຸກຂະແໜງຂອງລັດຖະບານຫຸ່ນຈ້າງຂຶ້ນກັບເງິນໂດລາອາເມລິກາທັງໝົດ. ພ້ອມກັນນັ້ນ ກໍທຸ່ມເທເຄື່ອງສຳເລັດຮູບເຂົ້າມາທັບມ້າງເສດຖະກິດຂອງລາວ ເຮັດໃຫ້ສັງຄົມລາວເປັນສັງຄົມ ທີ່ນິການຫຼັ້ນກິນຫຼຸ້ນເຟືອຍ. ພວກເຂົາບໍ່ໄດ້ສ້າງເງື່ອນໄຂຫຍັງແກ່ການຂະຫຍາຍຕົວທາງດ້ານ ເສດຖະກິດຂອງຊາດລາວເລີຍ ເງິນໂດລາຈຳນວນມະຫາສານ ທີ່ພວກເຂົາເອົາເຂົ້າມານັ້ນ, ສ່ວນໃຫຍ່ໃຊ້ໃນການທະຫານ ແລະໃຊ້ໄວ້ຊື້ຈ້າງເອົາພວກກຳອຳນາດ. ກົງກັນຂ້າມ ປະຊາຊົນລາວບໍ່ໄດ້ຮັບເງິນຫຍັງຈາກການຊ່ວຍເຫຼືອນັ້ນ ຊ້ຳບໍ່ໜຳຍັງຖືກກົດຂີ່ຂູດຮີດຕື່ມອີກ.

### ຄຳຖາມເພື່ອຄົ້ນຄວ້າ.

1. ຈົ່ງເວົ້າເຖິງການແຊກແຊງທາງດ້ານການເມືອງຂອງຈັກກະພັດອາເມລິກາເຂົ້າລາວ.
2. ໃນສະພາບການດັ່ງກ່າວນັ້ນ ກຳລັງປະຕິວັດໄດ້ມີແຜນການແນວໃດ ?
3. ຈົ່ງເວົ້າເຖິງການແຊກແຊງທາງດ້ານການທະຫານ ຂອງຈັກກະພັດອາເມລິກາເຂົ້າລາວ.
4. ຈົ່ງເວົ້າເຖິງການແຊກແຊງທາງດ້ານເສດຖະກິດ ຂອງຈັກກະພັດອາເມລິກາເຂົ້າລາວ.

## ບົດທີ 11.

# ຫັນທິດການຕໍ່ສູ້ສົມທົບການທະຫານ ແລະການເມືອງ 1959-1962

### 1. ການຕໍ່ສູ້ໃນໄລຍະຫັນທິດ

ການຕໍ່ສູ້ທາງດ້ານການເມືອງຂອງກຳລັງຮັກຊາດ ເພື່ອສ້າງປະເທດລາວກ້າວເດີນ ຕາມເສັ້ນທາງສັນຕິພາບ ເປັນກາງ ໄດ້ຮັບໄຊຊະນະຢ່າງໃຫຍ່ຫຼວງເປັນຂັ້ນໆມາ, ປະຊາຊົນລາວບັນດາຊົນຊາດໄດ້ໃຫ້ການສະໜັບສະໜູນ ແລະເປັນໃຈຢ່າງກວ້າງຂວາງ ແຕ່ຈັກກະພັດອາເມລິກາ ແລະລູກມືກໍ່ອອກແຮງທຳລາຍ ໂດຍຫວັງດັບມອດການປະຕິວັດດ້ວຍຮູບການຕ່າງໆດັ່ງກ່າວມາແລ້ວ. ຕໍ່ໜ້າສະພາບການນັ້ນ, ທ້າຍປີ 1959 ພັກປະຊາຊົນລາວເຫັນຄວາມຈຳເປັນຕ້ອງຫັນທິດຕໍ່ສູ້ດ້ວຍກຳລັງອາວຸດສົມທົບກັບການເມືອງ, ໂດຍຍົກສູງຄັນທຸງຊາດປະຊາທິປະໄຕ ດ້ວຍເຫດນັ້ນ ຂະບວນການຕໍ່ສູ້ຕ້ານອາເມລິກາ ແລະລູກມືຈຶ່ງຟົດເດືອດຂຶ້ນໃນທົ່ວປະເທດ.

ບັນດາພະນັກງານ ນັກຮົບ ທີ່ໄດ້ກັບຄືນໄປເປັນພົນລະເມືອງດີນັ້ນ ກໍໄດ້ທຳການເຄື່ອນໄຫວປຸກລະດົມປະຊາຊົນລຸກຮື້ຂຶ້ນຍຶດອຳນາດການປົກຄອງມາໄວ້ໃນກຳມືຂອງຕົນແລະສືບຕໍ່ຕີສັດຕູ, ຍຶດອາວຸດຈາກສັດຕູມາຕີສັດຕູ. ຢູ່ພາກລາວໃຕ້, ເດືອນ ຕຸລາ 1960 ກຳລັງປະກອບອາວຸດ ແລະ ປະຊາຊົນເຮົາຍຶດໄດ້ແຂວງສາລະວັນ, ເດືອນ ພະຈິກ ຍຶດໄດ້ແຂວງອັດຕະປື ແລະ ປົດປ່ອຍຕົວເມືອງເພຍໄຟ ທີ່ຢູ່ທາງທິດໃຕ້ຂອງເມືອງປາກເຊ, ພ້ອມກັນນັ້ນ ກໍໄດ້ທຳລາຍທະຫານຫຼາຍກົມກອງຂອງສັດຕູຕື່ມອີກ, ຢູ່ຕາມເສັ້ນທາງຍຸດທະສາດທີ່ສຳຄັນຄື: ເສັ້ນທາງເລກ 9 ແລະເລກ 13.

ຢູ່ທາງພາກເໜືອ ກອງພັນທີສອງ ກໍ່ຕີຜ່າວົງລ້ອມຂອງສັດຕູອອກໄປສູ່ຖານທີ່ໝັ້ນການປະຕິວັດ – ແລະກ້າວໄປປົດປ່ອຍຕົວເມືອງຊຳເໜືອ ໃນວັນທີ 15 ສິງຫາ 1960 ສຳເລັດ ແລະ ຕ່າວໂຈມຕີສັດຕູຢູ່ທົ່ວທຸກເຂດ. ຢູ່ວຽງຈັນ ໃນຕົ້ນປີ 1960 ໄດ້ມີປະຊາຊົນສອງໝື່ນກວ່າຄົນ ໂຮມຊຸມນຸມມິດຕິງອອກກະແຫຼງການ, ຫວ່ານໃບປິວທວງໃຫ້ປ່ອຍຕົວບັນດາຜູ້ນຳ ແລະຍຸຕິການປາບປາມປະຊາຊົນຜູ້ຮັກຊາດ. ຍ້ອນການປຸກລະດົມຂົນຂວາຍຢ່າງກວ້າງຂວາງ, ແນວທາງສັນຕິພາບ ເປັນກາງຂອງແນວລາວຮັກຊາດ ໄດ້ຊຶມເລິກເຂົ້າໃນໝູ່ມະຫາຊົນ ຕະຫຼອດຮອດກອງທະຫານຂອງກອງທັບ ລາຊະ

ອານາຈັກ (1) ເນື່ອງຈາກວ່າກອງທັບລາຊະອານາຈັກກໍ່ຖືກປະລາໄຊໃນພາຍບັ້ນຮົບ ແລະ ເບື່ອໜ່າຍຕໍ່ການຂີ່ບັງຄັບຂອງອາເມລິກາແລະລູກມື, ໃນຕອນຄືນຂອງວັນທີ 9 ສິງຫາ 1960 (9–8–60) ໃນເວລາທີ່ນະຄອນຫຼວງວຽງຈັນພວມຢູ່ໃນຄວາມງຽບສະຫງັດນັ້ນ ກໍມີສຽງປືນໃຫຍ່ນ້ອຍ–ແຕກຂຶ້ນ. ນັ້ນແມ່ນສຽງປືນຂອງກອງພັນທະຫານຮາບອາກາດທີສອງ (ທະຫານໂດດຈ້ອງ) ທີ່ລຸກຮື້ຂຶ້ນເຮັດລັດຖະປະຫານ ໂຄ່ນລົ້ມລັດຖະບານປະຕິການ ເຈົ້າສົມສະນິດ – ພູມີ ໜໍ່ສະຫວັນ ລູກມືອາເມລິກາ. ໃນເວລາພຽງພັ່ງຊົ່ວໂມງ ກຳລັງລັດຖະປະຫານກໍ່ສາມາດຍຶດເອົາສຳນັກງານສຳຄັນ – ເຊັ່ນ: ສະໜາມບິນວັດໄຕ ໂຮງການໄປສະນີ ທະນາຄານແຫ່ງຊາດ, ສະຖານີວິທະຍຸ... ໃນນັ້ນຕໍ່ມາ ສູນກາງແນວລາວຮັກຊາດ ກໍ່ໄດ້ອອກກະແຫຼງການສະໜັບສະໜູນຄະນະລັດຖະປະຫານ.

ພາຍຫຼັງຈາກທີ່ລັດຖະບານ ເຈົ້າສົມສະນິດ – ພູມີ ຖືກໂຄ່ນລົ້ມໄປແລ້ວ, ພູມີ – ບຸນອຸ້ມກໍ່ຊຸ້ມຊ້ອງຕັ້ງກຸ່ມພວກທີ່ເອີ້ນຕົນເອງວ່າ "ຄະນະປະຕິວັດ" ຂຶ້ນຢູ່ສະຫວັນນະເຂດ ໂດຍມີຈັກກະພັດອາເມລິກາ ແລະພວກກຳອຳນາດປະຕິການໄທ, ເປັນຜູ້ອູ້ມຊູ. ຮອດວັນທີ 13 ທັນວາ 1960 ພວກເຂົາໄດ້ໃຊ້ກອງທະຫານບຸກເຂົ້ານະຄອນຫຼວງວຽງຈັນ.

ໂດຍມີກອງທັບອາກາດທີ່ຕັ້ງຢູ່ ເຊໂນ ທຽວມາທິ້ມລະເບີດສະໜັບສະໜູນ, ໃນນັ້ນ ມີການເຂົ້າຮ່ວມຢ່າງເປີດແປນທີ່ສຸດຂອງກອງທະຫານປະຕິການໄທ ແລະທະຫານຫຸ່ນໄຊງ່ອນ. ນັ້ນເປັນການຢຽບຢ່ຳອະທິປະໄຕແຫ່ງຊາດ ໃນນັ້ນມີອະທິປະໄຕທາງຊາຍແດນ ແລະຜືນແຜ່ນດິນອັນຄົບກ້ອນຂອງລາວ. ພວກເຂົາໄດ້ສຸມກຳລັງຫວັງຈະຢູບຢອບການລຸກຮື້ຂອງທັບດານາຍ ແລະພົນທະຫານໃນກອງພັນທະຫານຮາບອາກາດທີສອງ. ແຕ່ກຳລັງຮັກຊາດກໍ່ໄດ້ຕອບສະໜອງຄວາມຮຽກຮ້ອງຕ້ອງການ – ຂອງຄະນະລັດຖະປະຫານຢ່າງທັນການ, ສົ່ງກອງທະຫານມາປົກປັກຮັກສາຊ່ວຍ ແລະ ມີການປະສານສົມທົບກັນຢ່າງແໜ້ນແຟ້ນ ເປັນຄັ້ງທຳອິດ ລະຫວ່າງພາກສ່ວນລຸກຮື້ຂຶ້ນກັບກຳລັງຮັກຊາດຢູ່ໃນນະຄອນຫຼວງວຽງຈັນ. ກຳລັງຮ່ວມສຳພັນນີ້ ໄດ້ຕີກຳລັງອາເມລິກາ – ໄທ – ພູມີ ໜໍ່ສະຫວັນ ຢ່າງອົງອາດກ້າຫານຕະຫຼອດຫ້າມື້ຫ້າຄືນ.

ເພື່ອຮັກສາກຳລັງໄວ້ຍາວນານ ແລະ ເພື່ອຫຼີກເວັ້ນການເສຍຫາຍຂອງຊາວນະຄອນວຽງຈັນ ພໍຮອດວັນທີ 17 ທັນວາ 1960 ກຳລັງປະຕິວັດໄດ້ຖອນອອກຈາກວຽງຈັນ, ເຄື່ອນຍ້າຍຂຶ້ນເມືອທາງຊຽງຂວາງຕາມສາຍທາງເລກ 7. ໃນເວລາ 5 ໂມງເຊົ້າຂອງວັນທີ 1 ມັງກອນ 1961 ກອງ

---

(1) ສາລະວັດທະຫານຈຳນວນໜຶ່ງ ທີ່ຮັກສາຄຸກໂພນເຄັງ ໄດ້ຕື່ນຕົວ ແລະໂຕນໜີຈາກຄຸກ ພ້ອມຜູ້ນຳໃນກາງຄືນຂອງວັນທີ 23 – 24 ພຶດສະພາ 1960.

ທັບແລະປະຊາຊົນເຮົາ ກໍໄດ້ຕ້ອນຮັບປືນພິສາກົນ ດ້ວຍໄຊຊະນະງາມພົ້ນຮົບປົດປ່ອຍທົ່ງໄຫຫີນ ແລະ ເມືອງຊຽງຂວາງ.

ການລັດຖະປະຫານ 9–8–60 ໄດ້ສ້າງເງື່ອນໄຂໃຫ້ອັນເປັນພື້ນດີໃຫ້ແກ່ການປະຕິວັດເປັນຕົ້ນ ແມ່ນໄດ້ເກີດມີກຳລັງເປັນກາງ ເຊິ່ງປະກອບດ້ວຍຄະນະລັດຖະປະຫານ, ຄະນະສັນຕິພາບ ເປັນກາງ ແລະບັນດາຜູ້ຊົງຄຸນວຸດທິທີ່ມີຈິດໃຈຮັກຊາດໄດ້ອອກໄປເຮັດການປະຕິວັດ.

ກຳລັງເປັນກາງໄດ້ຜູກສຳພັນ ແລະຮ່ວມມືກັບກຳລັງແນວລາວຮັກຊາດ ຢູ່ທີ່ຊຽງຂວາງ. ການສຳພັນຮ່ວມມືລະຫວ່າງສອງກຳລັງ ເປັນໄຊຊະນະອັນຍິ່ງໃຫຍ່, ມັນແມ່ນການສ້າງແນວໂຮມ ຕ້ານຈັກກະພັດແລະລູກມື. ຢູ່ທີ່ນັ້ນກຳລັງປະຕິວັດ ໄດ້ພ້ອມກັນບຳລຸງກຳລັງ ແລະຮັກສາທົ່ງພຽງຊຽງຂວາງ ຢ່າງໝັ້ນຄົງ, ແລ້ວຕ່າວໂຈມຕີສັດຕູລົງຕາມສອງປີກໃຫຍ່ຄື: ປີກໜຶ່ງຕີລົງທາງໂຫມ ທ່າວຽງ, ອີກປີກໜຶ່ງຕີລົງຕາມສາຍທາງເລກ 7 ຮອດສາລາພູຄູນ ຕໍ່ລົງເສັ້ນທາງເລກ 13 ຮອດຫີນເຫີບ. ໃນຂະນະດຽວກັນນັ້ນ, ຢູ່ແຫ່ງອື່ນໆກຳລັງປະຕິວັດຂອງພວກເຮົາ ກໍໄດ້ສືບຕໍ່ຕີສັດຕູຢ່າງລຽນຕິດ.ພຽງແຕ່ໄລຍະ 10 ເດືອນ ແຕ່ທ້າຍປີ 1960 ຫາກາງປີ 1961 ກຳລັງປະຕິວັດປົດປ່ອຍດິນແດນ ໄດ້ສອງສ່ວນສາມຂອງປະເທດ ແລະປົດປ່ອຍພົນລະເມືອງໄດ້ເຄິ່ງໜຶ່ງ, ເຂດປົດປ່ອຍໄດ້ຕິດຈອດກັນ–ແຕ່ເໜືອເຖິງໃຕ້ທາງພາກຕາເວັນອອກ.

## 2. ກອງປະຊຸມສ້າງສັນຕິພາບຢູ່ລາວ.

ໃນສະພາບທີ່ທະຫານຫຸ່ນແຕກສະຫຼາຍຢ່າງເສຍຂວັນ ພວກກໍ່ອຳນາດຫຸ່ນກະວົນກະວາຍກົ່ງກັນຂ້າມຝ່າຍກຳລັງປະຕິວັດ ຍື່ນຢູ່ທາເປັນເຈົ້າການໃນທຸກສະໜາມຮົບ, ຈັກກະພັດອາເມລິກາ ຈົນຕາແຈຈຶ່ງຈຳຕ້ອງໃຫ້ລູກມືເຂົ້າຮ່ວມກອງປະຊຸມ ເພື່ອເຈລະຈາແກ້ໄຂບັນຫາໂດຍສັນຕິ.

ກ່ອນໜ້ານັ້ນຄືວັນທີ 24 ເດືອນ ເມສາ 1961 ປະທານຮ່ວມກອງປະຊຸມເຊີແນວ ອັງກິດ–ໂຊວຽດໄດ້ຮຽກຮ້ອງໃຫ້ມີການຢຸດຍິງຢູ່ລາວ ແລະເປີດກອງປະຊຸມເຊີແນວ 14 ປະເທດ ໃນທັນທີ ເພື່ອແກ້ໄຂບັນຫາລາວໂດຍສັນຕິ.

ວັນທີ 13–17 ເດືອນ ພຶດສະພາ 1961. ຜູ້ຕາງໜ້າສາມຝ່າຍການເມືອງຢູ່ລາວ (ສະເດັດເຈົ້າສຸວັນນະພູມາ, ສະເດັດເຈົ້າສຸພານຸວົງ, ເຈົ້າບຸນອູ້ມ) ກໍໄດ້ເປີດກອງປະຊຸມທີ່ບ້ານ ນາມອນ, ຕົກລົງຢຸດຍິງໃນຂອບເຂດທົ່ວປະເທດ. (ບ້ານນາມອນ ຕັ້ງຢູ່ທາງທິດເໜືອຂອງວຽງຈັນປະມານ – 130 ພັນກິໂລແມດ). ເຊິ່ງເປັນເຂດຍາດແຍ່ງລະຫວ່າງສອງກຳລັງ. ຈາກນັ້ນ ເພື່ອເປັນການສືບຕໍ່ແກ້ໄຂບັນຫາລາວ, ກອງປະຊຸມສາມເຈົ້າລາວກໍໄດ້ເປີດຂຶ້ນຢູ່ ຊູຍລິກ ໃນວັນທີ 19–22ມິຖຸນາ

1961. ກອງປະຊຸມຄັ້ງນີ້ໄດ້ເປັນເອກະພາບກັນບາງຫຼັກການດັ່ງລຸ່ມນີ້ :

- ຕົກລົງຈັດຕັ້ງລັດຖະບານປະສົມ ອັນປະກອບດ້ວຍຜູ້ຕາງໜ້າຂອງສາມຝ່າຍ, ລັດຖະບານນີ້ມີລັກສະນະພິເສດເປັນຊົ່ວຄາວ ນອກນັ້ນ ກໍໄດ້ວາງໂຄງການການເມືອງ 5 ຂໍ້ ເຊິ່ງມີເນື້ອໃນໃຫ້ກຳລັງທັງສາມຝ່າຍ ເຂົ້າຮ່ວມກັນເປັນອັນໜຶ່ງອັນດຽວກັນ, ຮັບປະກັນສິດເສລີພາບ ປະຊາທິປະໄຕປະຊາຊົນ, ຮັບປະກັນຄວາມເປັນທຳ ແລະຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ເພື່ອຄວາມສົມບູນພູນສຸກ, ຂອງປະຊາຊົນ. ທາງດ້ານນະໂຍບາຍຕ່າງປະເທດແມ່ນຮັບປະກັນຫຼັກ 5 ປະການໃນການຢູ່ຮ່ວມກັນໂດຍສັນຕິ, ເດີນຕາມເສັ້ນທາງເປັນກາງອັນແທ້ຈິງ.

- ແຕ່ວັນທີ 6-8 ເດືອນ ຕຸລາ 1961 ກອງປະຊຸມສາມເຈົ້າລາວ ໄດ້ສືບຕໍ່ເປີດຢູ່ຫີນເຫີບ (100 ກມ. ໄກຈາກວຽງຈັນໄປທາງທິດເໜືອຕາມເສັ້ນທາງເລກ 13). ກອງປະຊຸມນີ້ ໄດ້ຕົກລົງເອົາເຈົ້າ ສຸວັນນະພູມາ ເປັນນາຍົກ, ສ່ວນຮອງນາຍົກສອງທ່ານນັ້ນ ເປັນຂອງຝ່າຍແນວລາວຮັກຊາດ ແລະຝ່າຍຂວາ.

ໃນຂະນະທີ່ກອງປະຊຸມກຳລັງດຳເນີນຢູ່ນັ້ນ ຈັກກະພັດອາເມລິກາ ໄດ້ສວຍໂອກາດ ປັ່ນປ່ວນກຳລັງລະດົມກອງທະຫານ 23 ກອງພັນ, ສອງສ່ວນສາມຂອງຈຳນວນພົນທັງໝົດຂອງເຂົາ ເປີດການບຸກໂຈມຕີເຂດປົດປ່ອຍທົ່ວປະເທດ, ໃນນັ້ນ 20 ກອງພັນ ໄດ້ບຸກເຂົ້າໜອງນ້ຳທາ. ໄຊຊະນະທີ່ລືຊື່ຂອງກອງທັບ ແລະປະຊາຊົນຢູ່ໜອງນ້ຳທາ ສາມາດທັບສູນສັດຕູໄດ້ 1.700 ຄົນ. ພວກທີ່ເຫຼືອຕາຍກໍພາກັນແຕກມາຫ້ວຍຊາຍ ແລ້ວຂ້າມໄປຫາເມືອງຂອງ (ປະເທດໄທ). ໄຊຊະນະໃນບັ້ນນີ້ໄດ້ບັງຄັບໃຫ້ອາເມລິກາ ແລະລູກມືຕົກລົງເຊັນສັນຍາສ້າງສັນຕິພາບຢູ່ລາວ.

ໂດຍປະຕິບັດຕາມຈິດໃຈຂອງສັນຍາ ຊູຣິກ ແລະສັນຍາຫີນເຫີບ, ຜູ້ຕາງໜ້າຂອງສາມຝ່າຍ-ການເມືອງ ກໍໄດ້ສືບຕໍ່ເປີດປະຊຸມກັນຂຶ້ນເປັນຄັ້ງສຸດທ້າຍຢູ່ທົ່ງໄຫຫີນ ໃນວັນທີ 7 ມິຖຸນາ 1962. ກອງປະຊຸມຄັ້ງນີ້ ໄດ້ບັນລຸເຖິງການສ້າງຕັ້ງລັດຖະບານປະສົມຊົ່ວຄາວຊຸດໃໝ່ຂຶ້ນ ອັນປະກອບດ້ວຍ 12 ກະຊວງ, ຕຳແໜ່ງນາຍົກລັດຖະມົນຕີເປັນຂອງຝ່າຍເປັນກາງ ເຊິ່ງໄດ້ແກ່ ສະເດັດເຈົ້າສຸວັນນະພູມາ. ສ່ວນຮອງນາຍົກລັດຖະມົນຕີມີສອງທ່ານ ໂດຍຕາງໜ້າໃຫ້ຝ່າຍແນວລາວຮັກຊາດ ໄດ້ແກ່ ເຈົ້າສຸພານຸວົງ ແລະຕາງໜ້າໃຫ້ຝ່າຍຂວາ ໄດ້ແກ່ ພູມີ ໜໍສະຫວັນ. ພ້ອມກັນນັ້ນ ເນື້ອໃນສຳຄັນຂອງສັນຍາທົ່ງໄຫຫີນແມ່ນການຍຶດຖືຫຼັກການເປັນເອກະສັນກັນ ໃນການຕັດສິນບັນຫາສຳຄັນໃນການບໍລິຫານປະເທດ. ເມື່ອສ້າງຕັ້ງຂຶ້ນແລ້ວ ຄະນະລັດຖະບານ ກໍໄດ້ເປີດກອງປະຊຸມຂຶ້ນ ເປັນຄັ້ງທຳອິດ ໃນວັນທີ 22 ມິຖຸນາ 1962 ທີ່ນະຄອນຫຼວງພະບາງ ເພື່ອຕົກລົງແຕ່ງຕັ້ງຄະນະຜູ້ແທນ ໄປຮ່ວມກອງປະຊຸມເຊີແນວ.

ກອງປະຊຸມເຈນີວາເຊິ່ງເລີ່ມໄຂຂຶ້ນແຕ່ເດືອນ ພຶດສະພາ 1961 ແລະໄດ້ຢຸດສະງັກລົງແຕ່ຕົ້ນ ປີ 1962 ກໍໄດ້ເລີ່ມເປີດຂຶ້ນຄືນໃໝ່ເມື່ອວັນທີ 2 ກໍລະກົດ 1962 ແລະມາເຖິງວັນທີ 23 ເດືອນ ດຽວກັນ ກອງປະຊຸມກໍໄດ້ບັນລຸເປົ້າໝາຍ. ສັນຍາດັ່ງກ່າວ ໄດ້ຮັບຮູ້ເອກະລາດ, ເອກະພາບ, ອຳນາດອະທິປະໄຕ, ຄວາມເປັນກາງ ແລະຜືນແຜ່ນດິນອັນຄົບຖ້ວນຂອງລາວ.

<u>ສະຫຼຸບ</u>: ການປະສານສົມທົບການຕໍ່ສູ້ທາງດ້ານການທະຫານ ແລະການຕໍ່ສູ້ທາງດ້ານການເມືອງ, ໄດ້ເປັນປັດໃຈຕັດສິນໄຊຊະນະຂອງການປະຕິວັດໃນແຕ່ລະໄລຍະ. ຂັ້ນຮົບແຕ່ລະຂັ້ນ ໄດ້ເປັນຂາດຄ້ອນອັນໜັກໜ່ວງໂບ່ງໃສ່ຫົວສັດຕູ, ເຮັດໃຫ້ພວກເຂົາອ່ອນເພຍເສຍຂວັນ ຈົນໄປຮອດຍ່ອມ ຂໍຍອມ ເຈລະຈາ. ກອງປະຊຸມແຕ່ລະເທື່ອ ກໍໄດ້ເຮັດໃຫ້ພວກເຂົາເສຍທ່າການເມືອງ ແລະທັງເປັນການ ເຜີຍແຜ່ທາດແທ້ປະຕິການຂອງພວກເຂົາ.

## ຄຳຖາມເພື່ອຄົ້ນຄວ້າ.

1. ເປັນຫຍັງພັກປະຊາຊົນປະຕິວັດລາວ ຈິ່ງຕັດສິນໃຈຫັນທິດຕໍ່ສູ້ທາງດ້ານການທະຫານ ສົມທົບກັບ ການເມືອງ ?
2. ການຕໍ່ສູ້ໃນໄລຍະຫັນທິດ ມີຫຍັງແດ່ ?
3. ຈົ່ງເວົ້າເຖິງກອງປະຊຸມສ້າງສັນຕິພາບຢູ່ລາວ ? ກອງປະຊຸມດັ່ງກ່າວໄດ້ສ້າງເງື່ອນໄຂອັນສະ ດວກໃຫ້ແກ່ການສ້າງສັນຕິພາບຢູ່ລາວແນວໃດ ?
4. ເປັນຫຍັງຈັກກະພັດອາເມລິກາ ແລະລູກມືຈຶ່ງຍອມເຂົ້າຮ່ວມໂຕະເຈລະຈາສ້າງສັນຕິພາບ ຢູ່ ລາວ.

---

## ບົດທີ 12.

# ການຕໍ່ສູ້ຂອງປະຊາຊົນລາວແຕ່ປີ 1962 ເຖິງວັນສ້າງຕັ້ງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ວັນທີ 2 ທັນວາ 1975.

ດັ່ງທີ່ພວກເຮົາໄດ້ເວົ້າຜ່ານມາແລ້ວວ່າ ສັນຍາເຈີແນວປີ 1962 ກ່ຽວກັບລາວໄດ້ສ້າງເງື່ອນໄຂໃຫ້ແກ່ປະຊາຊົນລາວມີສັນຕິພາບ ແລະສ້າງຕັ້ງລັດຖະບານປະສົມສາມຝ່າຍຂຶ້ນ. ສັນຍາດັ່ງກ່າວໄດ້ຢັ້ງຢືນໃຫ້ເຫັນໄຊຊະນະອັນໃຫຍ່ຫຼວງຂອງປະຊາຊົນລາວ, ກົງກັນຂ້າມນັ້ນແມ່ນການປະລາໄຊຂອງລັດທິລ່າເມືອງຂຶ້ນແບບໃໝ່ຂອງຈັກກະພັດອາເມລິກາຢູ່ລາວ. ໃນຂະນະທີ່ປະຊາຊົນລາວ ພວມເບີກບານມ່ວນຊື່ນຕໍ່ສັນຕິພາບຢູ່ນັ້ນ, ຈັກກະພັດອາເມລິກາ ແລະລູກນ້ອງກໍເລັ່ງສ້າງສະພາບການໃຫ້ເຄັ່ງຕຶງໃນທົ່ວປະເທດ ແລະ ເພີ່ມທະວີສົງຄາມຈິດຕະສາດ ເພື່ອກໍ່ສົງຄາມຄືນໃໝ່.

### 1. ກົນອຸບາຍຂອງຈັກກະພັດອາເມລິກາ ແລະລູກນ້ອງ.

ເຖິງວ່າ ອາເມລິກາໄດ້ຮ່ວມເຊັນສັນຍາເຈີແນວປີ 1962 ກ່ຽວກັບລາວກໍຕາມ ແຕ່ກໍຫາທຸກວິທີເພື່ອທຳລາຍມ້າງເພສັນຍາດັ່ງກ່າວ, ຍ້ອນເຫັນວ່າຕົນເປັນຝ່າຍປະລາໄຊ. ໃນເບື້ອງຕົ້ນ ພວກເຂົາໄດ້ເຕົ້າໂຮມເອົານາຍທະຫານທີ່ສຳຄັນ ເຊັ່ນ: ພູມີ ໜໍ່ສະຫວັນ, ກຸປະສິດ ອະໄພ, ບຸນເລີດ, ບູນປອມ, ມາຈັດຕັ້ງອັນທີ່ເອີ້ນວ່າ "ແນວໂຮມແຫ່ງຊາດ" ເປັນກຳລັງການເມືອງເພື່ອຫຼອກລວງປະຊາຊົນ ແລະບົ່ມປຸກກຳລັງຂອງພວກເຂົາ. ພ້ອມດຽວກັນ ເພື່ອຂົ່ມຂູ່ສັນຕິພາບຢູ່ລາວ ແລະ ອິນດູຈີນ ກອງທະຫານຊີອາໂຕ ຢູ່ໄທ ແລະກອງທັບເຮືອທີ 7 ຂອງອາເມລິກາທີ່ຢູ່ມະຫາສະມຸດ ປາຊີຟິກກໍໄດ້ເປີດການຊ້ອມຮົບຢ່າງລຽນຕິດ.

ພ້ອມກັນນັ້ນ ກໍໄດ້ຈັດຕັ້ງກຳລັງອັນໜຶ່ງຂຶ້ນ ເອີ້ນວ່າ "ກຳລັງພິເສດ" ເພື່ອເປັນເຄື່ອງມືຕ້ານການປະຕິວັດໃນສະເພາະໜ້າ ແລະຍາວນານ ກຳລັງພິເສດແມ່ນ ກຳລັງປະກອບອາວຸດທີ່ປະຕິການສຸດຂີດ ເຊິ່ງແມ່ນອາເມລິກາບັນຊາໂດຍກົງ. ກອງບັນຊາການໃຫຍ່ຂອງກຳລັງພິເສດທີ່ ເອີ້ນວ່າ ( HQ (333) ຕັ້ງຢູ່ອຸດອນປະເທດໄທ, ອາເມລິກາໄດ້ແຕ່ງຕັ້ງ ວັງປາວ ເປັນຜູ້ບັນຊາການຢູ່ລາວ. ທະຫານສ່ວນຫຼາຍຂອງກຳລັງພິເສດ ແມ່ນຊົນຊາດສ່ວນໜ້ອຍ ຄື: ລາວສູງ ແລະ ລາວເທິງ. ການແຕ່ງຕັ້ງ ວັງປາວ ເປັນຜູ້ບັນຊາການ ແລະເອົາຊົນຊາດສ່ວນໜ້ອຍເປັນທະຫານ ຂອງກຳລັງພິເສດນີ້ ແມ່ນເພື່ອເພ່ງແຍກຄວາມສາມັກຄີບັນດາຊົນຊາດ ຊົນເຜົ່າໃນລາວ. ກຳລັງພິເສດນັ້ນມີໜ້າທີ່ບຸກໂຈມຕີ ບຸກຍຶດເຂດປົດປ່ອຍ, ທຳລາຍເສັ້ນທາງຄົມມະນາຄົມ, ທຳລາຍກອງລຳລຽງ-

ຂົ່ມສົ່ງ, ເຄື່ອນໄຫວສືບສອດແນມ, ລັດຂ້າທະຫານ ແລະພະນັກງານ ແລະບັງຄັບກວດຕ້ອນເອົາ-ປະຊາຊົນໄປຢູ່ເຂດກວດກາຊົ່ວຄາວຂອງພວກເຂົາ.

ພວກເຂົາໄດ້ອອກແຮງສ້າງຄວາມແຕກແຍກພາຍໃນກຳລັງເປັນກາງ ດ້ວຍວິທີຊື້ຈ້າງຈອບອອຍເອົາລັດຖະມົນຕີ ແລະນາຍທະຫານ. ໃນກໍລະນີທີ່ຊື້ຈ້າງຈອບອອຍບໍ່ໄດ້, ກໍໃຊ້ວິທີລອບສັງຫານ ເຊັ່ນ: ໃນວັນທີ 1 ເມສາ 1963 ພວກເຂົາໄດ້ລອບສັງຫານ ທ່ານ ກີນິມ ພົນເສນາ ລັດຖະມົນຕີກະຊວງຕ່າງປະເທດ ຂອງລັດຖະບານປະສົມຊົ່ວຄາວແຫ່ງຊາດ, ສັງກັດຝ່າຍເປັນກາງ. ເຫດການພ້າສະຫຍອງຂອງວັນນີ້ ໄດ້ພິສູດໃຫ້ເຮົາເຫັນວ່າ ຈັກກະພັດອາເມລິກາ ແລະລູກມື ມີເຈດຕະນາທຳລາຍການດຳເນີນງານຂອງລັດຖະບານ ແລະທຳລາຍສັນຕິພາບໃນລາວຢ່າງຈະແຈ້ງ. ນອກຈາກນັ້ນພວກເຂົາຍັງເອົາໄມ້ນີ້ຜູ້ບອກໄດ້ໃຊ້ຟັງໄປເຈາະຢ້າຍຢູ່ຕາມສຳນັກງານອົງການຕ່າງໆ ເພື່ອຂັດຂວາງການດຳເນີນງານຂອງລັດຖະບານ ແລະປິດລ້ອມເຮືອນພັກຂອງບັນດາຜູ້ນຳແນວລາວຮັກຊາດ ແລະລັດຖະມົນຕີທີ່ຮັກຊາດຂອງຝ່າຍເປັນກາງ, ອັນເຮັດໃຫ້ຜູ້ນຳຈຳຕ້ອງກັບຄືນໄປເຂດປົດປ່ອຍ.

ໃນວັນທີ 19 ເມສາ 1964 ກໍເກີດການລັດຖະປະຫານໂຄ່ນລົ້ມລັດຖະບານປະສົມ ໂດຍມີ ກຸປະສິດ ແລະ ສີໂຫ ລູກມືຊັ້ນຈຳຂອງອາເມລິກາ ເປັນຜູ້ອອກໜ້າ. ຫຼັງຈາກນັ້ນ ເຂົາກໍປົດເຂີຍລັດຖະມົນຕີຝ່າຍເປັນກາງອອກ ແລ້ວເອົາພວກປະຕິການເຂົ້າແທນ. ເປັນອັນວ່າ ລັດຖະບານປະສົມສາມຝ່າຍກໍ່ຖືກໂຄ່ນລົ້ມລົງຢ່າງສິ້ນເຊີງ.

## 2. ການຕໍ່ສູ້ຕ້ານການຮຸກຮານຄັ້ງໃຫຍ່ຂອງຈັກກະພັດອາເມລິກາແຕ່ປີ 1964–1972.

ຕໍ່ໜ້າສະພາບການທີ່ຈັກກະພັດອາເມລິກາ ທຳລາຍສັນຍາເຈນີວ ປີ 1962 ກ່ຽວກັບລາວ ແລະລັດຖະບານປະສົມສາມຝ່າຍ, ພັກປະຊາຊົນປະຕິວັດລາວ ກໍໄດ້ວາງແຜນນະໂຍບາຍ ເພີ່ມທະວີຄວາມສາມັກຄີປວງຊົນທົ່ວຊາດ, ເດັດດ່ຽວຕໍ່ສູ້ທາງດ້ານການທະຫານ ແລະການເມືອງ ເພື່ອປົກປັກຮັກສາເຂດປົດປ່ອຍ ປັບປຸງທີ່ໝັ້ນ ແລະກຳລັງຂອງຕົນໃຫ້ເຂັ້ມແຂງ ພ້ອມກັນນັ້ນ ກໍຊຸກຍູ້ຂະບວນການຕໍ່ສູ້ຂອງປະຊາຊົນຢູ່ເຂດຄວບຄຸມຊົ່ວຄາວຂອງສັດຕູ.

ໃນຕົ້ນເດືອນ ມັງກອນ 1963 ຈັກກະພັດອາເມລິກາ ໄດ້ສົບຊ້ອນໄມ້ມືຂອງຕົນເຂົ້າຢູ່ໃນ ກຳລັງເປັນກາງທີ່ຊຽງຂວາງ, ທົ່ງໄຫຫີນແລະຄັງໄຂ ເພື່ອແບ່ງແຍກ ແລະຄວບຄຸມກຳລັງເປັນກາງຍຸແຫຍ່ເກີດບຸກຄົນສຳຄັນໃນກຳລັງດັ່ງກ່າວ ໃຫ້ຫ່າງເຫີນຈາກແນວລາວຮັກຊາດ. ດັ່ງນັ້ນ ພາຍໃນກຳລັງເປັນກາງຈຶ່ງເກີດຂັດແຍ້ງກັນຂຶ້ນ ຈົນແຕກເປັນສອງກຸ່ມ. ກຸ່ມໜຶ່ງກາຍເປັນລູກມື ຂອງຈັກກະພັດອາເມລິກາ, ແລະກໍແມ່ນພວກນີ້ເປັນຜູ້ລົ້ມໄກປົ່ນກໍ່ສົງຄາມຢູ່ໃນລາວຄືນໃໝ່. ອີກກຸ່ມໜຶ່ງ ແມ່ນ

ພວກທີ່ບໍລິສຸດຕໍ່ປະເທດຊາດ ໄດ້ເດັດດ່ຽວຕໍ່ຕ້ານກັບກຸ່ມທໍລະຍົດນັ້ນ. ໂດຍອາໄສກຸ່ມທໍລະຍົດ ດັ່ງກ່າວ ສົມທົບກັບກຳລັງພິເສດ, ອາເມລິກາໄດ້ສົ່ງກອງປົ້ນ ແລະທະຫານຝ່າຍຂວາບຸກໂຈມຕີ ບຸກຍຶດເຂດປົດປ່ອຍຂອງກຳລັງຮັກຊາດ. ໃນຂະນະດຽວກັນ ກໍໄດ້ດຳເນີນສົງຄາມຈິດຕະສາດ,ສົ່ງນັກສືບສອດແນມທຳຈາລະກຳ ແລະຊື້ຈ້າງຈອບອອຍ ໃນຮູບການເສດຖະກິດເຂົ້າໃນເຂດປົດປ່ອຍ. ພວກເຂົາໄດ້ໂຄສະນາໃສ່ຮ້າຍປ້າຍສີບັນດາປະເທດສັງຄົມນິຍົມ ເປັນຕົ້ນແມ່ນ ສາທາລະນະລັດປະຊາທິປະໄຕຫວຽດນາມ, ໄດ້ຫາເລື່ອງໃສ່ແນວລາວຮັກຊາດ ແລະກຳລັງເປັນກາງແທ້ຈິງວ່າ "ເປັນຜູ້ກໍ່ສະຖານະການໃຫ້ເຄັ່ງຕຶງຢູ່ໃນລາວ".

ຕົ້ນປີ 1963 ຄຽງຄູ່ກັບການໃຊ້ລູກມືກຳລັງຝ່າຍເປັນກາງຂາຍຊາດ ແລະ ທະຫານພິເສດວັງປາວສົມທົບກັບທະຫານຝ່າຍຂວາ ດຳເນີນການກໍ່ກວນຄວາມສະຫງົບສຸກຢູ່ໃນເຂດປົດປ່ອຍນັ້ນ ຈັກກະພັດອາເມລິກາກໍໄດ້ເປີດບັ້ນຮົບຂຶ້ນຫຼາຍບັ້ນທີ່ດຸເດືອດ ເປັນຕົ້ນແມ່ນບັ້ນຮົບຢູ່ເຂດນ້ຳເທີນ ເຊິ່ງຢູ່ທາງພາກຕາເວັນອອກສຽງເໜືອຂອງແຂວງຄຳມ່ວນ ແຕ່ກໍຖືກກຳລັງຮັກຊາດຕ້ານຄືນ ແລະ ບັງຄັບໃຫ້ຖອຍໄປໂຮມກັນຢູ່ເມືອງທ່າແຂກ. ນອກຈາກນັ້ນ ກຳລັງປະກອບອາວຸດຂອງແນວລາວຮັກຊາດ-ຍັງໄດ້ສົມທົບກັບກຳລັງປະກອບອາວຸດຂ້າລາຊະການຝ່າຍເປັນກາງຮັກຊາດ ແລະ ປະຊາຊົນຊຽງຂວາງຕໍ່ສູ້ຂັບໄລ່ຝ່າຍເປັນກາງຂາຍຊາດ ເຊິ່ງມີທັງທະຫານວັງປາວ ແລະທະຫານຝ່າຍຂວາ ປົນຢູ່ນຳໃຫ້ອອກຈາກເຂດທົ່ງພຽງໄຫ, ໂພນສະຫວັນ, ຊຽງຂວາງ, ເມືອງຄຳ ແລະ ຫຼາຍແຫ່ງທົ່ວແຂວງຊຽງຂວາງ, ດັບສູນທະຫານປະຕິການ ໄດ້ຈຳນວນຫຼວງຫຼາຍ. ພວກທີ່ເຫຼືອຕາຍກໍພາກັນມາຕັ້ງຢູ່ທົ່ງໄຫຫີນ, ເມືອງພົ້ນ, ເມືອງເຄິງ ແລະເມືອງສຸຍ. ໃນຂະນະດຽວກັນກຳລັງ ປະກອບອາວຸດຮັກຊາດໃນທົ່ວປະເທດ ກໍໄດ້ດຳເນີນການສູ້ຮົບ ເພື່ອປ້ອງກັນຕົວ, ກ້ານີເວື່ອນໄຊ ກໍຍຶດເອົາທີ່ໝັ້ນຂອງສັດຕູຢູ່ນາງບອນ.

ວັນທີ 17 ພຶດສະພາ 1964 ຈອນເຊີນ ໄດ້ໃຊ້ກຳລັງທັບອາກາດອາເມລິກາ ຖິ້ມລະເບີດຍິງທຳລາຍເຂດປົດປ່ອຍເປັນຄັ້ງທຳອິດ, ເພີ່ມອາວຸດຍຸດທະພັນໃຫ້ແກ່ກອງທະຫານຝ່າຍຂວາ, ເພີ່ມຈຳນວນທະຫານຫຸ່ນຂຶ້ນທົບເທົ່າ ແລະສ້າງກອງທະຫານຫຸ່ນນີ້ໃຫ້ເປັນກົມກອງໃຫຍ່, ໃຊ້ຂຸນເສິກຟາດຊິດ ກຸປະສິດ – ຊະນະນິກອນເປັນລູກມື ໂດຍມີທີ່ປຶກສາອາເມລິກາບັນຊາໂດຍກົງ.

ໃນກາງປີ 1964 ຈັກກະພັດອາເມລິກາໄດ້ເປີດບັ້ນຮົບໃຫຍ່ຊື່ວ່າ "ສາມສອນ" ໂດຍໃຊ້ທະຫານຝ່າຍຂວາ, ທະຫານພິເສດວັງປາວ ແລະທະຫານຮັບຈ້າງໄທ ສົມທົບກັບເຮືອບິນຖິ້ມລະເບີດຈາກປະເທດໄທ ແລະກອງທັບເຮືອທີ 7. ບັ້ນຮົບນີ້ ເປີດຢູ່ເຂດປົດປ່ອຍ ວັງວຽງ, ສາລາພູຄູນ, ກິ່ວກະຈຳ, ເມືອງສຸຍ ເຊິ່ງແມ່ນເຂດຍຸດທະສາດສຳຄັນຕໍ່ແຍກລະຫວ່າງສາມແຂວງຄື ວຽງຈັນ,

ຫຼວງພະບາງ, ຊຽງຂວາງ.

ນັບແຕ່ທ້າຍປີ 1964 ເປັນຕົ້ນມາ ພວກເຂົາໄດ້ເປີດຂັ້ນຮົບຕ່າງໆອັນມີຂັ້ນມີຂະໜາດໃຫຍ່ຂຶ້ນເປັນລຳດັບຄື: ຂັ້ນຮົບ "ສອນໄຊ 1", ຂັ້ນຮົບ "ສອນໄຊ 2", ຂັ້ນຮົບ "ມັງກອນ" ບຸກເຂົ້າທາງເລກ 9 ແລະເລກ 12, ບຸກຕີບຽດຍຶດເຂດປົດປ່ອຍຢູ່ທາງພາກກາງ ແລະພາກໃຕ້. ພ້ອມກັນນັ້ນ ກໍ່ບຸກໂຈມຕີເຂົ້າເຂດພູກູດອີກ. ຜ່ານການສູ້ຮົບຢ່າງດຸເດືອດ ກອງທະຫານຝ່າຍເຮົາໄດ້ຕີຕ້ານກຳລັງຝືນປະຕິວັດໃຫ້ປະລາໄຊໄປທຸກຄັ້ງ. ແຕ່ທ້າຍປີ 1966 ຮອດທ້າຍປີ 1967, ຈັກກະພັດອາເມລິກາ-ໄດ້ລະດົມກຳລັງທະຫານຈຳນວນຫຼວງຫຼາຍບຸກໂຈມຕີເຂດປົດປ່ອຍທາງພາກເໜືອ ເປັນຕົ້ນແມ່ນເຂດນ້ຳບາກ ແຂວງຫຼວງພະບາງ ເມື່ອຍຶດນ້ຳບາກໄດ້ແລ້ວ ກໍເອົາທະຫານ 4 ກອງພົນ ແລະທະຫານທີ່ມຈຳນວນໜຶ່ງມາຕັ້ງໝັ້ນຢູ່ ເພື່ອເປັນແປ້ນຍັນຕີເຂົ້າເຂດປົດປ່ອຍທາງພາກເໜືອ. ຜ່ານການສູ້ຮົບຢ່າງດຸເດືອດແລະຮຸນແຮງເປັນເວລາຍາວນານ ກຳລັງຝືນປະຕິວັດຕົກຢູ່ໃນທ່າປ້ອງກັນຕົວ, ສ່ວນກຳລັງປະຕິວັດຢືນຢູ່ທ່າເປັນເຈົ້າການທຸກສະໜາມຮົບ. ໃນຕົ້ນປີ 1967 ສູນກາງພັກ ໄດ້ວາງມະຕິຄັ້ງທີ 15 ອອກ. ໃນມະຕິນັ້ນໄດ້ຕີລາຄາວ່າ "ການຊ່ວງຊາກຳລັງລະຫວ່າງສອງຝ່າຍ ໄດ້ມີຜົນດີໃຫ້ແກ່ການປະຕິວັດ" ແລະມະຕິຍັງໄດ້ຊີ້ໜ້າທີ່ວ່າ "ຕ້ອງເດັດດ່ຽວຕັດສິນໃຈຕໍ່ສູ້ຍາດເອົາໄຊຊະນະ..." ໂດຍປະຕິບັດຕາມຈິດໃຈຂອງມະຕິຄັ້ງທີ 15 ຂອງສູນກາງພັກ, ກອງທັບ ແລະ ປະຊາຊົນເຮົາໄດ້ບຸກໂຈມຕີສັດຕູຢ່າງແຂງແຮງ ແລະລຽນຕິດ. ຮອດວັນທີ 12 ມັງກອນ 1968 ກອງທັບແລະປະຊາຊົນຫຼວງພະບາງ ໄດ້ເລີ່ມບຸກໂຈມຕີທະຫານສັດຕູຢູ່ນ້ຳບາກ. ຮອດວັນທີ 14 ເດືອນດຽວກັນ ກໍສາມາດປົດປ່ອຍເຂດນ້ຳບາກໄດ້ ໂດຍໄດ້ດັບສູນສັດຕູ 3.000 ຄົນ ເຊິ່ງເທົ່າກັບສອງສ່ວນສາມຂອງທະຫານສັດຕູຢູ່ໃນເຂດນັ້ນ, ຍິງຍົນຕົກ ແລະທຳລາຍ 14 ລຳ ດັບສູນ 2ກົນເຄື່ອນທີ່ ( GM ); ໃນເດືອນ ມີນາ 1968 ກອງທັບແລະປະຊາຊົນແຂວງຫົວພັນ ກໍ່ໄດ້ເລີ່ມໂຈມຕີປ້ອມ ຜາທີ່ ເຊິ່ງເປັນເຮືອນຮັງພວກປັ້ນ ອັນມີຈຳນວນພົນເກີງ 16 ກອງພົນ, ມີລະບົບປ້ອງກັນທີ່ແໜ້ນໜາ ເພາະວ່າເປັນບ່ອນຕິດຕັ້ງເຄື່ອງຈັກ ລາດາ ຂອງອາເມລິກາ ເພື່ອບັນຊາການກົນລະເບີດທົ່ວເຂດພາກເໜືອຂອງລາວ ແລະຫວຽດນາມ, ຮອດວັນທີ 22 ມັງກອນ 1969 ກໍທັບມ້າງເຮືອນຮັງນັ້ນໄດ້, ໂດຍປັດເຂ່ຍສັດຕູອອກຈາກວົງສູ້ຮົບ 1.016 ຄົນ ຍຶດປືນຊະນິດຕ່າງໆ 250ກະບອກ, ຍິງຍົນຕົກ 15 ລຳ ແລະທຳລາຍທີ່ຕັ້ງ ລາດາ 1 ແຫ່ງ. ໃນວັນທີ 1 ມີນາ 1969 ກໍ່ໄດ້ທຳລາຍກອງປັ້ນຢູ່ກໍ່ລາ ແລະນາຄັງ ໂດຍໄດ້ດັບສູນສັດຕູ 600 ກວ່າຄົນ.

ຫຼັງຈາກນັ້ນ ກອງທັບແລະປະຊາຊົນແຂວງຊຽງຂວາງ ກໍສືບຕໍ່ທັບມ້າງຮັງພວກປັ້ນຢູ່ແຫ່ງຕ່າງໆ ເຊັ່ນ: ພູແຄ, ປ່າຄາ, ສົມຈໍ່, ເມືອງພາງ, ເມືອງງາມ, ທ່າວຽງ, ຊຽງຄັງແລະທ່າໂທ່ມ.

ໃນເດືອນ ມີນາ ປີ 1969 ຈັກກະພັດອາເມລິກາ ໄດ້ໃຊ້ທະຫານເກືອບ 35 ກອງພັນ ແລະ ມີເຮືອບິນຊ່ວຍໜູນເປີດຂັ້ນຮົບ ອັນມີຊື່ວ່າ "ໂອ ເດ ແອນ" ( O D N ) ບຸກເຂົ້າພູແຄ ແລະ ເມືອງຊຽງຂວາງ ແຕ່ກໍ່ຖືກຕີກອຍໃຫ້ປະລາໄຊ ໄປຮອດເດືອນ ສິງຫາ 1969 ພວກເຂົາໄດ້ເຕົ້າໂຮມກຳລັງຫຼາຍກວ່າເກົ່າ ເປີດຂັ້ນຮົບ "ກູ້ກຽດ" ບຸກເຂົ້າທົ່ງໄຫຫີນ ແລະທົ່ວແຂວງຊຽງຂວາງ-ໂດຍໃຊ້ກຳລັງເກືອບ 50 ກອງພັນ ໃນນັ້ນມີທະຫານໄທຫຼາຍກອງພັນ ແລະໃຊ້ກຳລັງ ທາງອາກາດຊ່ວຍໜູນ. ໃນມື້ໜຶ່ງໆ ຢ່າງໜ້ອຍທີ່ສຸດກໍມີເຮືອບິນມາສອດແນມ ຫຼື ຖິ້ມລະເບີດຮອດ 282 ທ່ຽວລຳ ບາງມື້ກໍມີຮອດ 540 ທ່ຽວລຳ ໃນນັ້ນກໍມີເຮືອບິນຍຸດທະສາດ ເບ 52 ຮ່ວມຢູ່ນຳ ຂັ້ນຮົບນີ້ ເປັນຂັ້ນຮົບ ທົດສອບທິດສະດີ "ນິກເຊິນ" ທີ່ວ່າ "ເອົາຄົນອິນດູຈີນ ຂ້າຄົນອິນດູຈີນ, ເອົາຄົນລາວຂ້າຄົນລາວ". ພ້ອມດຽວກັນນັ້ນ ພວກເຂົາກໍໄດ້ໃຊ້ກຳລັງເກືອບ 24 ກອງພັນບຸກໂຈມຕີເມືອງພະລານ ແຂວງສະຫວັນນະເຂດ. ຕໍ່ມາໃນເດືອນ ສິງຫາ 1970 ຈັກກະພັດອາເມລິກາ ໄດ້ເປີດຂັ້ນຮົບຕື່ມອີກເອີ້ນວ່າຂັ້ນຮົບ "ທະນົງກຽດ" ບຸກເຂົ້າທົ່ງໄຫຫີນ ແລະຊຽງຂວາງອີກຄັ້ງໃໝ່ ໂດຍໃຊ້ທະຫານເກືອບ 32 ກອງພັນ ແລະມີບິນຊ່ວຍໜູນເພີ່ມຄັງຫານມາ. ໃນເວລາດຽວກັນ ພວກເຂົາກໍໄດ້ເປີດຂັ້ນຮົບ 870 ອັ້ນໂດຍໃຊ້ກຳລັງ 11 ກອງພັນ ບຸກໂຈມຕີເຂດປາກຊູ, ປາກເຊືອງ ແຂວງຫຼວງພະບາງ. ຮອດວັນທີ 31 ຕຸລາ ກໍໄດ້ໃຊ້ກຳລັງທະຫານ 11 ກອງພັນ ໃນນັ້ນມີທະຫານໄທອີກ 4 ກອງພັນເປີດຂັ້ນຮົບ "ນັງກອນກຽດ" ບຸກເຂົ້າເມືອງພິນ ແຂວງສະຫວັນນະເຂດ ໃນເດືອນກຸມພາ 1971 ກໍໄດ້ເປີດຂັ້ນຮົບ "H Q 333" ບຸກເຂົ້າທົ່ງໄຫຫີນ. ( HQ ແມ່ນຊື່ລັບ ຂອງສູນກາງສືບລາຊະການລັບ ເຊ ອີ ອາ ທີ່ຕັ້ງຢູ່ອຸດອນປະເທດໄທ). ຂັ້ນຮົບນີ້ ແບ່ງອອກເປັນສອງໄລຍະ- ໄລຍະທີໜຶ່ງ ເລີ່ມແຕ່ວັນທີ 2 ກຸມພາ ຮອດວັນທີ 10 ມີນາ ໂດຍໃຊ້ທະຫານໄທ ແລະ ກຳລັງພິເສດຫຼາຍສິບກອງພັນ, ໄລຍະທີສອງ ເລີ່ມແຕ່ວັນທີ 2 ມິຖຸນາ ຫາວັນທີ 22 ທັນວາ ໂດຍໃຊ້ທະຫານ 40 ກອງພັນ ສົມທົບກັບທະຫານໄທອີກ 11 ກອງພັນ.

ໂຫດກ້ຳອັນໃຫຍ່ຫຼວງທີ່ຈັກກະພັດອາເມລິກາກໍ່ຂຶ້ນໃນລາວອີກຄັ້ງໜຶ່ງແມ່ນ "ຂັ້ນຮົບລາມເຊີນ 719" ໃນວັນທີ 31 ມັງກອນ 1971 ບຸກໂຈມຕີສາຍທາງເລກ 9. ໃນຂັ້ນຮົບນີ້ ພວກເຂົາໄດ້ໃຊ້ກຳລັງເຄື່ອນທີ່ຍຸດທະສາດ ສົມທົບລະຫວ່າງທະຫານຂຸນໄຊງ່ອນ ແລະທະຫານອາເມລິກາ ເອງມີທັງໝົດ 45 ພັນຄົນ. ໃນຈຳນວນນີ້ 20 ພັນຄົນແມ່ນໃຊ້ສູ້ຮົບຢູ່ລາວໂດຍກົງ ສ່ວນ 25 ພັນຄົນນັ້ນເປັນກຳລັງໜູນຢູ່ຫວຽດນາມ. ຂັ້ນຮົບນີ້ໄດ້ໃຊ້ເຮືອບິນ ເບ 52 100 ລຳ ເອລິກອບເຕີ 800 ລຳ ແລະເຮືອບິນສູ້ຮົບສອດແນມ 1.500 ລຳ, ປືນໃຫຍ່ ລົດຫຸ້ມເກາະ ແລະລົດກົງຈັກຈຳນວນຫຼວງຫຼາຍ. ເພື່ອສົມທົບກັບທະຫານຂຸນໄຊງ່ອນ ແລະທະຫານອາເມລິກາທີ່ເຄື່ອນພົນມາທາງຫວຽດນາມ

ນັ້ນ, ທະຫານປະຕິການລາວພາກ 3 ແລະພາກ 4 ສົມທົບກັບທະຫານໄທ ແລະກຳລັງພິເສດຫຼາຍກອງພັນ ເປີດບັ້ນຮົບຂຶ້ນ 2 ຈຸດ. ຈຸດໜຶ່ງແຕ່ເຊໂນ ໄປຕາມທາງເລກ 9 ຈຸດທີສອງຈາກປາກເຊ ໄປຫາດົງບໍລະເວັນ.

ໃນລະຫວ່າງ ເດືອນ ມີນາ 1972 ສັດຕູໄດ້ໃຊ້ທະຫານສອງກົມເຄື່ອນທີ່ເປີດບັ້ນຮົບ"ສົມໄຊ" ຂຶ້ນທີ່ເຂດດົງບໍລະເວນ ແລະອີກສາມກົມ ເປີດບັ້ນຮົບ "ຟ້າງຸ່ມ" ເຂົ້າເຂດສາລະວັນ. ເມື່ອວັນທີ 15 ສິງຫາ 1972 ຈັກກະພັດອາເມລິກາ ໄດ້ໃຊ້ກຳລັງພິເສດ 46 ກອງພັນ ໃນນັ້ນມີທະຫານໄທອີກ 10 ກອງພັນ ເປີດບັ້ນຮົບເຂົ້າທົ່ງໄຫຫີນ, ຊຽງຂວາງ, ປີກໜຶ່ງຕີເຂົ້າທາງບ້ານບານ, ເມືອງຄຳ. ບັ້ນຮົບນີ້ໃຫ້ຊື່ວ່າ ບັ້ນຮົບ "ຕູລາ". ໃນວັນທີ 27 ສິງຫາ 1972 ກໍໄດ້ເປີດບັ້ນຮົບຢູ່ຄົງເຊໂດນ ເອີ້ນວ່າບັ້ນຮົບ "ສິງດຳ" ບັ້ນຮົບນີ້ໄດ້ໃຊ້ທະຫານເກີນ 7.000 ຄົນ. ໃນວັນທີ 30 ຕຸລາ 1972 ພວກມັນໃຊ້ທະຫານ 30 ກອງພັນເປີດບັ້ນຮົບ "ປະສານຕຸລາ" ບຸກເຂົ້າແຂວງສາລະວັນ. ໃນວັນທີ 17 ພະຈິກ ປີດຽວກັນ ກໍໄດ້ເປີດບັ້ນຮົບ "ແດນດົມ" ທີ່ແຂວງຫຼວງພະບາງ. ໂດຍໃຊ້ທະຫານ 5.000 ຄົນ.

ໃນແຕ່ລະບັ້ນຮົບດັ່ງກ່າວ, ກຳລັງຂອງສັດຕູກໍຖືກດັບສູນເປັນຈຳນວນຫຼວງຫຼາຍ, ກົງກັນຂ້າມກຳລັງຝ່າຍປະຕິວັດກໍນັບມື້ນັບເຕີບໃຫຍ່ຂະຫຍາຍຕົວ ແລະຂະຫຍາຍເຂດປົດປ່ອຍອອກໄປໄດ້ຫຼາຍບ່ອນ ໃນການປົດປ່ອຍເມືອງສຸ້ຍເທື່ອທີ 1 ແຕ່ວັນທີ 24 – 30 ຕຸລາ 1969 ກອງທັບ ແລະປະຊາຊົນໄດ້ດັບສູນສັດຕູ 1.200 ຄົນ, ເທື່ອທີສອງ ແຕ່ວັນທີ 23 ມັງກອນ 1971 ໄດ້ດັບສູນສັດຕູ1055 ຄົນ. ແຕ່ວັນທີ 30 ທັນວາ 1971 ຫາວັນທີ 10 ມັງກອນ 1972 ໄດ້ປົດປ່ອຍເອົາຊຳທອງແລະລ້ອງແຈ້ງ ໂດຍໄດ້ດັບສູນສັດຕູ 1.000 ກວ່າຄົນ. ອັນເຮັດໃຫ້ກຳລັງພິເສດຂອງວັງປາວ ເຊິ່ງມີຈຳນວນພົນເກີນ 3 ພັນຄົນນັ້ນ ອ່ອນເພຍເປ້ຍລ່ອຍລົງ ແລະບໍ່ສາມາດຮັບໃຊ້ແຜນການຮຸກຮານຂອງຈັກກະພັດອາເມລິກາໄດ້ອີກແລ້ວ.

ຢູ່ພາກກາງ ແລະພາກໃຕ້ ກອງທັບ ແລະປະຊາຊົນ ໄດ້ບຸກໂຈມຕີທີ່ໝັ້ນຂອງສັດຕູໄດ້ຫຼາຍແຫ່ງ ເປັນຕົ້ນແມ່ນໃນວັນທີ 26 ເດືອນ ພະຈິກ 1968 ຫາວັນທີ 3 ເດືອນ ເມສາ 1969 ໄດ້ປົດປ່ອຍເມືອງທ່າແຕງ, ດັບສູນສັດຕູໄດ້ 1.022 ຄົນ. ແຕ່ວັນທີ 28 ເດືອນ ເມສາ ຮອດວັນທີ30 ພຶດສະພາ 1970 ໄດ້ປົດປ່ອຍທົ່ວແຂວງອັດຕະປື, ດັບສູນສັດຕູໄດ້ 956 ຄົນ ແລະໃນວັນທີ 8 ເດືອນ ມີນາ ຫາວັນທີ 10 ມີນາ 1971 ດົງບໍລະເວນ ໄດ້ຮັບການປົດປ່ອຍ. ນອກຈາກຈະປົດປ່ອຍດິນແດນໄດ້ຢ່າງກວ້າງຂວາງແລ້ວ ກອງທັບແລະປະຊາຊົນຍັງໄດ້ທັບມ້າງທຸກບັ້ນຮົບ ທີ່ສັດຕູບຸກໂຈມຕີ ແລະບຸກຍຶດ, ເປັນຕົ້ນຢູ່ແຂວງຊຽງຂວາງ, ໃນໄລຍະ 4 ປີແຕ່ຕົ້ນປີ 1969 ຫາ1972

ກອງທັບແລະປະຊາຊົນ ໄດ້ຕ່າວໂຈມຕີສັດຕູໃນ 5 ຂັ້ນຮົບໃຫຍ່ດັບສູນສັດຕູ ເກືອບພັນພື້ນຄົນ, ຍິງຍົນຕົກ 144 ລຳ. 3 ຂັ້ນຮົບໃຫຍ່ທີ່ແຂວງສະຫວັນນະເຂດ ຄືຂັ້ນຮົບທີ່ເມືອງພະລານ, ກັນຍາກຽດ, ລານເຊີນ 719 ກອງທັບແລະປະຊາຊົນ ໄດ້ດັບສູນສັດຕູ 18.300 ຄົນ, ຍິງຍົນຕົກແລະທຳລາຍ 508 ລຳ. ໃນ 4 ຂັ້ນຮົບໃຫຍ່ທາງພາກໃຕ້ ດັບສູນສັດຕູໄດ້ 4.800 ຄົນ ຍິງຍົນຕົກ 44 ລຳ. ໃນສອງຂັ້ນຮົບຢູ່ແຂວງຫຼວງພະບາງ, ດັບສູນສັດຕູ 2.200 ຄົນ ຍິງຍົນຕົກ 2 ລຳ. ມາເຖິງປີ 1972 ກຳລັງປະກອບອາວຸດ ປະຕິການທຸກກົມກອງໃນລາວກໍ່ກໍໂຈມຕີຢ່າງໜັກ, ອ່ອນເພຍ ແລະບໍ່ສາມາດຈະບຸກໂຈມຕີກຳລັງປະຕິວັດໄດ້ອີກ.

ເລີ່ມແຕ່ຈັກກະພັດອາເມລິກາ ເປີດສົງຄາມໃຫຍ່ ແຕ່ປີ 1964 ຫາ 1972 ພວກເຂົາໄດ້ໃຊ້ເຮືອບິນທຸກຊະນິດມາກົ້ມລະເບີດກະໜ່ຳແຜ່ນດິນລາວ ໂດຍສະເພາະແມ່ນເຂດປົດປ່ອຍ ເຊິ່ງກວມເນື້ອທີ່ 1/2 ຂອງທົ່ວປະເທດລວມເປັນ 3 ລ້ານກວ່າໂຕນ ຖ້າສະເລ່ຍປັນໃສ່ແຕ່ລະຫົວຄົນ ໃນເຂດປົດປ່ອຍ ຈະໄດ້ຜູ້ລະ 3 ໂຕນ ອັນເຮັດໃຫ້ເຮືອນຊານບ້ານຊ່ອງ, ສັດສາວາສິ່ງ, ໄຮ່ນາຮົ້ວສວນຂອງປະຊາຊົນ ແລະເສັ້ນທາງຄົມມະນາຄົມ ຕະຫຼອດເຖິງຊີວິດຂອງປະຊາຊົນກໍ່ເສຍຫາຍ - ຢ່າງຫຼວງຫຼາຍ. ນອກຈາກລະເບີດແລ້ວ ພວກເຂົາຍັງໃຊ້ຢາພິດເຄມີຫວ່ານລົງເຂດປົດປ່ອຍອີກ - ເພື່ອທຳລາຍຊີວິດຄົນຊີ ແລະຊັບພະຍາກອນທຳມະຊາດໃນສະເພາະພືດແລະຍາວມານ. ເຖິງຢ່າງໃດກໍ່ຕາມ, ຍ້ອນມີການນຳອັນກົກຕ້ອງຂອງພັກ, ການກະທຳອັນໂຫດຮ້າຍປ່າເຖື່ອນ ແລະ ໄຮ້ມະນຸດສະທຳຂອງອາເມລິກາກໍ່ບໍ່ສາມາດເຮັດໃຫ້ຂະບວນຕໍ່ສູ້ຂອງປະຊາຊົນເຮົາລົດນ້ອຍຖອຍລົງໄດ້ . ມາຮອດນີ້ ຄວາມຫວັງຂອງອາເມລິກາ ທີ່ຈະເອົາຊະນະສົງຄາມນັບວັນຈະສິ້ນສຸດລົງ.

## 3. ການເຊັນສັນຍາວຽງຈັນ 1973 ແລະ ການຍຶດອຳນາດໃນປີ 1975.

ເຖິງວ່າກຳລັງປະຕິວັດ ຈະຢູ່ທ່າມີໄຊທາງດ້ານການທະຫານດັ່ງກ່າວມາແລ້ວກໍ່ຕາມ, ແຕ່ຍ້ອນຄວາມປາຖະໜາຢາກມີຄວາມກົກຕ້ອງປອງດອງຊາດ ສັນຕິພາບໃນລາວສູນກາງແນວລາວຮັກຊາດ- ໄດ້ປະກາດກະແຫຼງການ 5 ຂໍ້ກ່ຽວກັບການແກ້ໄຂບັນຫາລາວໂດຍສັນຕິ ໃນວັນທີ 6 ມີນາ 1970 ໃນທ້າຍເດືອນ ກໍລະກົດ 1970 ສະເດັດເຈົ້າສຸພານຸວົງ ປະທານຄະນະກຳມະການສູນກາງ ແນວລາວຮັກຊາດ ໄດ້ແຕ່ງຕັ້ງເຈົ້າສຸກ ວົງສັກ ເປັນຜູ້ຕາງໜ້າພິເສດ ເດີນທາງມາວຽງຈັນ ເພື່ອພົບປະເຈລະຈາກັບ ເຈົ້າ ສຸວັນນະພູມມາ.

ຜ່ານການພົບປະເຈລະຈາກັນ ທັງສອງຝ່າຍເຫັນດີເອົາຄັງໄຂ ເປັນບ່ອນພົບປະລະຫວ່າງ ຜູ້ຕາງໜ້າທີ່ມີອຳນາດເຕັມຂອງທັງສອງຝ່າຍ. ໃນວັນທີ 30 ສິງຫາ 1970. ສະເດັດປະທານ ສູນ

ກາງແນວລາວຮັກຊາດ ໄດ້ແຕ່ງຕັ້ງ ທ່ານ ພູມ ສີປະເສີດໃຫ້ເປັນຜູ້ຕາງໜ້າທີ່ມີອຳນາດເຕັມ ເພື່ອດຳເນີນເຈລະຈາກັບຜູ້ຕາງໜ້າທີ່ມີອຳນາດເຕັມຂອງຝ່າຍວຽງຈັນ. ຍ້ອນເຈົ້າ ສຸວັນນະພູມາ ເຊິ່ງເປັນນາຍົກລັດຖະມົນຕີຂອງຝ່າຍວຽງຈັນ ໃນເວລານັ້ນ ຖືກຈັກກະພັດອາເມລິກາບີບບັງຄັບ, ການພົບປະເຈລະຈາກັນລະຫວ່າງສອງຝ່າຍຈຶ່ງຢຸດເຊົາໄປ. ຕໍ່ມາ ວັນທີ 17 ຕຸລາ 1972 ຈຶ່ງໄດ້ເປີດຂຶ້ນອີກທີ່ວຽງຈັນລະຫວ່າງ ຜູ້ຕາງໜ້າທີ່ມີອຳນາດເຕັມຂອງທັງສອງຝ່າຍ. ໃນການເຈລະຈາກັນທຸກຄັ້ງ ຄະນະຜູ້ແທນຂອງຝ່າຍກຳລັງຮັກຊາດ ໄດ້ເຜີຍແປເລ່ກົນ ແລະເຈດຈຳນົງຂອງ ຈັກກະພັດອາເມລິກາ ແລະລູກມືພ້ອມກັນນັ້ນ ກໍໄດ້ຊີ້ແຈງອະທິບາຍແນວທາງນະໂຍບາຍຂອງແນວລາວຮັກຊາດ. ໃນວັນທີ 27 ເດືອນ ຕຸລາ 1972 ທ່ານ ພູມີ ວົງວິຈິດ ທີ່ປຶກສາພິເສດຂອງເຈົ້າ ສຸພານຸວົງໄດ້ລົງມາວຽງຈັນ ເພື່ອເຈລະຈາ ແລະໂອ້ລົມກັບເຈົ້າ ສຸວັນນະພູມາ ແລະບຸກຄົນສຳຄັນອື່ນໆທີ່ວຽງຈັນ. ຜ່ານການເຄື່ອນໄຫວຂອງທ່ານໃນໄລຍະໜຶ່ງ ທ່ານກໍກັບຄືນໄປຊຳເໜືອ. ຕະຫຼອດໄລຍະການເຈລະຈາທຸກຄັ້ງ, ເຈດຕະນາດີຂອງກຳລັງຮັກຊາດທີ່ຫວັງຢາກສ້າງຄວາມກົກຕ້ອງ ປອງດອງຊາດ ແລະສັນຕິພາບຢູ່ລາວນັ້ນ ໄດ້ຖືກປະຕິເສດຈາກລັດຖະບານວຽງຈັນ.

ເມື່ອຈັກກະພັດອາເມລິກາປະລາໄຊຢ່າງໜັກໜ່ວງ ທາງດ້ານການທະຫານຢູ່ອິນດູຈີນ ແລະໂດດດ່ຽວທາງດ້ານການເມືອງ ຈຶ່ງໄດ້ຍອມເຊັນສັນຍາ ປາລີ ໃນວັນທີ 27 ມັງກອນ 1973. ກ່ຽວກັບຫວຽດນາມ. ຕໍ່ຈາກນັ້ນບໍ່ດົນ, ທ່ານ ສະປີໂລອັກນິວ ຮອງປະທານາທິບໍດີອາເມລິກາ ໄດ້ເດີນທາງມາວຽງຈັນ ເພື່ອສັ່ງໃຫ້ລູກນ້ອງຂອງມັນຢູ່ລາວ ຂອນເຊັນສັນຍາກັບຝ່າຍກຳລັງຮັກຊາດ. ໃນໄລຍະດຽວກັນ ທ່ານ ພູມີ ວົງວິຈິດ ກໍໄດ້ເດີນທາງມາວຽງຈັນອີກ ເພື່ອສືບຕໍ່ເຈລະຈາ.ຜ່ານການເຈລະຈາກັນໃນໄລຍະໜຶ່ງ ກໍໄດ້ມີການຕົກລົງເຊັນສັນຍາສະຫງົບເສິກ ໃນວັນທີ 21 ກຸມພາ1973. ການເຊັນສັນຍາຄັ້ງນັ້ນ ແມ່ນໄຊຊະນະອັນຍິ່ງໃຫຍ່ຂອງປະຊາຊົນລາວ. ມັນແມ່ນໝາກຜົນແຫ່ງການຕໍ່ສູ້ອັນທໍລະຫົດອົດທົນ ແລະການເສຍສະຫຼະຂອງປະຊາຊົນລາວ. ເມື່ອມີການເຊັນສັນຍາແລ້ວ ປະຊາຊົນລາວທຸກທົ່ວໜ້າ ໄດ້ມີຄວາມເບີກບານມ່ວນຊື່ນ. ສຳລັບຈັກກະພັດອາເມລິກາ ແລະກຸ່ມປະຕິການຂວາຈັດ ແລ້ວສັນຍານີ້ ແມ່ນການປະລາໄຊຢ່າງອັບອາຍຂາຍໜ້າ. ດັ່ງນັ້ນ ເຖິງຈະມີສັນຍາແລ້ວກໍຕາມ ພວກເຂົາກໍບໍ່ໄດ້ລົດລະໃນການມ້າງເພທຳລາຍສັນນັ້ນ. ເປັນຕົ້ນແມ່ນກີດຂວາງ ການເຊັນອະນຸສັນຍາ. ພວກເຂົາໄດ້ສົມຮູ້ຮ່ວມຄິດກັນເຮັດລັດຖະປະຫານໃນວັນທີ 20 ສິງຫາ 1973 ເພື່ອໂຄ່ນລົ້ມເຈົ້າສຸວັນນະພູມາ, ແນໃສ່ລົບລ້າງສັນຍາທີ່ໄດ້ເຊັນກັນ. ແຕ່ຍ້ອນຄວາມຮູ້ສຶກ ຕື່ນຕົວຂອງນາຍ ແລະພົນທະຫານຝ່າຍວຽງຈັນ, ແຜນການເຮັດລັດຖະປະຫານຈຶ່ງປະລາໄຊລົງ. ຈາກນັ້ນ ການເຈລະຈາຈຶ່ງດຳເນີນຕໍ່ໄປຮອດ ວັນທີ 14 ກັນຍາ 1973. ອະນຸສັນຍາກໍໄດ້ເຊັນກັນ.

ເມື່ອສັນຍາ ແລະອະນຸສັນຍາໄດ້ເຊັນກັນແລ້ວ, ຝ່າຍກຳລັງຮັກຊາດກໍ່ຫວັງ ແລະ ຊຸກດັນໃຫ້ຝ່າຍວຽງຈັນປະຕິບັດສັນຍາຢ່າງເຂັ້ມງວດ. ດັ່ງນັ້ນ ໃນວັນທີ 3 ເດືອນ ເມສາ 1974 ເຈົ້າສຸພານຸວົງ ໄດ້ເດີນທາງຈາກເມືອງວຽງໄຊ ມາເຖິງວຽງຈັນ ເພື່ອກຽມຈັດຕັ້ງລັດຖະບານ ປະສົມແລະຄະນະມົນຕີປະສົມການເມືອງແຫ່ງຊາດ. ເມື່ອສະເດັດມາເຖິງສະໜາມບິນວັດໄຕ ກໍໄດ້ມີປະຊາຊົນຊາວນະຄອນຫຼວງຫຼາຍໝື່ນຄົນອອກໄປຕ້ອນຮັບຢ່າງເບີກບານມ່ວນຊື່ນ. ໃນວັນທີ 5 ເມສາ ລັດຖະບານປະສົມຊົ່ວຄາວ ໂດຍແມ່ນ ເຈົ້າສຸວັນນະພູມາ ເປັນນາຍົກໄດ້ຮັບການສ້າງຕັ້ງຂຶ້ນ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ ໂດຍແມ່ນ ເຈົ້າສຸພານຸວົງ ເປັນປະທານ ກໍໄດ້ຮັບການສ້າງຕັ້ງຂຶ້ນ.

ບັນດາມາດຕາຂອງສັນຍາ ແລະອະນຸສັນຍາໄດ້ເປັນເງື່ອນໄຂຈຳກັດ ອຳນາດທະເດັດການ – ຂອງພວກປະຕິການຂວາຈັດ ແລະເປັນບ່ອນອີງໃຫ້ປະຊາຊົນໃນເຂດຄວບຄຸມຂອງຝ່າຍວຽງຈັນມີສິດເສລີພາບໂດຍສະເພາະ ໃນສອງນະຄອນເປັນກາງ ຫຼວງພະບາງ ວຽງຈັນ. ສະນັ້ນຂະບວນການຕໍ່ສູ້ຂອງປະຊາຊົນ ໄດ້ເປັນກະແສຟອງຟົດເຟືອນໃນທົ່ວທຸກເຂດ.

ໃນວັນທີ 24 ທັນວາ 1974 ປະຊາຊົນ ແລະກອງທະຫານຝ່າຍຂວາກອງໜຶ່ງ ທີ່ເມືອງຫ້ວຍຊາຍໄດ້ລຸກຮືຂຶ້ນປະກາດຕົນຂຶ້ນກັບລັດຖະບານປະສົມໂດຍກົງ. ຕໍ່ມາໃນວັນທີ 6 ມັງກອນ 1975, ປະຊາຊົນເຂດໜອງບົກ ແຂວງຄຳມ່ວນ ໄດ້ລຸກຂຶ້ນຕໍ່ສູ້ເພື່ອທວງເອົາສິດ ແຕ່ກໍ່ຖືກພວກປະຕິການພາກ 4 ປາບປາມຢ່າງຮຸນແຮງ ອັນໄດ້ເຮັດໃຫ້ພໍ່ເຖົ້າຂຽນ ຖືກຂ້າຕາຍ. ເຖິງຢ່າງໃດກໍຕາມ ປະຊາຊົນໜອງບົກກໍ່ບໍ່ໄດ້ທໍ້ຖອຍ ແລະດຳເນີນການຕໍ່ສູ້ຈົນໄດ້ຮັບໄຊຊະນະ. ຫຼັງຈາກນັ້ນ ຂະບວນລຸກຮືຂຶ້ນ ແລະການໂຮມຊຸມນຸມ ໄດ້ລະເບີດຂຶ້ນຢ່າງເນື່ອງນິດລຽນຕິດ. ສະພາບການດັ່ງກ່າວ ບວກກັບໄຊຊະນະອັນສົມບູນຂອງປະຊາຊົນກຳປູເຈຍ ໃນວັນທີ 17 ເມສາ 1975 ແລະໄຊຊະນະຂອງປະຊາຊົນຫວຽດນາມໃນການປົດປ່ອຍພາກໃຕ້ ໃນວັນທີ 30 ເມສາ 1975 ໄດ້ສ້າງກາລະໂອກາດ ອັນເໝາະສົມແກ່ການຍຶດອຳນາດຂອງປະຊາຊົນລາວ.

ດັ່ງນັ້ນ ສູນກາງພັກ ໄດ້ວາງມະຕິກ່ຽວກັບການຍຶດອຳນາດອອກ ໂດຍໃຊ້ສາມຫາດຄ້ອນຍຸດທະສາດ.

1. ການລຸກຮືຂຶ້ນຂອງປະຊາຊົນ ໃນເຂດປົກຄອງຂອງຝ່າຍວຽງຈັນ.
2. ການລຸກຮືຂອງກອງທະຫານຝ່າຍຂວາ ທີ່ແຍກຕົວອອກຈາກອັນທີ່ເອີ້ນວ່າກອງທັບແຫ່ງຊາດ.
3. ໃຊ້ທະຫານຂອງກຳລັງທັບປົດປ່ອຍປະຊາຊົນລາວ ໜູນພັນ.

ໂດຍປະຕິບັດຕາມມະຕິຂອງສູນກາງພັກດັ່ງກ່າວ ປະຊາຊົນລາວບັນດາຊົນຊາດໄດ້ສາມັກຄີເປັນ

ຈິດພົ້ນໃຈດອງ ລຸກຮື້ຢຶດອຳນາດ, ທັບມ້າງກົງຈັກປົກຄອງເກົ່າ ແລະສ້າງຕັ້ງອຳນາດການປົກຄອງໃໝ່ຂອງຕົນເທື່ອລະຂັ້ນ ແຕ່ຂັ້ນພື້ນການຮອດຂັ້ນສູນກາງ. ຮອດວັນທີ 23 ສິງຫາ 1975 ພິທີຢຶດອຳນາດຄັ້ງສຸດທ້າຍ ໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ທ່າມກາງການຊຸມນຸມຊົນ 300.000ກວ່າຄົນ ພາຍຄວາມວ່າ ອຳນາດການປົກຄອງປະຕິການ ໄດ້ຖືກໂຄ່ນລົ້ມຢ່າງສິ້ນເຊີງແລະຕະຫຼອດການ.

ຮອດວັນທີ 1 ທັນວາ 1975 ບັນດາຜູ້ຕາງໜ້າຂອງຜູ້ແທນປະຊາຊົນທຸກເຂດແຂວງ ໃນທົ່ວປະເທດໄດ້ໄຂກອງປະຊຸມຂຶ້ນທີ່ນະຄອນຫຼວງວຽງຈັນ. ກອງປະຊຸມໄດ້ຮັບຮອງໃບລາອອກລາຊະບັນລັງຂອງເຈົ້າຊີວິດ ສີສະຫວ່າງວັດທະນາ, ປະກາດຍຸບລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ, ລົງມະຕິຮັບຮອງເອົາທຸງຊາດ ເນື້ອຮ້ອງເພງຊາດໃໝ່, ພາສາຊາດ ແລະປະກາດເປັນປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແຕ່ງຕັ້ງ—ເຈົ້າສຸພານຸວົງ ເປັນປະທານປະເທດ, ແຕ່ງຕັ້ງລັດຖະບານ ໂດຍແມ່ນ ທ່ານ ໄກສອນ ພົມວິຫານ ເປັນນາຍົກລັດຖະມົນຕີ, ແຕ່ງຕັ້ງສະພາປະຊາຊົນສູງສຸດ ໂດຍແມ່ນ ເຈົ້າສຸພານຸວົງ ເປັນປະທານ ແລະຜ່ານມະຕິອື່ນໆຈຳນວນໜຶ່ງອີກ.

ຜົນສຳເລັດຂອງກອງປະຊຸມດັ່ງກ່າວ ເປັນຂີດໝາຍປະຫວັດສາດ ເຊິ່ງເຮັດໃຫ້ຊາດລາວຫຼຸດພົ້ນຈາກລະບອບສັກດີນາ ແລະເມືອງຂຶ້ນກາຍເປັນປະເທດເອກະລາດ ແລະປະຊາທິປະໄຕຢ່າງແທ້ຈິງ.

## ຄຳຖາມເພື່ອຄົ້ນຄວ້າ.

1. ກົນອຸບາຍຂອງຈັກກະພັດອາເມລິກາ ແລະລູກມື ແຕ່ປີ 1962 ມາມີແນວໃດ ?
2. ຈົ່ງເວົ້າເຖິງການຕໍ່ສູ້ຂອງປະຊາຊົນລາວ ຕ້ານການຮຸກຮານຄັ້ງໃຫຍ່ຂອງຈັກກະພັດອາເມລິກາ.
3. ຈົ່ງເວົ້າເຖິງສັນຍາວຽງຈັນ ແລະຜົນສະທ້ອນຂອງມັນ.

ພິມທີ່ໂຮງພິມ
ກະຊວງສຶກສາ ກິລາ ແລະທຳມະການ
ພິມຄັ້ງທີໜຶ່ງ ຈຳນວນ ໑໐ .໐໐໐ ຫົວ
ລາຄາ ໑໐ ກີບ